

# ຄຳແນະນຳພາກພື້ນອາຊຽນ ວ່າດ້ວຍ “ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະເດັກ: ການສະໜອງການບໍລິການທາງສັງຄົມທີ່ມີຄຸນນະພາບ ໃຫ້ແກ່ຜູ້ທີ່ມີຄວາມສ່ຽງ ຫຼືໄດ້ຮັບຜົນກະທົບ ຈາກຄວາມຮຸນແຮງ”

asean

one vision
one identity
one community

# ຄຳແນະນຳພາກພື້ນອາຊຽນ ວ່າດ້ວຍ
# “ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະເດັກ: ການສະໜອງການບໍລິການທາງສັງຄົມທີ່ມີຄຸນນະພາບ ໃຫ້ແກ່ຜູ້ທີ່ມີຄວາມສ່ຽງ ຫຼືໄດ້ຮັບຜົນກະທົບຈາກຄວາມຮຸນແຮງ”

ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ (ອາຊຽນ) ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 8 ສິງຫາ 1967.

ບັນດາປະເທດສະມາຊິກໄດ້ແກ່: ບຣູໄນ ດາຣູຊາລາມ, ກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ມຽນມາ, ຟີລິບປິນ, ສິງກະໂປ, ໄທ ແລະຫວຽດນາມ.

ກອງເລຂາອາຊຽນຕັ້ງຢູ່ທີ່ ນະຄອນຫຼວງຈາການຕາ ປະເທດອິນໂດເນເຊຍ.

ສອບຖາມເພີ່ມຕື່ມ, ຕິດຕໍ່:
ກອງເລຂາອາຊຽນ
ພະແນກພົວພັນຊຸມຊົນ (CRD)
70A ຈາລັນ ຊີຊິງກາມັງກາຣາຈາ (Jalan Sisingamangaraja)
ນະຄອນຫຼວງຈາການຕາ 12100, ອິນໂດເນເຊຍ
ໂທລະສັບ: (62 21) 724-3372, 726-2991
ແຟັກ: (62 21) 739-8234, 724-3504
ອີເມວ: public@asean.org

ຂໍ້ມູນການຈັດພິມ:
*ຄຳແນະນຳພາກພື້ນອາຊຽນ ວ່າດ້ວຍ "ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກ: ການໃຫ້ບໍລິການວຽກງານສັງຄົມ ທີ່ມີຄຸນນະພາບໃຫ້ແກ່ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ"*. ນະຄອນຫຼວງຈາການຕາ: ກອງເລຂາອາຊຽນ, ເດືອນພະຈິກ 2023.

362.88
1. ອາຊຽນ – ແມ່ຍິງ ແລະ ເດັກນ້ອຍ – ພະນັກງານສັງຄົມສົງເຄາະ
2. ຄວາມຮຸນແຮງ - ພະນັກງານບໍລິການສັງຄົມ - ຄຳແນະນຳ

**ອາຊຽນ: ປະຊາຄົມແຫ່ງໂອກາດສຳລັບທຸກຄົນ**

**ທີ່ມາຂອງຮູບ:**
ໜ້າປົກ: UN Women/Satu Bumi Jaya

ຂໍ້ຄວາມໃນເອກະສານນີ້ ອາດຈະຖືກອ້າງອີງ ຫຼືພິມຄືນໃໝ່ໄດ້ຢ່າງເສລີ, ໂດຍມີເງື່ອນໄຂວ່າ ຕ້ອງໃຫ້ການຮັບຮູ້ຢ່າງຖືກຕ້ອງ ແລະ ສົ່ງສຳເນົາເນື້ອໃນເອກະສານທີ່ພິມອອກໃໝ່ ໄປໃຫ້ພະແນກການພົວພັນຊຸມຊົນ (CRD) ຂອງກອງເລຂາອາຊຽນ, ນະຄອນຫຼວງຈາການຕາ.

ຂໍ້ມູນທົ່ວໄປກ່ຽວກັບອາຊຽນຈະມີຢູ່ໃນ ເວັບໄຊ້ຂອງອາຊຽນ: www.asean.org

ການພິມເຜີຍແຜ່ນີ້ແມ່ນເປັນໄປໄດ້ໂດຍຜ່ານການສະໜັບສະໜູນທຶນ ຈາກຫ້ອງການພາກພື້ນອາຊີຕາເວັນອອກ ແລະປາຊີຟິກ ຂອງອົງການ UNICEF, ອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ (UNFPA), ແລະອົງການ UN Women.

© ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ) 2023.
ສະຫງວນລິຂະສິດ.

# ສາລະບານ


| | |
|---|---|
| **ຄຳນຳ** | **iv** |
| **ສະແດງຄວາມຂອບໃຈ** | **v** |
| **ຕົວອັກສອນຫຍໍ້** | **vi** |
| **1. ບົດແນະນຳ** | **1** |
| **2. ຄວາມເປັນມາ** | **2** |
| **3. ນິຍາມ** | **3** |
| **4. ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກ ໃນພາກພື້ນອາຊຽນ** | **6** |
| **5. ການປະຕິບັດວຽກງານສັງຄົມສົງເຄາະທີ່ມີຄຸນນະພາບ** | **9** |
| 5.1 ແນວທາງ ແລະຫຼັກການສຳຄັນ ຂອງການປະຕິບັດວຽກງານສັງຄົມສົງເຄາະ ກັບແມ່ຍິງ ແລະເດັກນ້ອຍ ທີ່ປະເຊີນກັບຄວາມຮຸນແຮງ | 9 |
| 5.2 ປະເພດຫຼັກ ຂອງການປະຕິບັດວຽກງານສັງຄົມສົງເຄາະ | 11 |
| 5.2.1 ວຽກງານສັງຄົມສົງເຄາະດ້ານການສົ່ງເສີມ | 11 |
| 5.2.2 ວຽກງານສັງຄົມສົງເຄາະດ້ານການປ້ອງກັນ | 11 |
| 5.2.3 ວຽກງານສັງຄົມສົງເຄາະດ້ານການແກ້ໄຂ | 12 |
| 5.2.4 ວຽກງານສັງຄົມສົງເຄາະ ດ້ານການຟື້ນຟູ | 13 |
| 5.3 ການສ້າງຄວາມດຸ່ນດ່ຽງ ລະຫວ່າງການປະສານກົມກຽວ ແລະ ຄວາມຊ່ຽວຊານໃນການບໍລິການສັງຄົມສົງເຄາະ ໃນຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ | 13 |
| 5.4 ຂໍ້ຄວນພິຈາລະນາທີ່ສຳຄັນ ໃນການອອກແບບ ແລະການສົ່ງມອບການບໍລິການດ້ານສັງຄົມສົງເຄາະ ກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ | 16 |
| **6. ການວາງແຜນກ່ຽວກັບ ພະນັກງານ ແລະການບໍລິການສັງຄົມສົງເຄາະ ສຳລັບ ຄວາມຮຸນແຮງຕໍ່ເດັກ ແລະຄວາມຮຸນແຮງຕໍ່ແມ່ຍິງ** | **21** |
| **7. ການພັດທະນາຄວາມຮູ້ ແລະທັກສະ, ແລະສ້າງຄວາມເປັນມືອາຊີບໃຫ້ແກ່ພະນັກງານສັງຄົມສົງເຄາະ ສຳລັບການບໍລິການ ແກ່ຜູ້ທີ່ຖືກໃຊ້ຄວາມຮຸນແຮງຕໍ່ເດັກ ແລະຄວາມຮຸນແຮງຕໍ່ແມ່ຍິງ** | **24** |
| **8. ສະໜັບສະໜູນພະນັກງານສັງຄົມສົງເຄາະ ສຳລັບການບໍລິການ ກ່ຽວກັບ ຄວາມຮຸນແຮງຕໍ່ເດັກ ແລະຄວາມຮຸນແຮງຕໍ່ແມ່ຍິງ** | **25** |
| ເອກະສານຊ້ອນທ້າຍ 1: ຄຳໝັ້ນສັນຍາລະດັບພາກພື້ນ ແລະລະດັບຊາດກ່ຽວກັບສິດທິມະນຸດ, ສິດທິເດັກ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ແລະສິດທິໃນການປົກປ້ອງທາງສັງຄົມ. | 26 |
| ເອກະສານຊ້ອນທ້າຍ 2: ຂອບວຽກລະດັບໂລກ ທີ່ກ່ຽວຂ້ອງກັບການປ້ອງກັນ ແລະການແກ້ໄຂຕໍ່ຄວາມຮຸນແຮງ ຕໍ່ແມ່ຍິງ ແລະເດັກນ້ອຍ | 28 |
| ເອກະສານຊ້ອນທ້າຍ 3: ນິຍາມຂອງພະນັກງານດ້ານການບໍລິການສັງຄົມ | 28 |
| ເອກະສານຊ້ອນທ້າຍ 4: ການສ້າງແຜນໃນການປະຕິບັດ, ນະໂຍບາຍ ແລະເຄື່ອງມືທີ່ພົ້ນເດັ່ນ ໃນການບໍລິການ ທີ່ຈຳເປັນຕໍ່ຜູ້ຖືກເຄາະຮ້າຍຈາກ ຄວາມຮຸນແຮງຕໍ່ເດັກ - ຄວາມຮຸນແຮງຕໍ່ແມ່ຍິງ | 31 |

# ຄຳນຳ

"ຄຳແນະນຳພາກພື້ນອາຊຽນ ກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະເດັກ: ການສະໜອງບໍລິການດ້ານສັງຄົມສົງເຄາະທີ່ມີຄຸນນະພາບ ໃຫ້ຜູ້ທີ່ປະສົບເຄາະຮ້າຍຈາກຄວາມຮຸນແຮງ" ຖືເປັນຂີດໝາຍສຳຄັນເພື່ອແນໃສ່ເພີ່ມທະວີຄວາມຈະເລີນຮຸ່ງເຮືອງ, ການເຊື່ອມຕໍ່, ຄວາມສາມາດໃນການປັບຕົວ, ແລະຄວາມປອດໄພຂອງເດັກນ້ອຍ ໃນບັນດາປະເທດສະມາຊິກອາຊຽນ.

ການຜັນຂະຫຍາຍປື້ມຄຳແນະນຳນີ້ ແມ່ນເພື່ອສະໜັບສະໜູນການດຳເນີນງານຂອງແຜນວຽກງານອາຊຽນ ເພື່ອປະຕິບັດຖະແຫຼງການຮ່ຳໂນ້ຍ ວ່າດ້ວຍການສ້າງຄາມເຂັ້ມແຂງໃຫ້ແກ່ວຽກງານສັງຄົມສົງເຄາະ ໃຫ້ແກ່ປະຊາຄົມອາຊຽນທີ່ກົມກຽວ ແລະຕອບສະໜອງ. ຈຸດປະສົງຂອງປື້ມຄຳແນະນຳນີ້ ແມ່ນເພື່ອສະໜັບສະໜູນຜູ້ກຳນົດນະໂຍບາຍ, ຜູ້ຄຸ້ມຄອງ ແລະສະມາຊິກຂອງພະນັກງານສັງຄົມສົງເຄາະ ແລະພາກສ່ວນກ່ຽວຂ້ອງໃນບັນດາປະເທດສະມາຊິກອາຊຽນ ເພື່ອອອກແບບ ແລະສະໜອງການບໍລິການດ້ານສັງຄົມສົງເຄາະ ທີ່ມີຄຸນນະພາບ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ (VAW) ແລະ ຄວາມຮຸນແຮງຕໍ່ເດັກ (VAC).

ພວກເຮົາເຊື່ອໝັ້ນວ່າ ປື້ມຄຳແນະນຳນີ້ຈະໃຫ້ຜົນປະໂຫຍດແກ່ບັນດາປະເທດສະມາຊິກອາຊຽນ (AMS) ໃນຂະນະທີ່ພວກເຂົາເຮັດວຽກເພື່ອສະໜັບສະໜູນພະນັກງານສັງຄົມສົງເຄາະ ແລະພະນັກງານບໍລິການສັງຄົມໃນວົງກວ້າງ ເພື່ອຊ່ວຍເຫຼືອແມ່ຍິງ ແລະ ເດັກນ້ອຍທີ່ມີຄວາມສ່ຽງ ຫຼືໄດ້ຮັບຜົນກະທົບຈາກຄວາມຮຸນແຮງ. ນອກຈາກນີ້, ພວກເຮົາຍັງຊຸກຍູ້ໃຫ້ ປື້ມຄຳແນະນຳນີ້ ເປັນບ່ອນອີງສຳລັບການພັດທະນານິຕິກຳ, ນະໂຍບາຍ ແລະເຄື່ອງມື ໃນການສະໜອງບໍລິການດ້ານສັງຄົມທີ່ມີຄຸນນະພາບໃນດ້ານດັ່ງກ່າວນີ້.

ກອງປະຊຸມພະນັກງານອາວຸໂສອາຊຽນ ກ່ຽວກັບສະຫວັດດີການສັງຄົມ ແລະການພັດທະນາ (SOMSWD)

# ສະແດງຄວາມຂອບໃຈ

ອາຊຽນຂໍສະແດງຄວາມຂອບໃຈເຖິງການອຸທິດຕົນ ແລະຄວາມພະຍາຍາມຂອງຜູ້ທີ່ມີສ່ວນຮ່ວມ ໃນການພັດທະນາປຶ້ມຄໍາແນະນໍານີ້. ພວກເຮົາຂໍສະແດງຄວາມຂອບໃຈເຖິງຄວາມມຸ່ງໝັ້ນ ແລະການນໍາພາຂອງຄະນະເຮັດວຽກດ້ານວິຊາການອາຊຽນ ເພື່ອພັດທະນາຄໍາແນະນໍາລະດັບພາກພື້ນ ກ່ຽວກັບການບໍລິການທີ່ຈໍາເປັນ ສໍາລັບຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງຕໍ່ເດັກ ແລະຄວາມຮຸນແຮງຕໍ່ແມ່ຍິງ (VAW-VAC), ແລະກອງປະຊຸມພະນັກງານອາວຸໂສກ່ຽວກັບ ສະຫວັດດີການສັງຄົມ ແລະການພັດທະນາ (SOMSWD) ເຊິ່ງເປັນກໍາລັງຂັບເຄື່ອນທີ່ນໍາເອົາ ຄໍາແນະນໍາມາເປັນຄວາມເຂົ້າໃຈ. ກອງປະຊຸມຄະນະເຮັດວຽກດ້ານວິຊາການ 2 ຄັ້ງ ໄດ້ຖືກຈັດຂຶ້ນໃນລະຫວ່າງເດືອນເມສາ ຫາ ເດືອນມິຖຸນາ 2023 ເພື່ອພັດທະນາປຶ້ມຄໍາແນະນໍາດັ່ງກ່າວ.

ກອງເລຂາອາຊຽນ (ASEC) ສົມຄວນໄດ້ຮັບການຊົມເຊີຍ ໃນການປະສານງານຂະບວນການພັດທະນາ, ລວມທັງການປະສານງານການປະກອບສ່ວນ ຂອງບັນດາປະເທດສະມາຊິກອາຊຽນ (AMS) ເຂົ້າໃນປຶ້ມຄໍາແນະນໍາ.

ພວກເຮົາຂໍຂອບໃຈ ອົງການສະຫະປະຊາຊາດ ກອງທຶນສໍາລັບເດັກ (UNICEF) ຫ້ອງການພາກພື້ນອາຊີຕາເວັນອອກ ແລະປາຊີຟິກ, ອົງການສະຫະປະຊາຊາດ ກອງທຶນສໍາລັບປະຊາກອນ (UNFPA), ແລະ ອົງການສະຫະປະຊາຊາດ ເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງແກ່ແມ່ຍິງ (UN Women) ສໍາລັບການຊ່ວຍເຫຼືອດ້ານການເງິນ ແລະວິຊາການໃນການພັດທະນາປຶ້ມຄໍາແນະນໍາເຫຼັ້ມນີ້.

ກອງປະຊຸມພະນັກງານອາວຸໂສອາຊຽນ ກ່ຽວກັບສະຫວັດດີການສັງຄົມ ແລະ ການພັດທະນາ (SOMSWD)

# ຕົວອັກສອນຫຍໍ້

| | |
|---|---|
| AMS | ປະເທດສະມາຊິກອາຊຽນ |
| ASEC | ກອງເລຂາອາຊຽນ |
| ASEAN | ບັນດາປະເທດອາຊີຕາເວັນອອກສຽງໃຕ້ |
| GBV | ຄວາມຮຸນແຮງບົນພື້ນຖານທາງເພດ |
| GSSWA | ສະຫະພັນພະນັກງານສັງຄົມສົງເຄາະໂລກ |
| HIV/AIDS | ພະຍາດພູມຄຸ້ມກັນບົກພ່ອງ / ໄດ້ຮັບເຊື້ອພູມຄຸ້ມກັນບົກພ່ອງ |
| IPV | ຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ |
| LGU | ໜ່ວຍງານລັດຖະບານທ້ອງຖິ່ນ |
| NGO | ອົງການຈັດຕັ້ງສາກົນ |
| SOPs | ມາດຕະຖານການດຳເນີນງານ |
| SOMSWD | ກອງປະຊຸມພະນັກງານອາວຸໂສອາຊຽນ ກ່ຽວກັບສະຫວັດດີການສັງຄົມ ແລະການພັດທະນາ |
| ToT | ການຝຶກອົບຮົມຄູຝຶກ |
| UNFPA | ອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ |
| UNICEF | ອົງການສະຫະປະຊາຊາດ ກອງທຶນສຳລັບເດັກ |
| UPTPPA | ໜ່ວຍບໍລິການແບບປະສົມປະສານ ເພື່ອປົກປ້ອງ ແມ່ຍິງ ແລະເດັກ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ |
| UN Women | ອົງການສະຫະປະຊາຊາດ ເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະການສ້າງຄວາມເຂັ້ມແຂງແກ່ແມ່ຍິງ |
| VAC | ຄວາມຮຸນແຮງຕໍ່ເດັກ |
| VAW | ຄວາມຮຸນແຮງຕໍ່ແມ່ຍິງ |

# 1. ບົດແນະນຳ

ຄຳແນະນຳຂັ້ນພາກພື້ນນີ້ ມີຈຸດປະສົງເພື່ອສະຫນັບສະຫນູນຜູ້ກຳນົດນະໂຍບາຍ ແລະສະມາຊິກຂອງພະນັກງານບໍລິການສັງຄົມ ແລະພາກສ່ວນພັນທະມິດໃນປະເທດສະມາຊິກອາຊຽນ ໃນການອອກແບບ ແລະສະຫນອງການບໍລິການດ້ານສັງຄົມທີ່ມີຄຸນນະພາບສຳລັບແມ່ຍິງ ແລະເດັກນ້ອຍທີ່ມີຄວາມສ່ຽງ ຫຼືຜູ້ທີ່ປະສົບກັບຄວາມຮຸນແຮງ.

ໄດ້ຮັບການຜັນຂະຫຍາຍເພື່ອສະໜັບສະໜູນ ຖະແຫຼງການຮ່າໂນ້ຍ ປີ 2020 ວ່າດ້ວຍການເພີ່ມທະວີວຽກງານສັງຄົມ ໃຫ້ແກ່ປະຊາຄົມອາຊຽນທີ່ສະໜິດແໜ້ນ ແລະຕອບສະໜອງ ແລະ ເຊື່ອມໂຍງກັບ ຖະແຫຼງການຮ່າໂນ້ຍ ເພື່ອແນໃສ່ປະຕິບັດ ຖະແຫຼງການຮ່າໂນ້ຍ ກ່ຽວກັບການເພີ່ມທະວີວຽກງານສັງຄົມ ໃຫ້ແກ່ປະຊາຄົມອາຊຽນທີ່ສະໜິດແໜ້ນ ແລະ ຕອບສະໜອງໄດ້. (ຕໍ່ໄປນີ້ຈະເອີ້ນວ່າ 'ແຜນດຳເນີນງານ').[1]

ຄຳແນະນຳສຳລັບພາກພື້ນນີ້:

- ຄຳນຶງເຖິງຄວາມຫຼາກຫຼາຍຂອງປະເທດສະມາຊິກອາຊຽນເພື່ອໃຫ້ມີຄວາມກ່ຽວຂ້ອງກັນໃນແຕ່ລະສະພາບການທີ່ແຕກຕ່າງກັນ - ຕົວຢ່າງຂອງປະເທດສະເພາະແມ່ນໄດ້ກ່າວໄວ້ໃນເອກະສານຊ້ອນທ້າຍ.
- ອະທິບາຍເຖິງການພິຈາລະນາທີ່ສຳຄັນ ໃນການເສີມສ້າງລະບົບສັງຄົມສົງເຄາະ ເພື່ອແກ້ໄຂ ແລະສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໃນໜ້າທີ່ສົ່ງເສີມ, ປ້ອງກັນ ແລະແກ້ໄຂ, ໂດຍຮັບຮູ້ວ່າລະບົບສັງຄົມສົງເຄາະທີ່ແຂງແກ່ນນັ້ນ ຕ້ອງການກຳລັງແຮງງານແບບມືອາຊີບ ແລະຫຼາຍຂະແໜງການເພື່ອປ້ອງກັນ ແລະແກ້ໄຂຄວາມຮຸນແຮງ.
- ຮັບຮູ້ເຖິງປັດໄຈທີ່ເປັນເອກະລັກສະເພາະ ແລະປັດໄຈຮ່ວມກັນທີ່ອາດຈະເພີ່ມຄວາມສ່ຽງຕໍ່ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ. ຕົວຢ່າງເຊັ່ນ: ຄວາມທຸກຍາກ, ອາຍຸ, ຄວາມພິການ, ສະຖານະພາບຄວາມສຳພັນ, ຄວາມຮັບຜິດຊອບໃນການເບິ່ງແຍງ, ຄວາມສຳພັນທາງສາດສະຫນາ, ຊົນເຜົ່າ ຫຼືທາງດ້ານການເມືອງ, ພົນລະເມືອງ ແລະສະຖານະພາບການເຄື່ອນຍ້າຍຖິ່ນຖານ.
- ເນັ້ນໜັກເຖິງຄວາມສຳຄັນຂອງການນຳມາປະຕິບັດ ຢູ່ໃນອາຊີຕາເວັນອອກສຽງໃຕ້, ເຊິ່ງໄດ້ຮັບການຍອມຮັບວ່າ ເປັນໜຶ່ງໃນເຂດທີ່ມີຄວາມສ່ຽງຕໍ່ໄພພິບັດທີ່ສຸດໃນໂລກ.[2] ເຫດການສຸກເສີນ, ບໍ່ວ່າຈະເກີດຈາກຂໍ້ຂັດແຍ່ງ, ໄພພິບັດທາງທຳມະຊາດ ຫຼືວິກິດການອື່ນໆ, ສາມາດເຮັດໃຫ້ເກີດຄວາມບໍ່ສະເໝີພາບ ແລະການຈຳແນກທີ່ຮຸນແຮງຂຶ້ນ, ເຊິ່ງທ້າຍທີ່ສຸດແລ້ວ ຈະເພີ່ມຄວາມເປັນໄປໄດ້ ໃນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ.[3] ດັ່ງນັ້ນ, ການແນະນຳລະດັບພາກພື້ນນີ້ ຈຶ່ງສາມາດນຳໃຊ້ໄດ້ກັບການເຊື່ອມໂຍງ ດ້ານມະນຸດສະທຳ-ການພັດທະນາ-ສັນຕິພາບ.
- ປະຕິບັດຕາມຄຳໝັ້ນສັນຍາລະດັບໂລກ, ພາກພື້ນ ແລະລະດັບຊາດ ທີ່ມີຕໍ່ສິດທິມະນຸດ, ສິດທິເດັກ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການປົກປ້ອງສັງຄົມ (ເບິ່ງເອກະສານຊ້ອນທ້າຍ 1).

1 ຖະແຫຼງການຮ່າໂນ້ຍ ກ່ຽວກັບການເພີ່ມທະວີວຽກງານສັງຄົມສົງເຄາະ ໃຫ້ແກ່ປະຊາຄົມອາຊຽນທີ່ສະໜິດແໜ້ນ ແລະ ຕອບສະໜອງໃນປີ 2020. https://asean.org/wp-content/uploads/2012/05/14-Ha-Noi-Declaration-on-Stengthenin-Social-Work_FINAL. pdf. ແຜນຖະແຫຼງການອາຊຽນ ເພື່ອປະຕິບັດຖະແຫຼງການຮ່າໂນ້ຍ ກ່ຽວກັບການເພີ່ມທະວີວຽກງານສັງຄົມສົງເຄາະ ເພື່ອໃຫ້ປະຊາຄົມອາຊຽນສະໜິດສະໜົມ ແລະ ຕອບສະໜອງ. https://asean.org/wp-content/uploads/2021/11/FINAL-ASEAN-Social-Work-Road-Map_AMMSWD-endorsed.pdf

2 ຂອບວຽກອາຊຽນໃນການປົກປ້ອງ, ບົດບາດຍິງຊາຍ, ແລະ ການບໍ່ແບ່ງແຍກ ໃນການຄຸ້ມຄອງໄພພິບັດ 2021-2025. ຈາກາຕາ, ກອງເລຂາອາຊຽນ, ຕຸລາ 2021. https://asean.org/wp-content/uploads/2021/11/PGI_Framework_2021-2025.pdf

3 ຄະນະປະຈຳອົງການລະຫວ່າງປະເທດ (2015). ແນວທາງໃນການລວມເອົາການແຊກແຊງຄວາມຮຸນແຮງບົນພື້ນຖານທາງເພດ ໃນການປະຕິບັດດ້ານມະນຸດສະທຳ ຫຼຸດຜ່ອນຄວາມສ່ຽງ, ສົ່ງເສີມຄວາມສາມາດໃນການປັບຕົວ ແລະການຊ່ວຍເຫຼືອການຟື້ນຟູ.

# 2. ຄວາມເປັນມາ

ປະເທດສະມາຊິກອາຊຽນ ໄດ້ຮັບຮອງເອົາ ຖະແຫຼງການ ຮ່າໂນ່ຍ ວ່າດ້ວຍການເພີ່ມທະວີວຽກງານສັງຄົມສົງເຄາະໃຫ້ແກ່ປະຊາຄົມອາຊຽນ ເພື່ອຄວາມສະໜິດແໜ້ນ ແລະຕອບສະໜອງ ໃນປີ 2020. ຖະແຫຼງການດັ່ງກ່າວ ໄດ້ຮັບຮູ້ເຖິງຄວາມຈຳເປັນໃນການເສີມສ້າງກຳລັງແຮງງານຮັບໃຊ້ສັງຄົມ ທີ່ສະໜັບສະໜູນປະຊາກອນທີ່ມີຄວາມສ່ຽງສະເພາະ, ລວມທັງແມ່ຍິງ ແລະເດັກນ້ອຍທີ່ມີຄວາມສ່ຽງ ຫຼືປະສົບກັບຄວາມຮຸນແຮງ. ແຜນຮ່ວມຂອງອາຊຽນໃນການດຳເນີນການຕາມ ຖະແຫຼງການຮ່າໂນ້ຍ ກ່ຽວກັບການເພີ່ມທະວີວຽກງານສັງຄົມສົງເຄາະ ໃຫ້ແກ່ປະຊາຄົມອາຊຽນທີ່ສະໜິດແໜ້ນ ແລະຕອບສະໜອງໄດ້, ສອດຄ່ອງກັບຂອບວຽກໃນທົ່ວໂລກກ່ຽວກັບການປ້ອງກັນ ແລະການແກ້ໄຂຄວາມຮຸນແຮງ (ເບິ່ງເອກະສານຊ້ອນທ້າຍ 2) ແລະ ຮຽກຮ້ອງໃຫ້ມີການເສີມຂະຫຍາຍລະບົບວຽກງານສັງຄົມສົງເຄາະແບບຄົບຖ້ວນ. ການໃຫ້ບໍລິການທີ່ຕອບສະໜອງ ຄວາມຕ້ອງການສະເພາະຂອງກຸ່ມທີ່ມີຄວາມສ່ຽງ ແລະກຸ່ມທີ່ມີຄວາມສ່ຽງທີ່ສຸດ ລວມທັງເດັກນ້ອຍ ແລະແມ່ຍິງທີ່ມີຄວາມສ່ຽງ ຫຼືປະສົບກັບຄວາມຮຸນແຮງ. ແຜນວຽກ (roadmap) ໄດ້ກຳນົດບູລິມະສິດຈຳນວນຫນຶ່ງທີ່ກ່ຽວຂ້ອງກັບການປ້ອງກັນ ແລະການແກ້ໄຂຄວາມຮຸນແຮງໃນວຽກງານສັງຄົມສົງເຄາະ:

- ບູລິມະສິດ 1.1 ດຳເນີນການວິເຄາະສະຖານະການແຫ່ງຊາດ ແລະຄວາມພິການ, ການປະເມີນຄວາມຕ້ອງການທີ່ລະອຽດອ່ອນທາງດ້ານບົດບາດຍິງຊາຍ ແລະອາຍຸ ສຳລັບວຽກງານສັງຄົມສົງເຄາະ ແລະການບໍລິການສັງຄົມ.
- ບູລິມະສິດ 1.2 ພັດທະນາ ແລະຮັບຮອງເອົາແຜນປະຕິບັດງານແຫ່ງຊາດ ຫຼາຍຂະແໜງການ ທີ່ມີຄ່າໃຊ້ຈ່າຍຫຼາຍ, ເພື່ອພັດທະນາ ແລະເສີມສ້າງຄວາມເຂັ້ມແຂງ ໃຫ້ກັບວຽກງານສັງຄົມສົງເຄາະ ແລະການບໍລິການສັງຄົມຢ່າງຕໍ່ເນື່ອງ, ອີງໃສ່ຄວາມຕ້ອງການທີ່ໄດ້ຮັບການປະເມີນ, ລວມທັງຊັບພະຍາກອນມະນຸດທີ່ຈຳເປັນ.
- ບຸລິມະສິດ 1.3 ພັດທະນາ ແລະ ຮັບຮອງເອົານິຕິກຳສະເພາະ ສຳລັບວິຊາຊີບສັງຄົມສົງເຄາະ, ທັງເປັນການຮັບຮູ້ ແລະຊຸກຍູ້ກຳລັງແຮງງານດ້ານບໍລິການສັງຄົມໃຫ້ກວ້າງຂວາງ. ຮັບປະກັນວ່າກົດໝາຍໃນຂະແໜງການອື່ນຍັງກຳນົດພາລະບົດບາດ, ຄວາມຮັບຜິດຊອບ ແລະຂໍ້ກຳນົດຂອງວຽກງານທາງສັງຄົມ ໃນຂະແໜງການນັ້ນ, ຖ້ານຳໃຊ້. ບ່ອນທີ່ນິຕິກຳທີ່ກ່ຽວຂ້ອງມີຢູ່ແລ້ວ, ປະເທດສະມາຊິກອາຊຽນ ໄດ້ຖືກຊຸກຍູ້ໃຫ້ທົບທວນຄືນ ແລະຖ້າຈຳເປັນ, ປັບປຸງກົດຫມາຍທີ່ມີຢູ່ແລ້ວ ເພື່ອຮັບປະກັນຄວາມກ່ຽວຂ້ອງກັບຄວາມເປັນຈິງໃນປະຈຸບັນ ຂອງວຽກງານສັງຄົມສົງເຄາະ ແລະການພັດທະນາແຮງງານເຂົ້າໃນການບໍລິການສັງຄົມໃນປະເທດ.
- ບູລິມະສິດ 1.7 ພັດທະນາການຊີ້ນຳພາກພື້ນ ກ່ຽວກັບການບໍລິການທີ່ຈຳເປັນ ສຳລັບກຸ່ມທີ່ຢູ່ໃນສະຖານະການທີ່ມີຄວາມສ່ຽງ ເພື່ອສະຫນັບສະຫນູນ ບັນດາປະເທດສະມາຊິກອາຊຽນ.

# 3. ນິຍາມ

| ປະເພດ | ຄໍາອະທິບາຍ | ແຫຼ່ງຂໍ້ມູນ |
|---|---|---|
| **ການແຕ່ງງານຂອງເດັກ** | ການດໍາເນີນງານພາກພື້ນອາຊຽນ ວ່າດ້ວຍການລຶບລ້າງຄວາມຮຸນແຮງຕໍ່ເດັກນ້ອຍ ຮັບຮູ້ການແຕ່ງງານກ່ອນຮອດອາຍຸ ຫຼືການບັງຄັບແຕ່ງງານ ເປັນຮູບແບບໜຶ່ງຂອງຄວາມຮຸນແຮງຕໍ່ເດັກນ້ອຍ.<br><br>ຫມາຍເຖິງການແຕ່ງງານທີ່ເປັນທາງການ ຫຼືການຢູ່ຮ່ວມກັນ ທີ່ບໍ່ເປັນທາງການ ລະຫວ່າງເດັກນ້ອຍທີ່ມີອາຍຸຕໍ່າກວ່າ 18 ປີ ແລະຜູ້ໃຫຍ່ ຫຼືເດັກນ້ອຍຄົນອື່ນ. | ແຜນປະຕິບັດງານພາກພື້ນອາຊຽນ ວ່າດ້ວຍການລຶບລ້າງຄວາມຮຸນແຮງຕໍ່ເດັກ (ASEAN RPA on EVAC)<br><br>https://www.unicef.org/protection/child-marriage |
| **ການບໍລິການທີ່ຈໍາເປັນ** | ກວມເອົາຊຸດການບໍລິການຫຼັກທີ່ສະໜອງໃຫ້ໂດຍ ຂະແໜງສາທາລະນະສຸກ, ການບໍລິການສັງຄົມ, ຕໍາຫຼວດ ແລະຂະແໜງຍຸຕິທໍາ. ຢ່າງໜ້ອຍ ການບໍລິການດັ່ງກ່າວ ຕ້ອງຮັບປະກັນສິດທິ, ຄວາມປອດໄພ ແລະຄວາມເປັນຢູ່ທີ່ດີຂອງແມ່ຍິງ ຫຼືເດັກຍິງທີ່ປະສົບກັບຄວາມຮຸນແຮງທາງເພດ. | ໂຄງການຮ່ວມສາກົນແຫ່ງ ສະຫະປະຊາຊາດ ວ່າດ້ວຍການບໍລິການທີ່ຈໍາເປັນສໍາລັບແມ່ຍິງ ແລະເດັກຍິງທີ່ຖືກໃຊ້ຄວາມຮຸນແຮງ (2015) https://www.unfpa.org/esse ntial-services-package-women-and-girls-subject-violence |
| **ຄວາມຮຸນແຮງບົນພື້ນຖານທາງເພດ** | ຄວາມຮຸນແຮງທີ່ເນັ້ນໃສ່ບຸກຄົນເນື່ອງຈາກເພດຂອງບຸກຄົນນັ້ນ ຫຼືຄວາມຮຸນແຮງທີ່ມີຜົນກະທົບຕໍ່ບຸກຄົນທີ່ມີເພດໃດຫນຶ່ງຢ່າງບໍ່ສົມສ່ວນ. | https://gbvguidelines.org/ |
| | ຄວາມຮຸນແຮງບົນພື້ນຖານທາງເພດ (GBV) ແມ່ນຄໍາເວົ້າກາງສໍາລັບການກະທໍາທີ່ເປັນອັນຕະລາຍໃດໆ ທີ່ເກີດຂຶ້ນໂດຍຂັດຕໍ່ຄວາມຕ້ອງການຂອງບຸກຄົນ ແລະອີງໃສ່ຄວາມແຕກຕ່າງທາງສັງຄົມ (ເຊັ່ນ: ບົດບາດຍິງຊາຍ) ລະຫວ່າງເພດຊາຍ ແລະຍິງ. ມັນລວມເຖິງການກະທໍາທີ່ກໍ່ໃຫ້ເກີດຄວາມເຈັບປວດ ທາງຮ່າງກາຍ, ທາງເພດ ຫຼືຈິດໃຈ, ການຂົ່ມຂູ່ວ່າຈະກະທໍາການດັ່ງກ່າວ, ການບີບບັງຄັບ ແລະການຫຼຸດທອນເສລີພາບອື່ນໆ. ການກະທໍາເຫຼົ່ານີ້ສາມາດເກີດຂຶ້ນທັງໃນພື້ນທີ່ສາທາລະນະ ຫຼືພື້ນທີ່ສ່ວນຕົວ. | |
| **ຄວາມຮຸນແຮງຈາກຄູ່ຮັກ/ຄູ່ຊີວິດ** | ໝາຍເຖິງພຶດຕິກໍາໃດໜຶ່ງ ພາຍໃນຄວາມສໍາພັນໃກ້ຊິດ ທີ່ເຮັດໃຫ້ເກີດຄວາມເສຍຫາຍທາງຮ່າງກາຍ, ທາງຈິດໃຈ ຫຼືທາງເພດຕໍ່ຜູ້ທີ່ຢູ່ໃນຄວາມສໍາພັນ. ລວມທັງການກະທໍາຄວາມຮຸນແຮງທາງຮ່າງກາຍ ເຊັ່ນ: ການຕົບ, ຕີ, ເຕະ ແລະ ການຊົກ; ຄວາມຮຸນແຮງທາງເພດ, ລວມທັງການບັງຄັບໃຫ້ມີເພດສໍາພັນ ແລະການບັງຄັບທາງເພດອື່ນໆ; ການລ່ວງລະເມີດທາງດ້ານຄວາມຮູ້ສຶກ (ທາງດ້ານຈິດໃຈ), ເຊັ່ນ: ການດູຖູກ, ການໝິ່ນປະໝາດ, ເຮັດໃຫ້ອັບອາຍຢ່າງຕໍ່ເນື່ອງ, ການງຽບບໍ່ເວົ້ານໍາ, ການຂົ່ມຂູ່ (ເຊັ່ນ: ການທໍາລາຍສິ່ງຂອງ), ການຂົ່ມຂູ່ວ່າຈະເຮັດໃຫ້ເກີດອັນຕະລາຍ, ການຂົ່ມຂູ່ວ່າຈະເອົາລູກໄປ, ການອອກຫ່າງ ຫຼືຢຸດຕິການເບິ່ງແຍງ ໃນລະຫວ່າງທີ່ບໍ່ເຫັນດີກັນ; ການຄວບຄຸມພຶດຕິກໍາ, ລວມທັງການແຍກບຸກຄົນຈາກຄອບຄົວ ແລະຫມູ່ເພື່ອນ, ການຕິດຕາມການເຄື່ອນໄຫວ ແລະຈໍາກັດການເຂົ້າເຖິງຊັບພະຍາກອນທາງການເງິນ, ການຈ້າງເຮັດວຽກງານ, ການສຶກສາ ຫຼືການເບິ່ງແຍງທາງການແພດ. | ອົງການອະນາໄມໂລກ (2012) ຄວາມເຂົ້າໃຈ ແລະການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ – ຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ.<br><br>https://apps.who.int/iris/bit stream/handle/10665/77432/ WHO_RHR_12.36_eng.pdf?sequ en ce=1 |

| ປະເພດ | ຄໍາອະທິບາຍ | ແຫຼ່ງຂໍ້ມູນ |
|---|---|---|
| **ຜູ້ກະທໍາຜິດ** | ບຸກຄົນ (ຫຼືກຸ່ມຄົນ) ທີ່ກະທໍາຄວາມຮຸນແຮງທາງເພດ ຫຼືອາດຊະຍາກໍາ ຫຼືການກະທໍາຜິດປະເພດອື່ນໆ. ພາຍໃຕ້ກົດໝາຍວ່າດ້ວຍສິດທິມະນຸດສາກົນ, ຄໍາວ່າຜູ້ກະທໍາຜິດສາມາດອ້າງອີງເຖິງອົງການຈັດຕັ້ງ, ໜ່ວຍງານ ຫຼື ຕົວແທນຂອງລັດ ທີ່ບໍ່ໄດ້ປະຕິບັດຕາມພັນທະສິດທິມະນຸດ. | ທີມງານສະເພາະກິດກ່ຽວກັບຄໍາສັບ SEA ສໍາລັບຜູ້ປະສານງານພິເສດກ່ຽວກັບການປັບປຸງການຕອບສະໜອງ ຂອງອົງການສະຫະປະຊາຊາດ ຕໍ່ການຂູດຮີດທາງເພດ ແລະການລ່ວງລະເມີດທາງເພດ (2017)<br>UN, Glossary on Sexual Exploitation and Abuse, 2017 |
| **ພະນັກງານບໍລິການສັງຄົມ** | ລວມມີຜູ້ຊ່ຽວຊານທັງພາກລັດຖະບານ ແລະບໍ່ແມ່ນລັດຖະບານ ແລະອາສາສະໝັກລະດັບດ້ານວິຊາສະເພາະ ແລະ ອາສາສະໝັກລະດັບຊຸມຊົນທີ່ຫຼາກຫຼາຍ, ເຊິ່ງເຮັດວຽກກ່ຽວກັບເດັກນ້ອຍ, ໄວໜຸ່ມ, ແມ່ຍິງ ແລະຜູ້ຊາຍທີ່ເປັນຜູ້ໃຫຍ່, ຜູ້ສູງອາຍຸ, ຄອບຄົວ ແລະຊຸມຊົນ, ໂດຍເນັ້ນໃສ່ຜູ້ທີ່ມີຄວາມຕ້ອງການເພີ່ມເຕີມ ເຊິ່ງຕົກຢູ່ໃນສະພາບທີ່ມີຄວາມອ່ອນແອ ຫຼືມີຄວາມສ່ຽງ, ເພື່ອປົກປັກຮັກສາ ແລະ ຮັບປະກັນການພັດທະນາ ແລະການເປັນຢູ່ທີ່ດີ ແລະ ການປະຕິບັດສິດທິຂອງພວກເຂົາ. ເພື່ອເຮັດໄດ້ດັ່ງນັ້ນ, ພະນັກງານບໍລິການສັງຄົມ ຈະສະໜອງການບໍລິການໃນດ້ານການປ້ອງກັນ, ຕອບສະໜອງ ແລະການສົ່ງເສີມການບໍລິການທີ່ໄດ້ຮັບແຈ້ງການ ຈາກອົງການມະນຸດສະທໍາແລະວິທະຍາສາດສັງຄົມ, ຊົນເຜົ່າພື້ນເມືອງ. ຄວາມຮູ້, ວິຊາສະເພາະ ແລະທັກສະວິຊາສະເພາະ ແລະ ສະຫະວິຊາສະເພາະ, ແລະຫຼັກຈັນຍາບັນ.<br><br>ສໍາລັບຄໍານິຍາມສ່ວນທີ່ເຫຼືອ ຂອງພະນັກງານບໍລິການສັງຄົມ, ເບິ່ງເອກະສານຊ້ອນທ້າຍ 3 | ບົດຄວາມທີ 4 ຂອງແຜນງານອາຊຽນ ເພື່ອປະຕິບັດຖະແຫຼງການຮ່າໂນ້ຍ ວ່າດ້ວຍການເພີ່ມທະວີວຽກງານສັງຄົມ ເພື່ອໃຫ້ປະຊາຄົມອາຊຽນສະໜິດແໜ້ນ ແລະ ຕອບສະໜອງ.<br>https://asean.org/wp- content/uploads/2021/11/FI NA L-ASEAN-Social-Work- Road- Map_AMMSWD-endorsed.pd<br>ດັດແປງຈາກພັນທະມິດແຮງງານບໍລິການສັງຄົມລະດັບໂລກ |
| **ນັກສັງຄົມສົງເຄາະ** | ຜູ້ຊ່ຽວຊານທີ່ມີຄຸນວຸດທິລະດັບວິຊາການ, ຊຸກຍູ້ການປ່ຽນແປງ ແລະການພັດທະນາຂອງສັງຄົມ, ແລະສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ. ແນວໃດກໍ່ຕາມ, ໃນຫຼາຍປະເທດ, ຄໍາວ່າ 'ພະນັກງານສັງຄົມສົງເຄາະ' ແມ່ນໃຊ້ໃນຄວາມໝາຍທົ່ວໄປ ເພື່ອກ່າວເຖິງຜູ້ທີ່ອາດຈະໃຫ້ບໍລິການເຫຼົ່ານີ້ ແຕ່ຂາດຄຸນສົມບັດທາງການ.[4] ດັ່ງທີ່ໄດ້ກ່າວໄປຂ້າງເທິງ, ພະນັກງານສັງຄົມສົງເຄາະເຮັດວຽກກັບກຸ່ມສະເພາະ ຫຼື ບັນຫາສະເພາະ, ເຊິ່ງມັກກ່ຽວຂ້ອງກັບການມີສ່ວນຮ່ວມກັບບຸກຄົນ ແລະປະຊາກອນທີ່ເຄີຍປະສົບກັບບາດແຜທາງຈິດໃຈຮຸນແຮງ. ດ້ວຍເຫດຜົນນີ້,ພວກເຂົາຈຶ່ງມີທັກສະສະເພາະທີ່ກ່ຽວຂ້ອງກັບຄວາມຕ້ອງການເຫຼົ່ານີ້ ແລະຈໍາເປັນເພື່ອຮັບປະກັນວ່າວິທີການເຮັດວຽກບໍ່ເປັນອັນຕະລາ. ພະນັກງານສັງຄົມສົງເຄາະ ມັກຈະມີບົດບາດສໍາຄັນໃນການເຮັດວຽກຮ່ວມກັນ ລະຫວ່າງໜ່ວຍງານ, ການປະສານງານ ແລະການພັດທະນາລະບົບ ເຊັ່ນດຽວກັນກັບການພັດທະນານະໂຍບາຍ, ການປະຕິບັດ, ແລະການຕິດຕາມກວດກາ. | (GSSWA) ຄໍານິຍາມຂອງກໍາລັງແຮງງານ<br>https://www.socialservicewo rkforce.org/who-social-service-workforce |

4 Global Definition of Social Work, 2014, www.ifsw.org/what-is-social-work/global-definition-of-social-work

| ປະເພດ | ຄຳອະທິບາຍ | ແຫຼ່ງຂໍ້ມູນ |
|---|---|---|
| **ຜູ້ຖືກເຄາະຮ້າຍ ແລະ ຜູ້ລອດຊີວິດ** | ຜູ້ຖືກເຄາະຮ້າຍ ແລະຜູ້ລອດຊີວິດແມ່ນໃຊ້ທັງສອງຄຳສັບ ເພື່ອກ່າວເຖິງແມ່ຍິງ ແລະເດັກນ້ອຍ (ເດັກຍິງ) ທີ່ເຄີຍຖືກ ຫຼືກຳລັງຖືກກັບຄວາມຮຸນແຮງ ເພື່ອສະທ້ອນເຖິງທັງສອງຄຳສັບທີ່ໃຊ້ໃນຂະບວນການທາງກົດໝາຍ ແລະອີງການຂອງແມ່ຍິງ ແລະເດັກຍິງເຫຼົ່ານີ້ ເພື່ອຊອກຫາການບໍລິການທີ່ຈຳເປັນ. | ການສຶກສາລົງເລິກຂອງເລຂາທິການໃຫຍ່ສະຫະປະຊາຊາດກ່ຽວກັບທຸກຮູບແບບຂອງຄວາມຮຸນແຮງຕໍ່ແມ່ຍິງ (A/61/122/Add.1) Para 21<br><br>https://www.un.org/women wa tch/daw/vaw/v-sg- study.htm |
| **ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກຍິງ** | ການກະທຳໃດໆ ກ່ຽວກັບຄວາມຮຸນແຮງບົນພື້ນຖານທາງເພດ ທີ່ສົ່ງຜົນໃຫ້ເກີດຄວາມເສຍຫາຍທາງຮ່າງກາຍ, ທາງເພດ ຫຼືທາງຈິດໃຈ ຕໍ່ແມ່ຍິງ ແລະເດັກຍິງ, ລວມທັງການຂົ່ມຂູ່ຈາກການກະທຳດັ່ງກ່າວ, ການບີບບັງຄັບ ຫຼືການຫຼຸດຜ່ອນເສລີພາບຕາມໃຈຕົນເອງ, ບໍ່ວ່າຈະເກີດຂຶ້ນໃນ ພື້ນທີ່ສາທາລະນະ ຫຼືພື້ນທີ່ສ່ວນຕົວ. | ສະມັດຊາໃຫຍ່ສະຫະປະຊາຊາດ, ປີ 1993, ຖະແຫຼງການກ່ຽວກັບການລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ.<br>https://www.ohchr.org/en/i nst ruments- mechanisms/instru-ments/de cla ration-elimination-violence-against-women |
| **ຄວາມຮຸນແຮງຕໍ່ເດັກ** | ມາດຕາ 19 ຂອງ ສົນທິສັນຍາວ່າດ້ວຍສິດທິເດັກ, ຄຳວ່າ ຄວາມຮຸນແຮງ ສະແດງເຖິງການກະທຳໃດໆຕໍ່ເດັກນ້ອຍທີ່ເຮັດໃຫ້ເກີດຄວາມເສຍຫາຍ, ການບາດເຈັບ, ການລ່ວງລະເມີດ, ການລະເລີຍ ຫຼືການປິ່ນປົວທີ່ລະເລີຍ, ການຂົ່ມເຫັງ, ແລະ/ຫຼືການຂູດຮີດ ບໍ່ວ່າຈະເປັນການຍອມຮັບວ່າເປັນ "ປະເພນີ" ຫຼື "ລະບຽບວິໄນ", ລວມທັງຂັດຂວາງການພັດທະນາຂອງເດັກ. | ແຜນປະຕິບັດງານພາກພື້ນອາຊຽນ ວ່າດ້ວຍການລຶບລ້າງຄວາມຮຸນແຮງຕໍ່ເດັກ (ASEAN RPA on EVAC) |

# 4. ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກ ໃນພາກພື້ນອາຊຽນ

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກ ຖືວ່າເປັນການລະເມີດສິດທິມະນຸດທີ່ແຜ່ຫຼາຍທີ່ສຸດໃນໂລກ. ການສຶກສາຫຼາຍປະເທດຂອງ ອົງການສະຫະປະຊາຊາດ ປີ 2013 ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງໃນອາຊີ ແລະປາຊີຟິກ ໄດ້ຖືກລາຍງານວ່າ ອັດຕາຄວາມຮຸນແຮງ ທີ່ຜູ້ຊາຍກະທຳຕໍ່ກັບ ຄູ່ຮັກ/ຄູ່ຄອງທີ່ເປັນແມ່ຍິງ ໃນປະເທດຕ່າງໆ ແມ່ນຢູ່ລະຫວ່າງ 26% ເຖິງ 80%.[5] ແມ່ຍິງທີ່ເປັນຜູ້ໃຫຍ່ ທີ່ມີຄວາມພິການຈຳນວນ 5 ຄົນ, ມີຈຳນວນຢ່າງໜ້ອຍ 1 ຄົນ ແລະມີຄວາມເປັນໄປໄດ້ທີ່ຈະຖືກລ່ວງລະເມີດທາງດ້ານຮ່າງກາຍ ແລະທາງເພດ ຫຼາຍກວ່າແມ່ຍິງທີ່ບໍ່ພິການເຖິງເຄິ່ງໜຶ່ງ.[6]

ການຄົ້ນຄວ້າໂດຍ ອົງການ UNICEF ເປັນພື້ນຖານສຳລັບການພັດທະນາແຜນປະຕິບັດງານພາກພື້ນ ວ່າດ້ວຍການລຶບລ້າງຄວາມຮຸນແຮງຕໍ່ເດັກນ້ອຍ (ASEAN RPA on EVAC) ຄາດຄະເນອັດຕາການລ່ວງລະເມີດທາງດ້ານຮ່າງກາຍຂອງເດັກຊາຍ ແລະເດັກຍິງ ໃນພາກພື້ນຢູ່ໃນລະດັບຈາກ 10% ຫາ 30.3%; ການລ່ວງລະເມີດທາງເພດຈາກ 1,7% ເປັນ 11,6%; ການລ່ວງລະເມີດທາງດ້ານຈິດໃຈຈາກ 31,3% ເປັນ 68,5%; ແລະ ແຮງງານເດັກຈາກ 6,5% ເປັນ 56%. ນອກຈາກນັ້ນ, ເດັກນ້ອຍ 3 ໃນ 4 ຄົນຢູ່ໃນພາກພື້ນ ຍັງປະສົບກັບການລົງໂທດທາງລະບຽບວິໄນ ການໃຊ້ຄວາມຮຸນແຮງຈາຂອງຄູສອນ ຫຼືພໍ່ແມ່ນຳອີກ.

ສື່ສັງຄົມອອນລາຍ ແລະເທັກໂນໂລຊີດີຈິຕອລອື່ນໆ ໄດ້ເຮັດໃຫ້ເກີດຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ໃນຮູບແບບໃໝ່ໆ ທີ່ເຮັດໃຫ້ຄວາມຮຸນແຮງທີ່ມີມາກ່ອນແລ້ວນັ້ນເພີ່ມຂຶ້ນ ໂດຍຜ່ານຂະໜາດ, ຄວາມໄວ ແລະການເຂົ້າເຖິງ ໃນຮູບແບບຄວາມຮຸນແຮງຢ່າງຕໍ່ເນື່ອງ. ອີງຕາມການສຶກສາທີ່ຜ່ານມາ, ໃນທົ່ວໂລກ 85% ຂອງແມ່ຍິງ ແລະເດັກຍິງໄດ້ປະສົບ ຫຼືພົບເຫັນບາງຮູບແບບຂອງຄວາມຮຸນແຮງທາງອອນລາຍບົນພື້ນຖານທາງເພດ ແລະອັດຕາການແຜ່ຂະຫຍາຍຂອງຄວາມຮຸນແຮງທາງອິນເຕີເນັດ ຕໍ່ແມ່ຍິງໃນອາຊີ ແລະປາຊີຟິກ ແມ່ນ 88%.[7]

ໃນຂະນະທີ່ແມ່ຍິງ ແລະເດັກນ້ອຍທຸກຄົນສາມາດມີຄວາມສ່ຽງຕໍ່ຄວາມຮຸນແຮງ, ບາງສະຖານະການສາມາດເພີ່ມ ຫຼືເພີ່ມຄວາມສ່ຽງຫຼາຍຂຶ້ນໄດ້. ຄວາມສ່ຽງຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍແມ່ນຮ້າຍແຮງຂຶ້ນໃນທັນທີ ພາຍຫຼັງການເກີດໄພພິບັດ ແລະວິກິດການ, ສິ່ງຜົນໃຫ້ລະດັບການແຕ່ງງານຂອງເດັກ, ຄວາມຮຸນແຮງໃນຄອບຄົວ ແລະການລ່ວງລະເມີດທາງເພດເພີ່ມຂຶ້ນ.[8] ການອອກໄປເຮັດວຽກຢູ່ຕາມຖະໜົນຫົນທາງກໍຍັງມີຄວາມສ່ຽງສູງຂຶ້ນເຊັ່ນກັນ.

ແມ່ຍິງຫຼາກຫຼາຍກຸ່ມ ຕ້ອງໄດ້ຮັບຄວາມທຸກທໍລະມານຈາກການຈຳແນກ ແລະຄວາມບໍ່ສະເໝີພາບຫຼາຍຮູບແບບ, ເຊິ່ງເຮັດໃຫ້ພວກເຂົາມີຄວາມສ່ຽງຫຼາຍຕໍ່ຄວາມຮຸນແຮງ. ພວກເຂົາປະກອບມີແມ່ຍິງພິການ; ແມ່ຍິງທີ່ອາໄສຢູ່ຮ່ວມກັບແລະໄດ້ຮັບຜົນກະທົບຈາກເຊື້ອເຮສໄອວີ (HIV) ແລະເອດ (AIDS); ເດັກຍິງ; ແມ່ຍິງສູງອາຍຸ; ຊົນເຜົ່າສ່ວນນ້ອຍ ແລະ/ຫຼື ແມ່ຍິງຊົນເຜົ່າ; ແມ່ຍິງທີ່ມີສະຖານະບໍ່ຖືກກົດໝາຍ; ແມ່ຍິງອົບພະຍົບ ແລະຜູ້ຍ້າຍຖິ່ນ; ແມ່ຍິງເຄື່ອນຍ້າຍທີ່ມີເອກະສານ ແລະບໍ່ມີເອກະສານ; ແມ່ຍິງທີ່ບໍ່ມີສັນຊາດ, ຜູ້ປົກປ້ອງສິດທິມະນຸດຂອງແມ່ຍິງ / ຜູ້ສະໜັບສະໜູນຄວາມສະເໝີພາບລະຫວ່າງຍິງ-ຊາຍ, ແລະແມ່ຍິງທີ່ຖືກຄ້າມະນຸດເພື່ອບັງຄັບໃຊ້ແຮງງານ ຫຼືການຂູດຮີດທາງເພດ ແລະອື່ນໆ.[9]

5 ອົງການ UNDP, UNFPA, UN Women ແລະ UN Volunteers (2013) ເປັນຫຍັງຜູ້ຊາຍບາງຄົນໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະພວກເຮົາຈະປ້ອງກັນມັນໄດ້ແນວໃດ? ຜົນການຄົ້ນພົບດ້ານປະລິມານ ຈາກການສຶກສາຫຼາຍປະເທດຂອງ ອົງການສະຫະປະຊາຊາດກ່ຽວກັບຜູ້ຊາຍ ແລະຄວາມຮຸນແຮງໃນອາຊີແລະປາຊີຟິກ. https://partners4prevention.org/about- Prevention/research/men-and-violence-study

6 ອົງການ UNESCAP (n.d.) ຄວາມເປັນຈິງຂອງ ຄວາມພິການໃນອາຊີ ແລະປາຊີຟິກ. https://www.unescap.org/sites/default/files/Disability%20The%20Facts.pdf

7 https://onlineviolencewomen.eiu.com/

8 ສະຫະພັນກາແດງ ແລະ ວົງເດືອນແດງສາກົນ (2018) ຄວາມຮັບຜິດຊອບໃນການປ້ອງກັນ ແລະ ຕອບສະໜອງຕໍ່ຄວາມຮຸນແຮງທາງເພດ ແລະ ເພດໃນໄພພິບັດ ແລະ ວິກິດການ. https://www.girlsnotbrides.org/learning-resources/resource-centre/the- responsibility-to-prevent-and-respond-to- sexual-and-gender-based-violence-in-disasters-and-crises/ #resource-downloads

9 ແຜນປະຕິບັດງານພາກພື້ນອາຊຽນ ກ່ຽວກັບການຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. https://asean.org/wp-content/uploads/2021/01/ASEAN-Regional-Plan-of-Action-on-Eliintation-of-Violence-Against-WomenAdopted.pdf

ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ ໄດ້ສົ່ງຜົນກະທົບຕໍ່ສຸຂະພາບຢ່າງຮ້າຍແຮງ ລວມທັງຜົນຮ້າຍແຮງເຖິງຊີວິດ, ການບາດເຈັບທາງຮ່າງກາຍໃນທັນທີ, ການຖືພາໂດຍບໍ່ໄດ້ຕັ້ງໃຈ ແລະການຕິດພະຍາດຕິດຕໍ່ທາງເພດສຳພັນ, ຄວາມຕຶງຄຽດຫລັງຈາກເຫດການຮ້າຍແຮງ (post-traumatic  stress) ແລະ ບັນຫາທາງດ້ານສຸຂະພາບຈິດໃນໄລຍະຍາວ. ຄວາມຮຸນແຮງໃນໄວເດັກ, ແລະໂດຍສະເພາະແມ່ນຄວາມຮຸນແຮງທາງເພດ, ອາດນຳໄປສູ່ພຶດຕິກຳທີ່ເປັນອັນຕະລາຍ ເຊັ່ນ: ການສູບຢາສູບ ແລະການໃຊ້ສານເສບຕິດ ແລະພຶດຕິກຳທາງເພດທີ່ມີຄວາມສ່ຽງ. “ມັນຍັງກ່ຽວຂ້ອງກັບການກະທຳຄວາມຮຸນແຮງ (ສຳລັບຜູ້ຊາຍ) ແລະການຕົກເປັນຜູ້ເຄາະຮ້າຍຈາກຄວາມຮຸນແຮງ (ສຳລັບແມ່ຍິງ).[10]

ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ມີບາງປັດໄຈສ່ຽງຮ່ວມກັນ, ໂດຍຍຶດຖືເອົາບັນທັດຖານດ້ານລົບຂອງສັງຄົມ, ມັກຈະເກີດຂຶ້ນຮ່ວມກັນ ແລະມີຜົນສະທ້ອນທີ່ຕາມມາຮ່ວມກັນ ແລະລວມກັນ, ເຮັດໃຫ້ເກີດຜົນກະທົບໄປຫາຄົນລຸ້ນຕໍ່ໄປ.[11]  ໄວໜຸ່ມສາມາດເປັນໄລຍະທີ່ມີຄວາມສ່ຽງ ໂດຍສະເພາະເດັກຍິງ. ອຸປະສັກໃນການເຂົ້າເຖິງການບໍລິການທີ່ແມ່ຍິງ ແລະເດັກນ້ອຍຫຼາຍຄົນປະເຊີນຢູ່ນັ້ນ ສາມາດຈຳກັດທາງເລືອກຂອງພວກເຂົາ, ແລະໂອກາດໃນການດຳລົງຊີວິດທີ່ປາສະຈາກຄວາມຮຸນແຮງ.

**ປັດໄຈສ່ຽງຮ່ວມກັນ** ຂອງທັງແມ່ຍິງ ແລະເດັກນ້ອຍລວມມີ ຄວາມບໍ່ສະເໝີພາບ ແລະການຈຳແນກບົນພື້ນຖານຂອງບົດບາດຍິງ-ຊາຍ ແລະຄວາມພິການ, ຂໍ້ຂັດແຍ່ງ ແລະວິກິດການ, ການຂາດສະຖາບັນທີ່ຕອບສະໜອງ ແລະການລົງໂທດທາງກົດໝາຍທີ່ອ່ອນແອ, ການປົກຄອງຂອງຜູ້ຊາຍໃນຄົວເຮືອນ ແລະຊຸມຊົນ, ແລະຂໍ້ຂັດແຍ່ງໃນຊີວິດແຕ່ງງານ.[12]

**ບັນທັດຖານທາງສັງຄົມ:** ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍເກີດຂຶ້ນໃນທັດສະນະຄະຕິຂອງຄວາມເຊື່ອ ແລະຄ່ານິຍົມກ່ຽວກັບຄວາມເປັນຊາຍ, ຄວາມເປັນຍິງ, ຄອບຄົວ ແລະວັດທະນະທຳ. ບັນທັດຖານທາງສັງຄົມທີ່ຊຸກຍູ້ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ ລວມມີ ບັນທັດຖານທີ່ຍອມຮັບການລົງໂທດທາງລະບຽບວິໄນທີ່ຮຸນແຮງ, ສົ່ງເສີມຄວາມເປັນຊາຍບົນພື້ນຖານຂອງຄວາມຮຸນແຮງ ແລະການຄວບຄຸມ, ໃຫ້ບູລິມະສິດກັບຊື່ສຽງຂອງຄອບຄົວ ຫຼາຍກວ່າສິດທິ ແລະການເລືອກຂອງສະມາຊິກໃນຄອບຄົວແຕ່ລະຄົນ, ການຕຳນິຜູ້ຖືກເຄາະຮ້າຍ ແລະເຮັດໃຫ້ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍຍັງຄົງຢູ່. ມາດຕະຖານທາງສັງຄົມເຫຼົ່ານີ້ກຳນົດຄວາມສຳພັນລະຫວ່າງຜູ້ຊາຍແລະແມ່ຍິງ, ແລະລະຫວ່າງພໍ່ແມ່ / ຜູ້ເບິ່ງແຍງ ແລະເດັກນ້ອຍ.[13]

### ຄວາມສ່ຽງທີ່ຕັດກັນລະຫວ່າງຄວາມຮຸນແຮງຕໍ່ແມ່ຍິງ (VAW) ແລະຄວາມຮຸນແຮງຕໍ່ເດັກນ້ອຍ (VAC)




**ເກີດຂຶ້ນຮ່ວມກັນ:** ຄວາມຮຸນແຮງຈາກຄູ່ຮັກ/ຄູ່ຄອງ (IPV) ແລະການລ່ວງລະເມີດເດັກ ຫຼືການຂົ່ມເຫັງມັກຈະເກີດຂຶ້ນໃນຄອບຄົວ.[14] ລູກໆໃນຄົວເຮືອນທີ່ແມ່ປະສົບກັບ ຄວາມຸຣແຮງຈາກຄູ່ຮັກ/ຄູ່ຄອງ ມີຄວາມເປັນໄປໄດ້ທີ່ຈະໄດ້ຮັບຜົນກະທົບທາງດ້ານຈິດໃຈ ຈາກການພົບເຫັນຄວາມຮຸນແຮງດັ່ງກ່າວ, ມີໂອກາດຫນ້ອຍທີ່ຈະໄດ້ຮັບການປົກປ້ອງຈາກຄວາມຮຸນແຮງ, ແລະມີຄວາມເປັນໄປໄດ້ທີ່ຈະຖືກລົງໂທດທາງວິໄນຢ່າງຮຸນແຮງ ຈາກຜູ້ເບິ່ງແຍງທັງຊາຍ ແລະຍິງ.[15]

**ຜົນສະທ້ອນທົ່ວໄປ ແລະຮ່ວມກັນ** ມີຜົນສະທ້ອນຕໍ່ສັງຄົມ ແລະ ສຸຂະພາບໃນໄລຍະຍາວ.[16] ຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ ແມ່ນກ່ຽວຂ້ອງກັບ ການທີ່ແອນ້ອຍເກີດໃໝ່ ມີນໍ້າໜັກຕໍ່າ, ອັດຕາການຕາຍຂອງເດັກຕໍ່າກວ່າອາຍຸ 5 ປີເພີ່ມສູງຂຶ້ນ ແລະຜົນກະທົບທາງລົບຕໍ່ສຸຂະພາບຈິດ ແລະ ການພັດທະນາສັງຄົມຂອງເດັກນ້ອຍ.[17]

ແຫຼ່ງຂໍ້ມູນ: Guedes, A., et al. (2016). ການສ້າງຊ່ອງຫວ່າງ: ການທົບທວນທົ່ວໂລກກ່ຽວກັບຄວາມສ່ຽງທີ່ຕັດກັນຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກນ້ອຍ. ການປະຕິບັດສຸຂະພາບທົ່ວໂລກ, vol. 9

10 ອົງການອະນາໄມໂລກ, ວັນທີ 9 ມີນາ 2021, ຄວາມຮຸນແຮງຕໍ່ແມ່ຍິງ https://www.who.int/news-room/fact-sheets/detail/violence-against-women
11 Guedes, A., Bott, S., Garcia-Moreno, C., Colombini, M. (2016). ການເຊື່ອມຊ່ອງຫວ່າງ: ການທົບທວນທົ່ວໂລກກ່ຽວກັບຈຸດຕັດກັນຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກນ້ອຍ. ການດຳເນີນງານສຸຂະພາບທົ່ວໂລກ, vol. 9, ບໍ່. 31516. ຫຼັກຖານພາກພື້ນທີ່ຜ່ານມາປະກອບມີ: https://reliefweb.int/report/cambodia/ending-violence-against-women-and-children-asia-and-pacific-opportunities-and and https://www.sciencedirect.com/science/article/pii/S2352827321002858
12 ອ້າງແລ້ວ
13 Matthews S. Makola L & Megganon V (2021). ການເຊື່ອມຕໍ່ຈຸດຕ່າງໆ: ແຈ້ງຄວາມເຂົ້າໃຈ ແລະການແກ້ໄຂຄວາມສ່ຽງທີ່ຕັດກັນລະຫວ່າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ. ເມືອງເຄບທາວ: ສະຖາບັນເດັກນ້ອຍ, ມະຫາວິທະຍາໄລເຄບທາວ. 2021
14 Guedes, A., et. al.. (2016). ການເຊື່ອມຊ່ອງຫວ່າງ: ການທົບທວນທົ່ວໂລກກ່ຽວກັບຄວາມສ່ຽງທີ່ຕັດກັນຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກນ້ອຍ. ການປະຕິບັດສຸຂະພາບທົ່ວໂລກ, vol. 9, 31516.
15 ສະຫະປະຊາຊາດ ກອງທຶນປະຊາກອນ (UNFPA) ແລະ ສະຫະປະຊາຊາດ ກອງທຶນເດັກນ້ອຍ (UNICEF) (2018). ສ້າງການເຊື່ອມຕໍ່: ຄວາມຮຸນແຮງຈາກຄູ່ຮັກ/ຄູ່ຄອງ ແລະຄວາມຮຸນແຮງຕໍ່ເດັກນ້ອຍໃນເອີຣົບຕາເວັນອອກແລະອາຊີກາງ. Istanbul ແລະ Geneva: UNFPA ແລະ UNICEF. 2018
16 Wathen CN, Macmillan HL (2013). ການເປີດເຜີຍຂໍ້ມູນຂອງເດັກ ກ່ຽວກັບຄວາມຮຸນແຮງຈາກຄູ່ຮັກ/ຄູ່ຄອງ: ຜົນກະທົບແລະການຊ່ວຍເຫຼືອ. Pediatric Child Health 2013;

**ຜົນກະທົບລະຫວ່າງລຸ້ນຄົນ:** ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ ສາມາດກໍ່ໃຫ້ເກີດຜົນກະທົບຂ້າມລຸ້ນຄົນໄດ້. ກົງກັນຂ້າມ, ຈະເພີ່ມຄວາມສ່ຽງຂອງລູກຫຼານຂອງຕົນເອງ ທີ່ຈະກໍາທໍາການລ່ວງລະເມີດ ຫຼືປະສົບກັບຄວາມຮຸນແຮງໃນຮູບແບບຕ່າງໆ ເມື່ອເປັນຜູ້ໃຫຍ່, ດັ່ງນັ້ນຈຶ່ງເປັນການສືບຕໍ່ວົງຈອນຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃຫ້ເກີດຂຶ້ນຢ່າງຕໍ່ເນື່ອງ.[18]

**ໄວໜຸ່ມ** ແມ່ນໄລຍະທີ່ມີຄວາມສ່ຽງເປັນພິເສດ ໂດຍສະເພາະຕໍ່ຄວາມຮຸນແຮງ. ການຈໍາແນກທາງອາຍຸ ແລະ ການຈໍາແນກບົນພື້ນຖານທາງເພດທີ່ຕັດກັນ ເຮັດໃຫ້ໄວໜຸ່ມຍິງມີຄວາມສ່ຽງສູງທີ່ຈະປະສົບກັບຄວາມຮຸນແຮງ, ລວມທັງຄວາມຮຸນແຮງຈາກຜົວ ຫຼືຈາກແຟນ / ຄູ່ຮັກ.[19] ການແຕ່ງງານໃນເດັກ ແລະການຖືພາກ່ອນໄວອັນຄວນ ກ່ຽວຂ້ອງກັບຄວາມສ່ຽງສູງຕໍ່ຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ ໃນຂະນະທີ່ຫຼັກຖານບາງຢ່າງຊີ້ໃຫ້ເຫັນວ່າ ລູກໆຂອງແມ່ໄວໜຸ່ມ ມີຄວາມສ່ຽງສູງຕໍ່ການປະຕິບັດທີ່ລະເມີດຕໍ່ເດັກນ້ອຍ. ແນວໃດກໍຕາມ, ໄວໜຸ່ມມັກຈະຖືກເບິ່ງຂ້າມໃນໂຄງການປ້ອງກັນ ແລະແກ້ໄຂຄວາມຮຸນແຮງ[20] ແລະຕົກຢູ່ໃນຊ່ອງຫວ່າງ, ຈຶ່ງຮຽກຮ້ອງໃຫ້ມີການປະສານງານທີ່ເຂັ້ມແຂງ ແລະໂຄງການທີ່ເຫມາະສົມ. ພວກເຂົາປະເຊີນກັບອຸປະສັກເພີ່ມເຕີມ ໃນການເຂົ້າເຖິງການບໍລິການທີ່ມີຄຸນນະພາບ ອັນເນື່ອງມາຈາກອາຍຸ ແລະການຈໍາແນກບົນພື້ນຖານທາງເພດ ແລະການປະນາມ[21] ແລະມັກຈະບໍ່ມີ ການບໍລິການ ຫຼືໂຄງການສະເພາະສໍາລັບໄວໜຸ່ມ.[22]

**ອຸປະສັກໃນການເຂົ້າເຖິງ:** ແມ່ຍິງ ແລະເດັກນ້ອຍທີ່ປະສົບກັບຄວາມຮຸນແຮງ ປະເຊີນກັບອຸປະສັກອັນສໍາຄັນ ຕໍ່ການເຂົ້າເຖິງການບໍລິການ. ການຂາດການບໍລິການທີ່ອອກແບບສະເພາະໃຫ້ແກ່ແມ່ຍິງ ແລະເດັກນ້ອຍ ລວມທັງທັດສະນະທີ່ຈໍາແນກຂອງຜູ້ໃຫ້ບໍລິການດ່ານໜ້າ ເປັນອຸປະສັກຕໍ່ການຂໍຄວາມຊ່ວຍເຫຼືອ ແລະການເຂົ້າເຖິງການປິ່ນປົວເພື່ອຊ່ວຍຊີວິດ. ການເຂົ້າເຖິງທີ່ສໍາຄັນ ຈໍາເປັນຕ້ອງໄດ້ຮັບການບໍລິການຄຸ້ມຄອງ ແລະຕອບສະໜອງທີ່ປອດໄພ, ເປັນຄວາມລັບ, ຄົບຖ້ວນ ແລະບໍ່ຈໍາແນກ, ເຄົາລົບຫຼັກການເພື່ອຜົນປະໂຫຍດສູງສຸດຂອງເດັກ, ແລະນໍາໃຊ້ວິທີການທີ່ເນັ້ນເອົາຜູ້ລອດຊີວິດເປັນໃຈກາງ ລວມທັງການສະໜັບສະໜູນສິດທິເດັກ ໃນການມີສ່ວນຮ່ວມຢ່າງມີຄວາມໝາຍ ແລະສິດທິຂອງແມ່ຍິງ ໃນການຕັດສິນໃຈດ້ວຍຕົນເອງ ກ່ຽວກັບຮັບການເບິ່ງແຍງປິ່ນປົວ[23] ອຸປະສັກໃນການເຂົ້າເຖິງ ແມ່ນມີຄວາມທ້າທາຍຫຼາຍຂຶ້ນສໍາລັບແມ່ຍິງ ແລະເດັກນ້ອຍ ທີ່ຕ້ອງປະເຊີນກັບຮູບແບບການຈໍາແນກ ຫຼາຍແບບຕັດກັນເພີ່ມເຕີມ ບົນພື້ນຖານຂອງຄວາມພິການ, ສະຖານະຄວາມສໍາພັນ ແລະຄວາມຮັບຜິດຊອບໃນການເບິ່ງແຍງ, ສະຖານະພົນລະເມືອງ ແລະການຍ້າຍຖິ່ນຖານ, ແລະຄວາມກ່ຽວຂ້ອງທາງສາດສະຫນາ, ຊົນເຜົ່າ ຫຼືທາງດ້ານການເມືອງ.

**ໄພພິບັດ ແລະເຫດສຸກເສີນ:** ແມ່ຍິງ ແລະເດັກນ້ອຍ, ໂດຍສະເພາະຜູ້ທີ່ມີຄວາມພິການ, ມີຄວາມເປັນໄປໄດ້ທີ່ຈະມີຄວາມສ່ຽງສູງຕໍ່ຄວາມຮຸນແຮງ ແລະການຂູດຮີດໃນໄລຍະທີ່ເກີດໄພພິບັດ ແລະສະຖານະການສຸກເສີນອື່ນໆ ແລະໃນໄລຍະໜຶ່ງຫຼັງຈາກນັ້ນ ຈະຢູ່ໃນໄລຍະການຟື້ນຟູ, ສິ່ງເຫຼົ່ານີ້ຈໍາເປັນຕ້ອງໃຫ້ຄວາມສໍາຄັນເປັນບູລິມະສິດທໍາອິດ ສໍາລັບການຕອບສະໜອງໃນກໍລະນີສຸກເສີນ.[24]

17 Guedes, A., et. al.. (2016). ການເຊື່ອມຊ່ອງຫວ່າງ: ການທົບທວນທົ່ວໂລກກ່ຽວກັບ ຄວາມສ່ຽງທີ່ຕັດກັນຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກນ້ອຍ. ການປະຕິບັດສຸຂະພາບທົ່ວໂລກ, vol. 9.

18 ອ້າງແລ້ວ

19 Kidman, R. (2016). ການແຕ່ງງານໃນເດັກ ແລະຄວາມຮຸນແຮງຈາກຄູ່ຮັກ: ການສຶກສາປຽບທຽບໃນ 34 ປະເທດ. ວາລະສານສາກົນຂອງພະຍາດລະບາດ, vol. 46, ບໍ່. 2, ໜ້າ 662–675

20 ຄະນະກໍາມາທິການຜູ້ອົບພະຍົບແມ່ຍິງ (2014). ຂ້ອຍຢູ່ທີ່ນີ້: ເດັກຍິງໄວໜຸ່ມໃນກໍລະນີສຸກເສີນ: ວິທີການ ແລະເຄື່ອງມືສໍາລັບການແກ້ໄຂທີ່ດີຂຶ້ນ. ຄະນະກໍາມາທິການຜູ້ອົບພະຍົບແມ່ຍິງ ແລະອົງການ USAID. 2014.

21 UNFPA (2009). Adolescent Sexual and Reproductive Health Toolkit for Humanitarian Settings. New York: UNFPA and Save The Children. September, 2019

22 UNICEF, UNFPA, UN Women (2021). Ending Violence against Women and Children in Asia and the Pacific: Opportunities and Challenges for Collaborative and Integrative Approaches. Bangkok: UNICEF, UNFPA and UN Women.

23 The Alliance for Child Protection in Humanitarian Action, Minimum Standards for Child Protection in Humanitarian Action, 2019 Edition, 2019; and, Gender Based Violence Area of Responsibility (2019). The Inter-Agency Minimum Standards for Gender-Based Violence in Emergencies Programming. New York: International Rescue Committee, UNFPA and UNICEF.

24 Bhalla, Priyanka (2019). The responsibility to prevent and respond to sexual and gender-based violence in disasters and crises, International Federation of Red Cross and Red Crescent Societies.

# 5. ການປະຕິບັດວຽກງານສັງຄົມສົງເຄາະທີ່ມີຄຸນນະພາບ

ຫຼັກການພື້ນຖານ ແລະວິທີການທີ່ສະໜັບສະໜູນການປະຕິບັດວຽກສັງຄົມສົງເຄາະ ທີ່ມີຄຸນນະພາບສູງກ່ຽວກັບແມ່ຍິງ ແລະເດັກນ້ອຍທີ່ປະສົບກັບຄວາມຮຸນແຮງ ໄດ້ແກ່: ແນວທາງການເຮັດວຽກເພື່ອສັງຄົມດ້ານການສົ່ງເສີມ, ປ້ອງກັນ ແລະແກ້ໄຂ. ພວກເຂົາຈຳເປັນຕ້ອງໄດ້ຮັບການສະໜອງບໍລິການ ໂດຍພະນັກງານທີ່ມີຄວາມຊ່ຽວຊານ ຕາມທີ່ກຳນົດໄວ້ຢູ່ໃນແຜນວຽກງານອາຊຽນ. ການປະຕິບັດວຽກງານສັງຄົມສົງເຄາະ ຍັງຕ້ອງໄດ້ຮັບການແນະນຳໂດຍ ຊຸດບໍລິການທີ່ຈຳເປັນສຳລັບແມ່ຍິງ ແລະເດັກຍິງ ທີ່ຖືກໃຊ້ຄວາມຮຸນແຮງ, ເຊິ່ງມີຈຸດປະສົງເພື່ອໃຫ້ສາມາດເຂົ້າເຖິງການປະສານງານ ໃນການບໍລິການຫຼາຍຂະແໜງການທີ່ຈຳເປັນ ແລະມີຄຸນນະພາບສຳລັບແມ່ຍິງ ແລະເດັກຍິງທຸກຄົນ ທີ່ມີປະສົບການທາງຄວາມຮຸນແຮງບົນພື້ນຖານທາງເພດ. ໂດຍການຮັບປະກັນວ່າ ການບໍລິການທີ່ຈຳເປັນເຊັ່ນ: ການປິ່ນປົວທາງການແພດ, ການໃຫ້ຄຳປຶກສາ, ການຊ່ວຍເຫຼືອທາງດ້ານກົດໝາຍ, ທີ່ຢູ່ອາໄສທີ່ປອດໄພ, ແລະໂອກາດການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດແມ່ນກຽມພ້ອມໃຫ້ບໍລິການແລ້ວ, ຜູ້ຊ່ຽວຊານສາມາດສະໜອງການບໍລິການທີ່ຄົບຖ້ວນ ແລະມີຄຸນນະພາບສູງ ທີ່ຊ່ວຍຜູ້ລອດຊີວິດໃນການຟື້ນຟູແລະການສ້າງຄວາມເຂັ້ມແຂງຂອງພວກເຂົາໃນໄລຍະຍາວ.

## 5.1 ແນວທາງ ແລະຫຼັກການສຳຄັນ ຂອງການປະຕິບັດວຽກງານສັງຄົມສົງເຄາະ ກັບແມ່ຍິງ ແລະເດັກນ້ອຍ ທີ່ປະເຊີນກັບຄວາມຮຸນແຮງ

**ວິທີການທີ່ອີງໃສ່ສິດທິ:** ສິດທິຂອງແມ່ຍິງ ແລະເດັກນ້ອຍໃນການດຳລົງຊີວິດທີ່ປາສະຈາກຄວາມຮຸນແຮງແມ່ນສຳຄັນທີ່ສຸດ. ການສຸມໃສ່ສິດທິມະນຸດ ແມ່ນມີຄວາມຈຳເປັນສຳລັບການສະໜອງການບໍລິການທີ່ຈຳເປັນ ທີ່ມີຄຸນນະພາບສູງ, ໂດຍສະເພາະເມື່ອຕ້ອງການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກຍິງ. ແນວທາງດັ່ງກ່າວ ຍອມຮັບວ່າ ປະເທດສະມາຊິກອາຊຽນ ມີໜ້າທີ່ຕົ້ນຕໍໃນການສົ່ງເສີມສິດທິຂອງແມ່ຍິງ ແລະເດັກຍິງ, ລວມທັງສິດໃນການດຳລົງຊີວິດທີ່ປາສະຈາກຄວາມຮຸນແຮງ ແລະຄວາມຢ້ານ. ວິທີການສິດທິມະນຸດຮຽກຮ້ອງໃຫ້ ມີການບໍລິການທີ່ໃຫ້ຄວາມສຳຄັນກັບຄວາມປອດໄພ ແລະຄວາມເປັນຢູ່ທີ່ດີຂອງແມ່ຍິງ ແລະເດັກນ້ອຍ ແລະປະຕິບັດຕໍ່ແມ່ຍິງ ແລະເດັກນ້ອຍດ້ວຍກຽດສັກສີ, ເຄົາລົບນັບຖື ແລະມີຄວາມອ່ອນໄຫວ. ນອກຈາກນີ້, ຍັງຮຽກຮ້ອງໃຫ້ມີມາດຕະຖານທີ່ສູງທີ່ສຸດຂອງການບໍລິການທີ່ເປັນໄປໄດ້ ໄດ້ແກ່: ການບໍລິການທີ່ມີຄຸນນະພາບທີ່ດີ, ມີຄວາມພ້ອມ, ສາມາດເຂົ້າເຖິງ ແລະເປັນທີ່ຍອມຮັບຂອງແມ່ຍິງແລະເດັກນ້ອຍທຸກຄົນ.

**ຜົນປະໂຫຍດທີ່ດີທີ່ສຸດຂອງເດັກ:** ມາດຕາ 3, ວັກທີ 1 ໃນສົນທິສັນຍາວ່າດ້ວຍສິດທິເດັກ (CRC) ໃຫ້ສິດແກ່ເດັກນ້ອຍໄດ້ຮັບຜົນປະໂຫຍດສູງສຸດຂອງພວກເຂົາ ເປັນຄຳພິຈາລະນາຕົ້ນຕໍໃນການຕັດສິນໃຈໃດໆ ກ່ຽວກັບຄວາມເປັນຢູ່ທີ່ດີຂອງເດັກ.[25]

**ການພັດທະນາຄວາມສາມາດຂອງເດັກ:** ມາດຕາ 5 ໃນສົນທິສັນຍາວ່າດ້ວຍສິດທິເດັກ (CRC) ແນະນຳແນວຄວາມຄິດທີ່ວ່າເດັກນ້ອຍຄວນສາມາດນຳໃຊ້ສິດທິຂອງຕົນ ເມື່ອພວກເຂົາໄດ້ຮັບຄວາມສາມາດ ທີ່ຈະເຮັດສິ່ງນັ້ນ. ລັດຄວນພິຈາລະນາສິດທິນີ້ ໃນເວລາກຳນົດອາຍຸຂັ້ນຕ່ຳສຸດທີ່ກ່ຽວກັບບັນຫາໃດໜຶ່ງສະເພາະ. ຄວາມເຂົ້າໃຈກ່ຽວກັບຄວາມສາມາດໃນການພັດທະນາ ແມ່ນພື້ນຖານໃນການປະເມີນວຸດທິພາວະ ແລະຄວາມສາມາດໃນການຕັດສິນໃຈ. ສິ່ງນີ້ຊ່ວຍໃຫ້ພະນັກງານສັງຄົມສົງເຄາະ ສາມາດສະເໜີໃຫ້ເດັກນ້ອຍໄດ້ຮັບການປົກປ້ອງຢ່າງເຕັມສ່ວນ ຈາກໄພອັນຕະລາຍ ໃນຂະນະດຽວກັນກໍຮັກສາສິດທິຂອງພວກເຂົາ ໃນການມີເອກະລາດ ແລະເສລີພາບໃນການສະແດງອອກ.

**ແນວທາງທີ່ລະອຽດອ່ອນ ດ້ານບົດບາດຍິງ-ຊາຍ:** ເນື່ອງຈາກຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ແລະການຈຳແນກແມ່ນເປັນທັງສາເຫດ ແລະຜົນສະທ້ອນຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ, ການບໍລິການຄວນຮັບປະກັນວ່າ ມີນະໂຍບາຍ ແລະການປະຕິບັດທີ່ລະອຽດອ່ອນ ແລະຕອບສະໜອງຕໍ່ບົດບາດຍິງ-ຊາຍ. ການບໍລິການຕ້ອງຮັບປະກັນວ່າຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍຈະບໍ່ຖືກລະເວັ້ນໂທດ, ຍອມຮັບ ຫຼືກະທຳສືບຕໍ່ໄປ.

25 Committee on the rights of the Child (2013) General comment No. 14 (2013) on the right of the child to have his or her best interests taken as a primary consideration (art. 3, para. 1) https://www2.ohchr.org/english/bodies/crc/docs/gc/crc_c_gc_14_eng.pdf

**ແນວທາງການມີສ່ວນຮ່ວມຂອງຄົນພິການ:** ແມ່ຍິງ ແລະເດັກນ້ອຍທີ່ມີຄວາມພິການ ກໍາລັງປະເຊີນກັບການຈໍາແນກສອງເທົ່າ ແລະຄວາມບໍ່ສະເໝີພາບ ບໍ່ພຽງແຕ່ອີງໃສ່ຕົວຕົນຂອງເຂົາເຈົ້າທີ່ເປັນແມ່ຍິງ ແລະ/ຫຼືເດັກນ້ອຍເທົ່ານັ້ນ ແຕ່ຍັງເປັນຜູ້ທີ່ໃຊ້ຊີວິດກັບຄວາມພິການ. ສະນັ້ນ, ການບໍລິການດ້ານສັງຄົມທີ່ສະໜອງໃຫ້ ຈຶ່ງຕ້ອງພິຈາລະນາຄວາມຕ້ອງການຂອງແມ່ຍິງ ແລະເດັກພິການ, ເຊັ່ນ : ສະພາບແວດລ້ອມທີ່ ແລະສິ່ງອໍານວຍຄວາມສະດວກເຂົ້າເຖິງໄດ້, ພາສາມື ແລະອຸປະກອນຊ່ວຍເຫຼືອເສີມ, ແນວທາງທີ່ແຕກຕ່າງສໍາລັບແມ່ຍິງ ແລະ ເດັກນ້ອຍ ທີ່ມີຄວາມພິການທາງສະຕິປັນຍາ, ແນວທາງທີ່ອ່ອນໄຫວທາງດ້ານສຸຂະພາບຈິດ ແລະສໍາຄັນທີ່ສຸດແມ່ນ ສິ່ງແວດລ້ອມທີ່ມີຄວາມປອດໄພ ເປັນບ່ອນທີ່ບໍ່ມີການຈໍາແນກ, ການດູຖູກ, ການປະຕິເສດ, ແລະສົມມຸດເອົາເອງ ຫຼືອະຄະຕິຕໍ່ຄົນກຸ່ມນີ້ ໃນການສະໜອງການບໍລິການ.

ຜູ້ລອດຊີວິດຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍທັງໝົດ, ຄວນໄດ້ຮັບອໍານາດໃນການປະຕິເສດການບໍລິການ ຫຼື ຕັດສິນໃຈວ່າຈະໄດ້ຮັບການບໍລິການໃດ ໂດຍຂຶ້ນກັບອາຍຸ ແລະຄວາມສາມາດຂອງພວກເຂົາ, ແລະ ເມື່ອໃດທີ່ຈະຄວນລາຍງານປະສົບການຄວາມຮຸນແຮງ. ພວກເຂົາຄວນຈະໄດ້ຮັບຂໍ້ມູນກ່ຽວກັບ ການບໍລິການທີ່ມີຢູ່ທັງຫມົດ ແລະຄວາມສ່ຽງທີ່ອາດຈະເກີດຂຶ້ນໃນການໄດ້ຮັບບໍລິການເຫຼົ່ານັ້ນ. ຜູ້ໃຫ້ບໍລິການຄວນສົ່ງຕໍ່ເມື່ອ ເມື່ອໄດ້ຮັບການຍິນຍອມເຫັນດີຈາກຜູ້ລອດຊີວິດເທົ່ານັ້ນ. ເຊັ່ນດຽວກັນ, ຂໍ້ມູນກ່ຽວກັບຜູ້ລອດຊີວິດຄວນຈະຖືກແບ່ງປັນລະຫວ່າງຜູ້ໃຫ້ບໍລິການ ພາຍຫຼັງທີ່ໄດ້ຮັບຄວາມຍິນຍອມແລ້ວເທົ່ານັ້ນ.[26] ມາດຕາ 12 ໃນສົນທິສັນຍາສະຫະປະຊາຊາດ ວ່າດ້ວຍສິດທິຂອງຄົນພິການ (CRPD) ກ່າວເຖິງການຍອມຮັບທີ່ເທົ່າທຽມກັນຕາມກົດໝາຍ ແລະຢັ້ງຢືນວ່າ ຄົນພິການຈະໄດ້ຮັບ ຄວາມສາມາດທາງດ້ານກົດໝາຍບົນພື້ນຖານທີ່ເທົ່າທຽມກັບຜູ້ອື່ນ. ມາດຕະການປ້ອງກັນໃດໜຶ່ງ ຈະຕ້ອງສະທ້ອນເຖິງຄວາມຕັ້ງໃຈ ແລະ ຄວາມມັກຂອງບຸກຄົນ ແລະມີຄວາມເໝາະສົມ[27] ສໍາລັບແມ່ຍິງ ແລະເດັກນ້ອຍທີ່ມີຄວາມພິການທາງສະຕິປັນຍາ ຫຼືທາງຈິດ ແລະ/ຫຼື ຄວາມພິການອື່ນໆ ທີ່ພວກເຂົາບໍ່ສາມາດຕັດສິນໃຈດ້ວຍຕົນເອງ ຫຼືຕ້ອງການຄວາມຊ່ວຍເຫຼືອໃນການຕັດສິນໃຈ, ການຊ່ວຍເຫຼືອໃນການຕັດສິນໃຈຈະຕ້ອງໄດ້ສະໜອງໃຫ້ ເພື່ອຜົນປະໂຫຍດຂອງຕົວບຸກຄົນ ແລະບຸກຄົນດັ່ງກ່າວເທົ່ານັ້ນ, ແລະຈະຕ້ອງໃຫ້ຄວາມຊ່ວຍເຫຼືອ ໂດຍອີງໃສ່ການຕົກລົງຂອງຄອບຄົວ, ຜູ້ເບິ່ງແຍງ ຫຼືໝູ່ເພື່ອນທີ່ໄວ້ໃຈໄດ້, ແລະອົງການຈັດຕັ້ງທີ່ກ່ຽວຂ້ອງ.

**ແນວທາງທີ່ເອົາ ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ເປັນໃຈກາງ:** ແນວທາງການເອົາ ຜູ້ເຄາະຮ້າຍ/ຜູ້ລອດຊີວິດ ເປັນໃຈກາງ ແມ່ນການຖືເອົາສິດທິ, ຄວາມຕ້ອງການ ແລະຄວາມປາຖະໜາຂອງແມ່ຍິງ ແລະເດັກຍິງ ເປັນຈຸດສຸມຂອງການໃຫ້ບໍລິການ. ສິ່ງເຫຼົ່ານີ້ຮຽກຮ້ອງໃຫ້ມີການ ພິຈາລະນາຄວາມຕ້ອງການທີ່ຫຼາກຫຼາຍ ຂອງຜູ້ຖືກເຄາະຮ້າຍ ແລະຜູ້ລອດຊີວິດ, ຄວາມສ່ຽງ ແລະຄວາມອ່ອນແອຕ່າງໆ, ຜົນກະທົບຂອງການຕັດສິນໃຈ ແລະການດໍາເນີນການ, ເພື່ອຮັບປະກັນໃຫ້ການບໍລິການສອດຄ່ອງກັບຄວາມຕ້ອງການສະເພາະຂອງແມ່ຍິງ ແລະເດັກຍິງແຕ່ລະບຸກຄົນ. ການບໍລິການຕ່າງໆຄວນລາຍງານຕາມຄວາມຕ້ອງຂອງແມ່ຍິງ ແລະເດັກຍິງ.[28] “ແນວທາງການເອົາຜູ້ລອດຊີວິດເປັນໃຈກາງ ສໍາລັບຄວາມຮຸນແຮງຕໍ່ແມ່ຍິງ ແມ່ນເພື່ອຊ່ວຍໃຫ້ຜູ້ລອດຊີວິດເຂັ້ມແຂງ ໂດຍການຈັດລໍາດັບຄວາມສໍາຄັນຂອງສິດທິ, ຄວາມຕ້ອງການ ແລະຄວາມປາດຖະໜາຂອງແມ່ຍິງ/ເດັກຍິງ ໂດຍສະເພາະສິດທິໃນຄວາມປອດໄພ, ການຮັກສາຄວາມລັບ, ການຕັດສິນໃຈດ້ວຍຕົນເອງ ແລະການບໍ່ຈໍາແນກ. ເຊິ່ງໝາຍເຖິງການຮັບປະກັນວ່າ ຜູ້ລອດຊີວິດສາມາດເຂົ້າເຖິງການບໍລິການທີ່ເຫມາະສົມ, ສາມາດເຂົ້າເຖິງໄດ້ແລະມີຄຸນນະພາບດີ ລວມທັງ: (i) ການປິ່ນປົວສຸຂະພາບ (ii) ການຊ່ວຍເຫຼືອທາງດ້ານຈິດໃຈ ແລະສັງຄົມ (iii) ຄວາມປອດໄພ ແລະ (iv) ການບໍລິການທາງດ້ານກົດໝາຍ”.[29] ແນວທາງນີ້ເຂົ້າໃຈດີວ່າ ຄວາມປອດໄພ ແລະຄວາມເປັນຢູ່ທີ່ດີ ຂອງຜູ້ລອດຊີວິດຈາກຄວາມຮຸນແຮງ ທັງເດັກນ້ອຍ ແລະຜູ້ໃຫຍ່ ແມ່ນເຊື່ອມໂຍງກັນຢ່າງບໍ່ສາມາດແຍກອອກໄດ້, ແລະຜູ້ລອດຊີວິດ ທັງເດັກນ້ອຍ ແລະຜູ້ໃຫຍ່ຈະປອດໄພຂຶ້ນ ແລະດີຂຶ້ນໂດຍລວມ ເມື່ອມີການວາງແຜນຮ່ວມກັບພວກເຂົາ ແລະເຊື່ອມສານທັດສະນະຂອງພວກເຂົາເຂົ້ານໍາ.[30]

ດັ່ງນັ້ນ, ການບໍລິການຕ່າງໆ ຕ້ອງຕອບສະຫນອງຕໍ່ບຸກຄົນ ແລະສະຖານະການສະເພາະ ແລະປະສົບການຊີວິດ ຂອງຜູ້ຖືກເຄາະຮ້າຍ / ຜູ້ລອດຊີວິດ ໂດຍຄໍານຶງເຖິງອາຍຸ, ລັກສະນະຕົວຕົນ, ວັດທະນະທໍາ, ຊົນເຜົ່າ ແລະພາສາ, ໂດຍອີງໃສ່ **ຫຼັກການຄວາມປອດໄພ ແລະບໍ່ຈໍາແນກ.** ການບໍລິການຕ່າງໆ ຕ້ອງໃຫ້ຄວາມສໍາຄັນກັບຄວາມປອດໄພຂອງຜູ້ເຄາະຮ້າຍ/ຜູ້ລອດຊີວິດ ແລະຫຼີກລ່ຽງການກໍ່ໃຫ້ເກີດອັນຕະລາຍເພີ່ມເຕີມຕໍ່ພວກເຂົາ. ຜູ້ລອດຊີວິດທັງໝົດມີສິດໄດ້ຮັບການປິ່ນປົວແບບດຽວກັນ ແລະການເຂົ້າເຖິງການບໍລິການເທົ່າທຽມກັນ.

26 UN Women, UNFPA, UNDP, WHO and UNODC (2015). Essential Services Package for Women and Girls Subject to Violence
27 Plain text version of General Comment No.1 (2014), Article 12: Equal recognition before the law https://tbinternet.ohchr.org/_layouts/15/TreatyBodyExternal/Download.aspx?symbolno=CRPD/C/GC/1%2 0Plain%20English%20version&Lang=en
28 Essential Sevices Package Modul 1
29 UN Women, 3 July 2013, Survivor-centered approach https://www.endvawnow.org/en/articles/1499-survivor-centred- approach.html
30 Futures without Violence (2013) Adult & child survivor-centered approach for addressing domestic violence. https://dvchildwelfare.org/wp-content/uploads/2019/03/FWV-QIC-ACSCA-Overview-05-Final-Online.pdf

## 5.2 ປະເພດຫຼັກ ຂອງການປະຕິບັດວຽກງານສັງຄົມສົງເຄາະ

### 5.2.1 ວຽກງານສັງຄົມສົງເຄາະດ້ານການສົ່ງເສີມ

ວຽກງານສັງຄົມສົງເຄາະດ້ານການສົ່ງເສີມ (Promotive social work) ແມ່ນແນວທາງທີ່ຕັ້ງໜ້າໃນວຽກງານສັງຄົມສົງເຄາະ ທີ່ສຸມໃສ່ສະກັດກັ້ນບັນຫາສັງຄົມທີ່ເກີດຂຶ້ນ ໂດຍຜ່ານການສົ່ງເສີມຄວາມເປັນຢູ່ທີ່ດີທາງສັງຄົມ, ເສດຖະກິດ, ທາງດ້ານການເມືອງຂອງບຸກຄົນ ແລະຊຸມຊົນ. ວຽກງານສົ່ງເສີມສັງຄົມສົງເຄາະ ແມ່ນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຊຸກຍູ້ລະບົບວຽກງານສັງຄົມສົງເຄາະທີ່ເຂັ້ມແຂງ. ລວມທັງຜ່ານການຊຸກຍູ້ ແລະພັດທະນາຂອບວຽກງານທາງດ້ານນິຕິກຳ ແລະນະໂຍບາຍ, ງົບປະມານ, ໂຄງປະກອບການບໍລິການ ແລະການປະສານງານ, ລະບຽບການ ແລະຂະບວນການບໍລິການສັງຄົມທີ່ປ້ອງກັນ ແລະແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ. ວິທີການນີ້ຍັງຮຽກຮ້ອງໃຫ້ມີ ການສົ່ງເສີມການປ່ຽນແປງຂອງສັງຄົມ ທີ່ມີສ່ວນຮ່ວມກັບທຸກໆຄົນ ໃນສະພາບການຂອງຊີວິດປະຈຳວັນເຊັ່ນ: ໂຄງການໂຮງຮຽນ ແລະບ່ອນເຮັດວຽກທີ່ສຸມໃສ່ການເຄົາລົບ ແລະຄວາມສະເໝີພາບທາງເພດ, ລວມທັງການເພີ່ມທະວີການຮັບຮູ້ເຖິງຜົນສະທ້ອນຂອງຄວາມຮຸນແຮງ.

### 5.2.2 ວຽກງານສັງຄົມສົງເຄາະດ້ານການປ້ອງກັນ

ວຽກງານສັງຄົມສົງເຄາະດ້ານການປ້ອງກັນ (Preventive social work) ໃນສະພາບການຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍປະກອບດ້ວຍການກຳນົດ ແລະແກ້ໄຂສາເຫດ ແລະປັດໄຈສ່ຽງທີ່ພາໃຫ້ເກີດຄວາມຮຸນແຮງດັ່ງກ່າວ ໂດຍມີເປົ້າໝາຍເພື່ອປ້ອງກັນບໍ່ໃຫ້ເກີດຂຶ້ນຕັ້ງແຕ່ຂັ້ນທຳອິດ. ນອກຈາກນີ້ຍັງລວມເຖິງ ການປ້ອງກັນຜົນກະທົບຂັ້ນທີສອງ ຂອງຄວາມຮຸນແຮງ ແລະວົງຈອນຄວາມຮຸນແຮງນຳອີກ. ສິ່ງນີ້ຮຽກຮ້ອງໃຫ້ມີ ແຜນງານປ້ອງກັນ ທີ່ມີຄວາມອ່ອນໄຫວຕໍ່ເດັກນ້ອຍ ແລະມີການຫັນປ່ຽນທາງດ້ານບົດບາດຍິງຊາຍ. ຄວນໄດ້ຮັບການແຈ້ງຂໍ້ມູນໂດຍຕົວແບບລະບົບນິເວດສັງຄົມ, ເຊິ່ງເຂົ້າໃຈຄວາມຕ້ອງການ, ຄວາມສ່ຽງ ແລະປັດໄຈປ້ອງກັນ ໃນສະພາບການຂອງການພົວພັນລະຫວ່າງບຸກຄົນ, ຄອບຄົວ, ສາຍພົວພັນທີ່ກວ້າງຂຶ້ນ, ຊຸມຊົນ, ແລະປັດໄຈທາງສັງຄົມ.[31] ວຽກງານສັງຄົມສົງເຄາະດ້ານການປ້ອງກັນ ໃນສະພາບການນີ້ອາດຈະກ່ຽວຂ້ອງກັບ:

- ການກຳນົດ ແລະແກ້ໄຂບັນດາບັນທັດຖານໃນແງ່ລົບທາງດ້ານສັງຄົມ ແລະວັດທະນະທຳ ທີ່ຍອມຮັບຄວາມຮຸນແຮງ, ສ້າງຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ແລະຄວາມບໍ່ສົມດຸນດ້ານຄວາມເຂັ້ມແຂງ, ການປະນາມ (stigmatize) ແລະຈຳແນກຕໍ່ຄົນພິການ, ເຊິ່ງຈຳກັດການລາຍງານ ແລະການສະໜັບສະໜູນເພື່ອຢຸດການໃຊ້ຄວາມຮຸນແຮງ;[32]
- ການອອກແບບ ແລະຈັດຕັ້ງປະຕິບັດໂຄງການການອົບຮົມສັ່ງສອນເດັກ (parenting) ທີ່ສະໜັບສະໜູນໃຫ້ພໍ່ແມ່ ແລະຜູ້ເບິ່ງແຍງ ເສີມສ້າງຄວາມສຳພັນກັບລູກຫຼານຂອງພວກເຂົາ ແລະສົ່ງເສີມການພັດທະນາເດັກໃນແງ່ບວກ ໂດຍນຳໃຊ້ວິໄນທາງບວກທີ່ບໍ່ໃຊ້ຄວາມຮຸນແຮງ ແລະແນວທາງມີຄວາມອ່ອນໄຫວຕໍ່ຄວາມພິການ;
- ການກຳນົດຄວາມຫຍຸ້ງຍາກໃນການພັດທະນາ ແລະການບໍລິການສະໜັບສະໜູນຕັ້ງແຕ່ເລີ່ມຕົ້ນ;
- ການສ້າງເສັ້ນທາງການສົ່ງຕໍ່ໄປຫາ ຜົນປະໂຫຍດທາງດ້ານສຸຂະພາບ, ການສຶກສາ ແລະການປົກປ້ອງສັງຄົມ, ການບໍລິການ ແລະສິດທິຕ່າງໆ
- ເຮັດວຽກກັບຜູ້ທີ່ມີບົດບາດອື່ນໆ ທີ່ມີອິດທິພົນໃນຊຸມຊົນ ແລະສັງຄົມ ທາງດ້ານຄວາມຄິດເຫັນ ແລະ/ຫຼື ຜູ້ນຳທາງສາດສະໜາ.
- ເສີມສ້າງຄວາມສາມາດໃຫ້ແກ່ເດັກນ້ອຍ ແລະແມ່ຍິງ, ລວມທັງຄົນພິການ, ໃນການປ້ອງກັນຄວາມຮຸນແຮງ
- ອອກແບບ ແລະປະຕິບັດຍຸດທະສາດການສື່ສານ ໃນສື່ປະເພດຕ່າງໆ ທີ່ແມ່ຍິງ ແລະເດັກນ້ອຍ ທີ່ມີຄວາມພິການ ສາມາດເຂົ້າເຖິງໄດ້ ເພື່ອສົ່ງເສີມພຶດຕິກຳໃນແງ່ບວກ, ລວມທັງການເບິ່ງແຍງໃນແງ່ບວກ, ເປັນແນວທາງປ້ອງກັນ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ.

ວຽກງານສັງຄົມສົງເຄາະດ້ານການປ້ອງກັນ ແມ່ນ **ອີງໃສ່ຫຼັກຖານ, ການສະໜັບສະໜູນລິເລີ່ມໃນທ້ອງຖິ່ນ,** ເຊິ່ງຄວນໄດ້ຮັບການທົບທວນໂດຍຜູ້ຊ່ຽວຊານ ທາງດ້ານຄວາມຮຸນແຮງຕໍ່ເດັກ ແລະຄວາມຮຸນແຮງຕໍ່ແມ່ຍິງ, ມີການດັດແປງຕາມຄວາມເໝາະສົມ, ປະເມີນຜົນ ແລະຂະຫຍາຍຂະໜາດຂຶ້ນ ຫາກເຫັນວ່າມີປະສິດຕິພາບ.

31 World Health Organization (WHO) (2019). Respect Women: Preventing Violence against Women. Geneva: WHO. Center for Disease Control: The Social-Ecological Model: A Framework for Prevention https://www.cdc.gov/violenceprevention/about/social-ecologicalmodel.html

32 Kenny L, Cislaghi, B, et. Al. (2019). Addressing Social Norms at the VAC/VAW Intersection Learning Group on Social Norms and Gender-related Harmful Practices Convened by the Gender, Violence and Health Centre of the Long School of Hygiene and Tropical Medicine Accessed at LearningGroup_2019_social_norms_vawvac_report.pdf (prevention-collaborative.org) p 14

ຢ່າງໜ້ອຍທີ່ສຸດ, **ມາດຕະການປ້ອງກັນ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ຄວນສົ່ງເສີມກັນ.** ການປະສານງານ, ຂໍ້ມູນ ແລະການແລກປ່ຽນປະສົບການລະຫວ່າງໂຄງການປ້ອງກັນ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ສາມາດສະໜັບສະໜູນສິ່ງນີ້ໄດ້. ໃນກໍລະນີທີ່ມີຄວາມກ່ຽວຂ້ອງ ແລະເໝາະສົມ, **ມາດຕະການປ້ອງກັນ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ອາດຈະຖືກດັດແປງ ຫຼືເຊື່ອມສານເພື່ອແກ້ໄຂຄວາມຮຸນແຮງທັງສອງຮູບແບບ.** ຢ່າງໃດກໍ່ຕາມ, ສິ່ງນີ້ອາດຈະບໍ່ເປັນທີ່ຕ້ອງການ ຫຼືເປັນໄປໄດ້ສະເໝີໄປ ຂຶ້ນຢູ່ກັບປະເພດຂອງມາດຕະການ. ຂໍ້ລິເລີ່ມໃນການປ້ອງກັນຂັ້ນຕົ້ນ ໃນລະດັບທ້ອງຖິ່ນຄວນເສີມສ້າງ ແລະກໍ່ສ້າງຄວາມຄິດລິເລີ່ມດ້ານການປ້ອງກັນ ແລະການສຶກສາອົບຮົມທົ່ວປວງຊົນ ໃນລະດັບຊາດ ເຊິ່ງເປັນບ່ອນທີ່ສິ່ງເຫຼົ່ານີ້ກຳລັງເກີດຂຶ້ນ.

ມາດຕະການການປ້ອງກັນ ໂດຍອີງໃສ່ຫຼັກຖານສຳຄັນ ທີ່ເຊື່ອມສານການປ້ອງກັນ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໄດ້ແກ່:

- **ໂຄງການປ້ອງກັນຄວາມຮຸນແຮງໃນໂຮງຮຽນ, ເຊິ່ງເປັນແນວທາງທີ່ໃຊ້ກັບໂຮງຮຽນ ຫຼືການສຶກສາທັງໝົດ;**[33]
- ການເຊື່ອມສານຄວາມຄິດລິເລີ່ມໃນການປ້ອງກັນ ຄວາມຮຸນແຮງຕໍ່ເດັກ ແລະຄວາມຮຸນແຮງຕໍ່ເດັກນ້ອຍ **ເຂົ້າໃນໂຄງການພັດທະນາການອົບຮົມສັ່ງສອນເດັກນອຍ;**[34]
- **ໂຄງການຄຸ້ມຄອງທາງດ້ານສັງຄົມ** ທີ່ມີປະສິດຕິຜົນໃນການຮັບມືກັບ ຄວາມໝັ້ນຄົງທາງເສດຖະກິດ ແລະ ຄວາມຊັບຊ້ອນຂອງ ຄວາມເຂັ້ມແຂງ/ບົດບາດຍິງ-ຊາຍ ໃນຂະນະທີ່ພ້ອມກັນຫຼຸດຜ່ອນຄວາມກົດດັນຕໍ່ຄອບຄົວ ທີ່ສາມາດເຮັດໃຫ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍຮ້າຍແຮງຂຶ້ນ.[35]

ຂໍ້ລິເລີ່ມປ້ອງກັນເບື້ອງຕົ້ນຄວນຊອກຫາການມີສ່ວນຮ່ວມຢ່າງສ້າງສັນຂອງຜູ້ຊາຍ ແລະ ເດັກຊາຍ, ເພື່ອຄົ້ນຫາ ແລະ ທ້າທາຍທັດສະນະ ແລະ ມາດຕະຖານສັງຄົມທີ່ຕິດພັນກັບຄວາມເປັນຊາຍທີ່ຍອມຮັບຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ເພື່ອຊ່ວຍໃຫ້ເຂົາເຈົ້າພັດທະນາວິທີການຄິດໃໝ່ ດ້ວຍການເວົ້າ ແລະ ການສະແດງ.[36]

### 5.2.3 ວຽກງານສັງຄົມສົງເຄາະດ້ານການແກ້ໄຂ

ວຽກງານສັງຄົມສົງເຄາະດ້ານການແກ້ໄຂ (Responsive social work) ກ່ຽວຂ້ອງກັບການສະໜອງການບໍລິການເພື່ອປົກປ້ອງ ແລະຊ່ວຍເຫຼືອແມ່ຍິງ ແລະເດັກນ້ອຍຜູ້ຖືກເຄາະຮ້າຍ ແລະຜູ້ລອດຊີວິດຈາກຄວາມຮຸນແຮງ ລວມທັງການຄຸ້ມຄອງກໍລະນີ, ການຊ່ວຍເຫຼືອທາງດ້ານຈິດໃຈ, ແລະການສົ່ງຕໍ່ຫາບໍລິການທາງການແພດ ແລະສຸຂະພາບທາງເພດ ແລະສຸຂະພາບຈະເລີນພັນ ເພື່ອຊ່ວຍຊີວິດ, ຄຳແນະນຳດ້ານກົດໝາຍ ແລະຄວາມປອດໄພ ພ້ອມທັງການບໍລິການອື່ນໆຕາມຄວາມຈຳເປັນ. ມັນຍັງກ່ຽວຂ້ອງກັບການປະສານງານ ແລະການເຊື່ອມໂຍງການບໍລິການເຫຼົ່ານີ້ໃນທົ່ວຂະແໜງການ, ສະຫນັບສະຫນູນໂດຍການບໍລິຫານຄຸ້ມຄອງຂໍ້ມູນແບບປະສົມປະສານ.

ເນື່ອງຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ເຮັດໃຫ້ເກີດຄວາມເສຍຫາຍທາງດ້ານຮ່າງກາຍ, ຈິດໃຈ ແລະສັງຄົມທີ່ເປັນອັນຕະລາຍ ເຊິ່ງສ່ວນໃຫຍ່ແມ່ນຕ້ອງການຂໍ້ມູນ ແລະການເບິ່ງແຍງຈາກຜູ້ໃຫ້ບໍລິການຫຼາຍບ່ອນ, ການຄຸ້ມຄອງກໍລະນີຕ່າງໆ ໄດ້ກາຍເປັນສ່ວນຫນຶ່ງຂອງການແກ້ໄຂ. ການຄຸ້ມຄອງກໍລະນີຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ແມ່ນວິທີການທີ່ມີໂຄງສ້າງ ໃນການສະຫນອງການຊ່ວຍເຫຼືອແກ່ ຜູ້ຖືກເຄາະຮ້າຍ / ຜູ້ລອດຊີວິດ ໂດຍທີ່ແຕ່ລະບຸກຄົນໄດ້ຖືກແຈ້ງໃຫ້ຮູ້ ກ່ຽວກັບທາງເລືອກທັງຫມົດທີ່ມີຢູ່ ແລະບັນຫາທີ່ຜູ້ຖືກເຄາະຮ້າຍ / ຜູ້ລອດຊີວິດກຳລັງປະເຊີນ ແມ່ນຈະໄດ້ຮັບການກຳນົດ ແລະຕິດຕາມຜົນດ້ວຍວິທີການປະສານງານກັນ.

ການສະໜັບສະໜູນທາງດ້ານຈິດໃຈ ໃຫ້ແກ່ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ຕະຫຼອດຂະບວນການ ການຄຸ້ມຄອງກໍລະນີ ຍັງກາຍເປັນຈຸດເລີ່ມຕົ້ນຫຼັກສຳລັບ ຜູ້ຖືກເຄາະຮ້າຍ / ຜູ້ລອດຊີວິດ ທີ່ຈະໄດ້ຮັບການຊ່ວຍເຫຼືອ ໃນພາວະວິກິດການ ແລະການສະຫນັບສະໜູນທາງດ້ານຈິດໃຈໃນໄລຍະຍາວ.[37]

33 Gevers, A., and K. Taylor (2018). Promising strides toward ending violence against women and girls in the Asia and the Pacific region: Results from Partners for Prevention pilot interventions in four countries. Bangkok: Partners for Prevention.
34 Coore Desai, C., J. A. Reece and S. Shakespeare-Pellington (2017). The prevention of violence in childhood through parenting programmes: a global review. Psychology, Health & Medicine, vol. 22, no. 1, pp. 166-186.
35 United Nations Children's Fund (UNICEF) (2020). Promoting an understanding of the intersection between violence against women and children: Global frameworks - how does INSPIRE and RESPECT support an intersectional approach? Webinar. September, 2020.
36 Commonwealth of Australia. (2022) National plan to end violence against women and children 2022-2032, Australia.
37 http://www.gbvims.com/wp/wp-content/uploads/Interagency-GBV-Case-Management-Guidelines_Final_2017.pdf

ຮູບແບບການຄຸ້ມຄອງກໍລະນີ ໃນວຽກງານສັງຄົມສົງເຄາະ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກແຕກຕ່າງກັນໄປຕາມ ແນວຄິດວິທີການທີ່ຫຼາກຫຼາຍ (spectrum) ຈາກແບ່ງແຍກໄປສູ່ການເຊື່ອມສານ ກວມເອົາການບໍລິການທີ່ຫຼາກຫຼາຍ ນັບແຕ່ແນວທາງປະຕິບັດໃນການປະສານງານການບໍລິການລະຫວ່າງໜ່ວຍງານ ໄປຫາທີມງານຄຸ້ມຄອງກໍລະນີ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ຮ່ວມກັນ.

ການບໍລິການຄຸ້ມຄອງກໍລະນີຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ກ່ຽວຂ້ອງກັບພະນັກງານສັງຄົມສົງເຄາະ ຫຼື ຜູ້ຊ່ຽວຊານທີ່ເຮັດວຽກກັບຜູ້ໃຊ້ບໍລິການ ເພື່ອປະເມີນຄວາມຕ້ອງການຂອງພວກເຂົາ, ຊ່ອຍກະກຽມ ແລະ ປະສານງານການບໍລິການ ລວມທັງຜູ້ສະໜັບສະໜູນໃນນາມຂອງເຂົາເຈົ້າ.[38] ທີ່ສໍາຄັນທີ່ສຸດ ວຽກງານສັງຄົມສົງເຄາະ ດ້ານການແກ້ໄຂ ຈໍາເປັນຕ້ອງລວມເອົາ ການປະເມີນຄວາມສ່ຽງຕາມຫຼັກຖານເພື່ອໃຫ້ພິຈາລະນາ ການພັດທະນາມາດຕະການທີ່ເຫມາະສົມ ແລະປອດໄພສໍາລັບແມ່ຍິງ ແລະເດັກນ້ອຍ.

ຕົວຢ່າງແນວທາງການສົ່ງມອບການບໍລິການ

| **ອິນໂດເນເຊຍ** | **ຫວຽດນາມ** |
|---|---|
| ສູນບໍລິການແມ່ຍິງ ແລະເດັກນ້ອຍຂັ້ນແຂວງ ແລະຂັ້ນເມືອງ. ຮັບຜິດຊອບໂດຍພະນັກງານເບິ່ງແຍງກໍລະນີການປົກປ້ອງເດັກ ແລະການສ້າງຄວາມເຂັ້ມແຂງແກ່ແມ່ຍິງ, ໃຫ້ບໍລິການໂດຍກົງ; ໂຄງການຊ່ວຍເຫຼືອທາງສັງຄົມສໍາລັບໂຄງການສ້າງຄວາມເຂັ້ມແຂງໃຫ້ເດັກນ້ອຍ ແລະແມ່ຍິງ ເພື່ອຫຼຸດຜ່ອນຄວາມຮຸນແຮງໃນຄອບຄົວ | ກະຊວງແຮງງານ, ຄົນພິການ ແລະສັງຄົມ ພະແນກການຊ່ວຍເຫຼືອໃນຂັ້ນແຂວງ, ເມືອງ ແລະເຂດ, ພະນັກງານສັງຄົມສົງເຄາະ ແລະ/ຫຼື ພະນັກງານຄຸ້ມຄອງກໍລະນີ, ໂດຍມີໜ້າທີ່ຮັບຜິດຊອບດ້ານສະຫວັດດີການສັງຄົມ |

ການປະສານງານລະຫວ່າງການບໍລິການຕ່າງໆ ຍັງຕ້ອງອີງໃສ່ຫຼັກການຂອງການແລກປ່ຽນຂໍ້ມູນຂ່າວສານທີ່ປອດໄພ ແລະມີຈັນຍາບັນ. ນີ້ເປັນສິ່ງສໍາຄັນໂດຍສະເພາະໃນກໍລະນີເກີດຂຶ້ນຮ່ວມກັນ, ເຊິ່ງທັງເດັກນ້ອຍ ແລະແມ່ປະສົບກັບຄວາມຮຸນແຮງ.

### 5.2.4 ວຽກງານສັງຄົມສົງເຄາະ ດ້ານການຟື້ນຟູ

ວຽກງານສັງຄົມສົງເຄາະ ດ້ານການຟື້ນຟູ ແລະປິ່ນປົວ ແມ່ນເພື່ອແກ້ໄຂຜົນກະທົບໃນໄລຍະສັ້ນ, ໄລຍະຍາວ, ແລະຕະຫຼອດຊີວິດ ຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ, ຕາມດ້ວຍການຕອບສະໜອງເບື້ອງຕົ້ນທີ່ສຸມໃສ່ຄວາມສ່ຽງ ແລະຄວາມປອດໄພໃນ, ແລະແນໃສ່ສິ່ງເສີມການຟື້ນຟູດ້ານການເງິນ, ສັງຄົມ, ຈິດໃຈ, ຄວາມຮູ້ສຶກ ແລະຜົນກະທົບທາງຮ່າງກາຍ ຈາກຄວາມຮຸນແຮງ. ການບໍລິການຟື້ນຟູຄວນຄໍານຶງເຖິງ ການຊ່ວຍເຫຼືອບາດແຜທາງຈິດໃຈທີ່ຮຸນແຮງ (trauma), ຄໍານຶງເຖິງການເອົາບຸກຄົນເປັນໃຈກາງ, ສຸມໃສ່ການຟື້ນຕົວພາຍຫຼັງການໄດ້ຮັບບາດແຜນທາງຈິດໃຈຮຸນແຮງ, ແລະປັບປຸງໃຫ້ແທດເໝາະກັບຄວາມຕ້ອງການທີ່ແຕກຕ່າງກັນຂອງແມ່ຍິງ ແລະ ເດັກນ້ອຍ.[39]

ວຽກງານສັງຄົມ ທາງດ້ານການຟື້ນຟູ ຊ່ອຍແກ້ໄຂຄວາມຕ້ອງການສະເພາະຂອງຜູ້ລອດຊີວິດ ໂດຍອີງໃສ່ລັກສະນະສະເພາະຂອງພວກເຂົາ, ລວມທັງອາຍຸ, ສັນຊາດ, ຊົນເຜົ່າ, ສາດສະໜາ, ການເຄື່ອນຍ້າຍ ແລະສະຖານະຄວາມພິການ.

## 5.3 ການສ້າງຄວາມດຸ່ນດ່ຽງ ລະຫວ່າງການປະສານກົມກຽວ ແລະ ຄວາມຊ່ຽວຊານໃນການບໍລິການສັງຄົມສົງເຄາະ ໃນຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ

ເຊື່ອມໂຍງການບໍລິການ ແລະການເຊື່ອມສານ, ໃນຂະນະທີ່ເປົ້າຫມາຍທີ່ສໍາຄັນໃນຕົວຂອງມັນເອງ, ບໍ່ຄວນເຮັດໃຫ້ຄວາມຊ່ຽວຊານທີ່ກ່ຽວຂ້ອງຫຼຸດລົງ ຫຼືຫຼຸດຜ່ອນການເຂົ້າເຖິງການບໍລິການສະເພາະດ້ານ ຂອງມາຜູ້ໃຊ້ບໍລິການ ຄວາມຕ້ອງການ ແລະຄວາມພໍໃຈຕໍ່ຮູບແບບການບໍລິການ. ການບໍລິການທີ່ກ່ຽວຂ້ອງກັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ຄວນຊອກຫາວິທີທີ່ຈະຮັກສາຄວາມຊ່ຽວຊານ ແລະການປະຕິບັດຕາມຫຼັກການແນະນໍາ ແລະແນວທາງທີ່ກ່ຽວຂ້ອງ. "ຄວາມສ່ຽງທີ່ອາດມີຕໍ່ຄວາມເປັນສ່ວນຕົວ ແລະການຮັກສາຄວາມລັບ ຕະຫຼອດຮອດການປ່ຽນແປງຄວາມຕ້ອງການ ຄວນໄດ້ຮັບການຕິດຕາມກວດກາ ແລະບັນເທົາ, ເພື່ອຫຼີກເວັ້ນການສູນເສຍຄຸນນະພາບ ແລະຄວາມພ້ອມຂອງການບໍລິການ."

38 Global Social Service Workforce Alliance, 2018
39 Commonwealth of Australia. (2022) National plan to end violence against women and children 2022-2032, Australia.

ພ້ອມທັງຮັບປະກັນການປະສານງານທີ່ມີປະສິດຕິພາບ ໃນການໃຫ້ບໍລິການ. ໃນກໍລະນີທີ່ດໍາເນີນການແບບເຊື່ອມສານ, ການບໍລິການດ້ານວຽກງານສັງຄົມສົງເຄາະ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ທີ່ມີການປະສານງານທີ່ດີ ຈໍາເປັນຕ້ອງການຄວາມຄຸ້ນເຄີຍກັບຄວາມຊ່ຽວຊານສະເພາະດ້ານທີ່ກ່ຽວຂ້ອງ ລະຫວ່າງຜູ້ໃຫ້ບໍລິການ. ພະນັກງານສັງຄົມສົງເຄາະຄວນເຂົ້າໃຈແນວທາງຕ່າງໆ ສໍາລັບເດັກ, ໄວໜຸ່ມ, ຜູ້ລອດຊີວິດ ທີ່ເປັນຜູ້ໃຫຍ່, ແລະຄົນພິການ ລວມທັງການພົວພັນທີ່ກ່ຽວຂ້ອງກັບການຕັດສິນໃຈ ແລະການຮັກສາຄວາມລັບຂອງຜູ້ໃຊ້ບໍລິການ[40]

ການຮັບຮອງເອົາແນວທາງການປະສານງານ ແລະການປະສົມກົມກຽວ ທີ່ເອົາຜູ້ລອດຊີວິດເປັນໃຈກາງ ສາມາດເປັນປະໂຫຍດ. "ລະບົບການບໍລິການທີ່ເອົາຜູ້ລອດຊີວິດເປັນໃຈກາງ ຮຽກຮ້ອງໃຫ້ມີມາດຕະຖານຂັ້ນຕໍ່າ ເພື່ອຮັບປະກັນຄຸນນະພາບ ແລະຄວາມສະໝໍ່າສະເໝີ. ພາຍໃຕ້ແນວທາງລະບົບທີ່ເອົາຜູ້ລອດຊີວິດເປັນໃຈກາງ, ການບໍລິການຕ່າງໆ ຈະຕ້ອງຮັບຮູ້ເຊິ່ງກັນແລະກັນ, ແລະມີການກໍານົດເສັ້ນທາງການສົ່ງຕໍ່ໄວ້ຢ່າງຈະແຈ້ງ. ສິ່ງເຫຼົ່ານີ້ຈະຮັກສາຄວາມລັບຂອງຜູ້ຖືກເຄາະຮ້າຍ-ຜູ້ລອດຊີວິດ ແລະຈໍາກັດຈໍານວນຄັ້ງທີ່ພວກເຂົາຕ້ອງເລົ່າເລື່ອງຂອງຕົນຊໍ້າຄືນ. ລະບົບການບໍລິການທີ່ເອົາຜູ້ລອດຊີວິດເປັນໃຈກາງແມ່ນຕ້ອງທັນເວລາ, ປອດໄພ, ມີສ່ວນຮ່ວມ, ສະເພາະເຈາະຈົງ ແລະເຂົ້າເຖິງໄດ້, ສະໜອງການບໍລິການສະເພາະແບບເຊື່ອມສານ ທີ່ເສີມສ້າງຄວາມຕ້ອງການທີ່ຈະເຮັດວຽກຮ່ວມກັນເພື່ອຢຸດຕິຄວາມຮຸນແຮງບົນພື້ນຖານທາງເພດ".[41]

**ຄໍາແນະນໍາສໍາລັບການເຮັດວຽກກັບຜູ້ລອດຊີວິດ ທີ່ເປັນເດັກນ້ອຍ, ໄວໜຸ່ມ ແລະຜູ້ໃຫຍ່**[42]

| | **ຜູ້ລອດຊີວິດ<br>ເດັກນ້ອຍ** | **ຜູ້ລອດຊີວິດ<br>ໄວໜຸ່ມຍິງ** | **ຜູ້ລອດຊີວິດ<br>ແມ່ຍິງ ທີ່ເປັນຜູ້ໃຫຍ່** |
|---|---|---|---|
| ການຕັດສິນໃຈ | **ໃຫ້ເດັກມີສ່ວນຮ່ວມໃນການຕັດສິນໃຈ.**<br>ເດັກນ້ອຍມີສິດເຂົ້າຮ່ວມໃນການຕັດສິນໃຈທີ່ມີຜົນກະທົບຊີວິດຂອງເຂົາເຈົ້າ. ລະດັບການມີສ່ວນຮ່ວມໃນການຕັດສິນໃຈຄວນເໝາະສົມກັບລະດັບວຸດທິພາວະ ແລະອາຍຸຂອງເດັກ. ຜູ້ໃຫ້ບໍລິການຄວນຈັດການກັບເດັກຢ່າງໂປ່ງໃສ ດ້ວຍຄວາມເຄົາລົບສູງສຸດ, ເຖິງແມ່ນວ່າຈະບໍ່ສາມາດປະຕິບັດຕາມຄວາມປາດຖະໜາຂອງເດັກໄດ້ ເນື່ອງຈາກຄໍານຶງເຖິງຜົນປະໂຫຍດສູງສຸດແລ້ວກໍຕາມ. | **ເຄົາລົບຄວາມສາມາດໃນການພັດທະນາຂອງໄວໜຸ່ມ ໃນການຕັດສິນໃຈ.**<br>ຜູ້ໃຫ້ບໍລິການຄວນໃຫ້ນໍ້າໜັກຄວາມຄິດເຫັນຂອງໄວໜຸ່ມເພີ່ມຂຶ້ນຕາມອາຍຸ ແລະຮັບຮູ້ວ່າໄວໜຸ່ມທີ່ອາຍຸຫຼາຍກວ່າ ບາງຄົນອາດຈະມີຄວາມສາມາດທີ່ຈະໃຫ້ການຍິນຍອມເຫັນດີໄດ້ ໂດຍການແຈ້ງໃຫ້ຮູ້. ໃນທຸກໆກໍລະນີ, **ຜູ້ໃຫ້ບໍລິການຄວນມີສ່ວນຮ່ວມກັບຜູ້ລອດຊີວິດໄວໜຸ່ມຍິງ ໃນການຕັດສິນໃຈ ແລະຈັດລໍາດັບຄວາມສໍາຄັນຂອງການຮ່ວມມືກັບນາງ ກ່ຽວກັບການເບິ່ງແຍງ/ປິ່ນປົວນາງ.** | **ການສ້າງຄວາມເຂັ້ມແຂງໃຫ້ຜູ້ລອດຊີວິດ ໂດຍການເຄົາລົບສິດທິ ແລະພະລັງໃນການຕັດສິນໃຈຂອງນາງ.**<br>ປະສົບການຫຼັກຂອງ ຄວາມຮຸນແຮງບົນພື້ນຖານທາງເພດ (GBV) ແມ່ນການເຮັດໃຫ້ອ່ອນແອ; ການສ້າງຄວາມເຂັ້ມແຂງແມ່ນຈຸດໃຈກາງໃນການຟື້ນຕົວຂອງຜູ້ລອດຊີວິດ.<br>ຄວາມສໍາພັນລະຫວ່າງຜູ້ໃຫ້ບໍລິການ ແລະຜູ້ລອດຊີວິດ ໃນການຄຸ້ມຄອງກໍລະນີ ຕ້ອງກ່ຽວກັບການໃຫ້ພະລັງ ແລະການຄວບຄຸມກັບຄືນໄປສູ່ຕົວນາງ.<br>ການເຄົາລົບສິດທິຂອງຜູ້ລອດຊີວິດ ແລະພະລັງໃນການຕັດສິນໃຈ, ເຖິງແມ່ນວ່າຈະຖືກຮັບຮູ້ວ່າເປັນ 'ຄວາມຜິດພາດ', ແຕ່ກໍສາມາດປ່ຽນແປງໄດ້ ເນື່ອງຈາກເປັນການສ້າງຄວາມເຂັ້ມແຂງ. |
| **ໃນຂະບວນການຕັດສິນໃຈ, ສະພາບຄວາມພິການຂອງບຸກຄົນ ຫຼືຜູ້ລອດຊີວິດຄວນໄດ້ຮັບການພິຈາລະນາ ແລະເຂົ້າເຖິງຢ່າງເຫມາະສົມ.** | | | |

40 USAID et al. (2017). Inter-Agency GBV Case Management Guidelines. USAID, PRIMERO, UNFPA, UNICEF, UNHCR, International Rescue Committee International Medical Corps. 2017.
41 Commonwealth of Australia. (2022) National plan to end violence against women and children 2022-2032, Australia. (p.70).
42 Adapted from International Rescue Committee. Gender Based Violence Blended Curriculum

| | ຜູ້ລອດຊີວິດ ເດັກນ້ອຍ | ຜູ້ລອດຊີວິດ ໄວໜຸ່ມຍິງ | ຜູ້ລອດຊີວິດ ແມ່ຍິງ ທີ່ເປັນຜູ້ໃຫຍ່ |
|---|---|---|---|
| ການຮັກສາ ຄວາມລັບ | **ຮັບປະກັນການຮັກສາ ຄວາມລັບທີ່ເຫມາະສົມ.** ໃນບາງສະພາບການ, ຈະມີການລາຍງານພາກບັງຄັບ ກ່ຽວກັບ ຄວາມກັງວົນໃນການປົກປ້ອງເດັກ. ທັງນີ້, ເນື່ອງຈາກວ່າເດັກນ້ອຍ, ເມື່ອພິຈາລະນາຕາມອາຍຸ, ຄວາມສາມາດໃນການພັດທະນາ ແລະ ຈຸດຢືນໃນສັງຄົມ ມັກຈະບໍ່ສາມາດ ຂໍຄວາມຊ່ວຍເຫຼືອດ້ວຍຕົນເອງໄດ້. ຜົນປະໂຫຍດສູງສຸດຂອງເດັກ ຄວນເປັນສິ່ງທີ່ຕ້ອງພິຈາລະນາ ກ່ອນສະເໜີ ເມື່ອດຳເນີນການ ໃນນາມຂອງເດັກນ້ອຍ, ເຖິງແມ່ນ ວ່າຢູ່ໃນສະພາບການພາຍໃຕ້ກົດ ຫມາຍການລາຍງານພາກບັງຄັບ. | **ຮັບປະກັນ ແລະຮັກສາ ຄວາມລັບ.** ເຄົາລົບສິດໃນການຕັດສິນໃຈ ດ້ວຍຕົນເອງ ຂອງຜູ້ລອດຊີວິດ ໄວໜຸ່ມ ແລະ ເຮັດວຽກຮ່ວມກັນ ເພື່ອປະເມີນຜົນກະທົບແງ່ບວກ ແລະແງ່ລົບຂອງແຕ່ລະການກະທຳ ເພື່ອເລືອກເອົາ ການກະທຳທີ່ເປັນ ອັນຕະລາຍໜ້ອຍທີ່ສຸດ (ໃຫ້ຜູ້ເບິ່ງແຍງມີສ່ວນຮ່ວມ ຕາມຄວາມເໝາະສົມ). | **ຮັກສາຄວາມລັບ.** ເຄົາລົບສິດຂອງຜູ້ລອດຊີວິດ ໃນການຕັດສິນໃຈ, ລວມທັງ ຜູ້ທີ່ຈະຮູ້ກ່ຽວກັບສະຖານະການ, ຄວາມຕ້ອງການ ແລະການປົ່ນປົວ ຂອງລາວ ວ່າເປັນແນວໃດ.<br>ບໍ່ແນະນຳໃຫ້ລາຍງານພາກບັງຄັບ ສຳລັບ ຄວາມຮຸນແຮງບົນພື້ນຖານ ທາງເພດ (GBV) ເນື່ອງຈາກວ່າ ສິ່ງນີ້ສາມາດເປັນການຈຳລອງ ຊ້ຳຄືນ ຮູບແບບການຄວບຄຸມ ຜູ້ລອດຊີວິດ, ເຊິ່ງສະແດງອອກ ຢູ່ໃນ ຄວາມສຳພັນທີ່ ລ່ວງລະເມີດ, ແລະເຮັດໃຫ້ ພວກເຂົາສ່ຽງຕໍ່ອັນຕະລາຍ ຕື່ມອີກ. |

**ຂອບການເຮັດວຽກທີ່ໃຊ້ຮ່ວມກັນ ເພື່ອໃຫ້ເຂົ້າໃຈຈຸດຕັດກັນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ສາມາດຊ່ວຍປະສານງານ ດ້ານການບໍລິການຢ່າງໄດ້ຫຼວງຫຼາຍ.** ສິ່ງນີ້ມີຄວາມກ່ຽວຂ້ອງໂດຍສະເພາະບ່ອນທີ່ ຄວາມຮຸນແຮງໃນຄູ່ຮັກ/ຄູ່ຊີວິດ (IPV) ແລະການລະເມີດເດັກແມ່ນເກີດຂຶ້ນຮ່ວມກັນ. ຄວນໃຫ້ຄຳແນະນຳທີ່ຈະແຈ້ງກ່ຽວກັບຄວາມຊັບຊ້ອນ (dynamics) ຂອງຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ ລວມທັງວິທີການແກ້ໄຂທີ່ເຫມາະສົມກັບເດັກນ້ອຍ ທີ່ມີຄວາມສ່ຽງຕໍ່ອັນຕະລາຍໃນເຮືອນ ໃນຂະນະທີ່ຫຼຸດຜ່ອນການແຍກເດັກນ້ອຍອອກຈາກພໍ່ແມ່ທີ່ບໍ່ໄດ້ຂົ່ມເຫງ, ຫາກເປັນໄປໄດ້.[43] ໜຶ່ງໃນຄວາມຊັບຊ້ອນຂອງຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ ຄືການໃຊ້ເດັກເປັນອາວຸດ ເຊິ່ງໝາຍເຖິງ ການສືບຕໍ່ການລ່ວງລະເມີດ, ການຂົ່ມຂູ່ ແລະການຄວບຄຸມແມ່ຕໍ່ໄປ. ເຊິ່ງອາດລວມເຖິງ ການທຳລາຍຄວາມສຳພັນຂອງນາງກັບລູກ, ຂູ່ວ່າຈະພາພວກເຂົາໄປຖ້ານາງໜີໄປ, ການທຳຮ້າຍເດັກເພື່ອ 'ກັບຄືນຫາ' ລາວ, ຫຼືໃຊ້ລູກສົ່ງຂໍ້ຄວາມຂົ່ມຂູ່ ຫຼືເກັບກຳຂໍ້ມູນ ຫຼືຍົວະໃຫ້ລູກບໍ່ມັກແມ່ຂອງພວກເຂົາ ເພື່ອຄວບຄຸມການກະທຳຂອງແມ່.[44] ໃນທາງກົງກັນຂ້າມ, ຄວນພະຍາຍາມສ້າງແນວຄວາມຄິດ ກ່ຽວກັບຄວາມສຳພັນຂອງແມ່ກັບລູກ ໃຫ້ເປັນຊັບພະຍາກອນເພື່ອຄວາມປອດໄພ ຄວາມຢູ່ດີມີສຸກຂອງບຸກຄົນ ແລະສ່ວນລວມ, ແລະເປັນເສັ້ນທາງໄປສູ່ການຟື້ນຕົວຈາກຄວາມຮຸນແຮງ.[45]

**ຄວນພະຍາຍາມສົ່ງເສີມທັດສະນະຄະຕິ ແລະແນວທາງປະຕິບັດ ທີ່ອ່ອນໄຫວຕໍ່ເດັກ ແລະເອົາຜູ້ລອດຊີວິດເປັນໃຈກາງ ແລະການປະຕິບັດຂອງພະນັກງານສັງຄົມສົງເຄາະ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ.** ການປະຕິບັດທົ່ວໄປໃນການປະນາມ (stigma) ທີ່ຂັດຂວາງການຊອກຫາການຊ່ວຍເຫຼືອ ສຳລັບເດັກນ້ອຍ ແລະຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ເຊິ່ງມີຄວາມຮຸນແຮງເກີດຂຶ້ນຮ່ວມກັນລວມມີ: ການກົດດັນໃຫ້ແມ່ຢູ່ກັບຄູ່ຮັກ/ຄູ່ຄອງ ທີ່ຂົ່ມເຫງ ເພື່ອຜົນປະໂຫຍດຂອງເດັກ[46]; ການຕຳນິຕິຕຽນແມ່ທີ່ລົ້ມເຫຼວໃນການ 'ປົກປ້ອງ' ລູກ, ເຊິ່ງເປັນການຫັນປ່ຽນຄວາມສົນໃຈ ອອກຈາກຜູ້ກະທຳຄວາມຮຸນແຮງ[47]; ຄວາມອຸກອັ່ງກັບການທີ່ ຜູ້ລອດຊີວິດບໍ່ສາມາດ 'ຈາກໄປ' ໄດ້; ຄວາມຮັບຮູ້ທີ່ວ່າ ຜູ້ຊາຍແມ່ນເປັນຜູ້ຖືກເຄາະຮ້າຍຂອງຄວາມຮຸນແຮງໃນຄອບຄົວຢ່າງເທົ່າທຽມກັນ (ບໍ່ວ່າຈະເປັນໃນແງ່ຂອງຄວາມຖີ່ ຫຼືຄວາມຮຸນແຮງ), ໂດຍສະເພາະໃນເວລາທີ່ຄູ່ຮັກ/ຄູ່ຄອງແມ່ຍິງ -ຜູ້ລອດຊີວິດ ໄດ້ໃຊ້ຄວາມຮຸນແຮງໃນການປ້ອງກັນຕົວ; ການເບິ່ງຜົນກະທົບຂອງ ຄວາມຮຸນແຮງຕໍ່ແມ່ຍິງ ຕໍ່ຜູ້ລອດຊີວິດ ເປັນຫຼັກຖານທີ່ຈະແຈ້ງ ທີ່ກ່ຽວຂ້ອງກັບຄວາມບົກຜ່ອງໃນການເບິ່ງແຍງສັ່ງສອນລູກໆ ຫຼືປັດໄຈຄວາມສ່ຽງໃນການລ່ວງລະເມີດເດັກ, ເຊັ່ນ: ສຸຂະພາບຈິດບໍ່ດີ, ການໃຊ້ສານເສບຕິດ, ຄວາມເຊື່ອໝັ້ນໃນຕົນເອງຫຼຸດລົງ, ຄວາມສາມາດໃນການຕັດສິນໃຈບົກຜ່ອງ, ຄວາມພິການທີ່ກ່ຽວຂ້ອງກັບຄວາມຮຸນແຮງ. "ກົງກັນຂ້າມ, ພະນັກງານສັງຄົມສົງເຄາະ ຄວນມີຄວາມເຂົ້າໃຈກ່ຽວກັບການພັດທະນາຂອງເດັກ ແລະໄວໜຸ່ມ ພ້ອມທັງເຕັກນິກການພັດທະນາທີ່ເປັນມິດກັບເດັກ ແລະໄວໜຸ່ມ ເພື່ອສະໜັບສະໜູນສິດ ແລະຄວາມອາດສາມາດໃນການມີສ່ວນຮ່ວມໃນການຕັດສິນໃຈຢ່າງເຕັມສ່ວນ." **ລະບຽບການບໍລິການເສີມ ຫຼືຮ່ວມກັນຄວນຖືກພັດທະນາ**

43 ອ້າງແລ້ວ
44 International Rescue Committee. Gender Based Violence Blended Curriculum
45 ອ້າງແລ້ວ
46 Stanley, Nicky and Humphreys, Cathy 'Multi-Agency and Multi-Disciplinary Work: Barriers and Opportunities' in edit. Cathay Humphries and Nicky Stanley Domestic violence and child protection: Directions for good practice (2006) London; Philadelphia: Jessica Kingsley Publishers, 2006.
47 Humphreys, C. (2000) Social Work, Domestic Violence and Child Protection: Challenging Practice. Bristol: The Policy Press.

**ເພື່ອຊ່ວຍໃນການສະໜອງການບໍລິການຈັດການກໍລະນີວຽກງານສັງຄົມສົງເຄາະ ກ່ຽວກັບ ຄວາມຮຸນແຮງຕໍ່ເດັກ ແລະ ຄວາມຮຸນແຮງຕໍ່ແມ່ຍິງ ທີ່ມີການປະສານງານກັນ ລວມທັງການສົ່ງຕໍ່.** ຂໍ້ຕົກລົງທີ່ຈະແຈ້ງ ສະໜັບສະໜູນການປະສານງານ, ການຮ່ວມມື ແລະຂະຫຍາຍການເຂົ້າເຖິງການບໍລິການ ແລະຊັບພະຍາກອນຂອງຜູ້ໃຊ້ບໍລິການຢ່າງທັນເວລາ.[48] ໃນກໍລະນີທີ່ລະບຽບການ ຫຼືຄໍາແນະນະກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ທີ່ເສີມກັນສໍາລັບ ຜູ້ຊ່ຽວຊານດ້ານສຸຂະພາບ, ຕໍາຫຼວດ, ໄອຍະການ ແລະສານ ຄວນໃຊ້ແນວທາງພິເສດສໍາລັບເດັກນ້ອຍ ແລະໄວໜຸ່ມ, ແລະອ້າງອີງເຖິງລະບຽບການສະເພາະສໍາລັບເດັກນ້ອຍ. ນອກເໜືອໄປຈາກລະບຽບການເພື່ອສະໜັບສະໜູນແມ່ຍິງທີ່ເປັນຜູ້ໃຫຍ່ແລ້ວ.

## 5.4 ຂໍ້ຄວນພິຈາລະນາທີ່ສໍາຄັນ ໃນການອອກແບບ ແລະການສົ່ງມອບການບໍລິການດ້ານສັງຄົມສົງເຄາະ ກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ

ຂໍ້ຄວນພິຈາລະນາທີ່ສໍາຄັນໃນການອອກແບບ ແລະການສົ່ງມອບບໍລິການວຽກງານສັງຄົມສົງເຄາະ ເພື່ອແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ເຊິ່ງຄວນໄດ້ຮັບແຈ້ງບັນດາລະບຽບການໃຫ້ບໍລິການ, ໄດ້ແກ່:

### *ການກໍານົດຕົວຕົນ*

ການກໍານົດຕົວຕົນ ແມ່ນບ່ອນທີ່ຜູ້ໃຫ້ບໍລິການຊອກຫາຄົນທີ່ຕ້ອງການການປົກປ້ອງ. ມັນເປັນບາດກ້າວທໍາອິດທີ່ຈໍາເປັນໃນການປົກປ້ອງເດັກ ເພາະວ່າເດັກມັກຈະຂາດຄວາມສາມາດໃນການຊອກຫາການຊ່ວຍເຫຼືອດ້ວຍຕົນເອງ.[49] ແນວໃດກໍ່ຕາມ, ບໍ່ແນະນໍາໃຫ້ກໍານົດຕົວຕົນ ສໍາລັບການແກ້ໄຂບັນຫາຄວາມຮຸນແຮງຕໍ່ແມ່ຍິງ ເນື່ອງຈາກວ່າມັນ ສາມາດເປັນການຈໍາລອງຊໍ້າຄືນຄວາມຮູ້ສຶກບໍ່ມີພະລັງຂອງຜູ້ລອດຊີວິດ ທີ່ມີຢູ່ໃນຄວາມສໍາພັນທີ່ຂົ່ມເຫງ ແລະສາມາດມີຄວາມສ່ຽງຈາກການຕອບໂຕ້ຄວາມຮຸນແຮງຈາກຜູ້ກະທໍາຜິດໄດ້.[50] ຂໍ້ກໍານົດຂອງການລາຍງານພາກບັງຄັບ ແຕກຕ່າງກັນໄປຕາມແນວທາງ ແລະສະພາບການ ແລະຄວນນໍາເອົາມາພິຈາລະນານໍາ ເຊິ່ງມັນກ່ຽວຂ້ອງກັບການກໍານົດຕົວຕົນ (ເບິ່ງຂ້າງລຸ່ມນີ້).

### *ການລາຍງານພາກບັງຄັບ*

ການລາຍງານການບັງຄັບ ໃນກໍລະນີຄວາມຮຸນແຮງຕໍ່ຕໍາຫຼວດ ແມ່ນແນວທາງການປະຕິບັດທົ່ວໄປ ໃນການປົກປ້ອງເດັກນ້ອຍຈາກຄວາມຮຸນແຮງ, ແຕ່ບໍ່ໄດ້ຖືກແນະນໍາສໍາລັບການແກ້ໄຂບັນຫາຄວາມຮຸນແຮງຕໍ່ແມ່ຍິງ, ເນື່ອງຈາກວ່າ ມັນຂັດກັບແນວທາງການເອົາຜູ້ລອດຊີວິດເປັນໃຈກາງ ເຊິ່ງມີເປົ້າໝາຍເພື່ອສ້າງຄວາມເຂັ້ມແຂງໃຫ້ໃຫ້ຜູ້ລອດຊີວິດ ໃນການເລືອກການບໍລິການທີ່ພວກເຂົາຕ້ອງການໄດ້ຮັບ.[51] ພະນັກງານສັງຄົມສົງເຄາະ ຄວນຄຸ້ນເຄີຍກັບພັນທະໃນການລາຍງານພາກບັງຄັບ ເນື່ອງຈາກມັນກ່ຽວຂ້ອງກັບຜູ້ລອດຊີວິດທີ່ເປັນເດັກນ້ອຍ, ໄວໜຸ່ມ ແລະຜູ້ໃຫຍ່ ລວມທັງຂັ້ນຕອນທີ່ຈໍາເປັນ, ການບັນທຶກຂໍ້ມູນແລະ ການແບ່ງປັນຂໍ້ມູນ. ໃນກໍລະນີທີ່ມີການລາຍງານພາກບັງຄັບ, ການຮັກສາຄວາມລັບຂອງຜູ້ໃຊ້ບໍລິການອາດຈະຖືກຈໍາກັດ, ເຖິງແມ່ນວ່າ ຈະຍັງຄົງໄດ້ຮັບການປົກປ້ອງຕາມຫຼັກການ, ໂດຍມີຂໍ້ມູນທີ່ແບ່ງປັນກັບອົງການ ແລະຜູ້ຊ່ຽວຊານອື່ນໆ ສະເພາະໃນກໍລະນີຈໍາເປັນເພື່ອປົກປ້ອງຜູ້ລອດຊີວິດເທົ່ານັ້ນ, ເຊັ່ນ : ບົນພື້ນຖານ 'ຈໍາເປັນຕ້ອງຮູ້' ຢ່າງເຄັ່ງຄັດ. ຂໍ້ຈໍາກັດເຫຼົ່ານີ້ ຄວນໄດ້ຮັບການອະທິບາຍຢ່າງຈະແຈ້ງຕໍ່ຜູ້ລອດຊີວິດ ແລະຜູ້ເບິ່ງແຍງຂອງພວກເຂົາ, ກ່ອນທີ່ຈະໄດ້ຮັບການຍິນຍອມ ໃຫ້ດໍາເນີນການບໍລິການຕ່າງໆ ລວມທັງການສົ່ງຕໍ່.[52] ເມື່ອໄດ້ຮັບຂໍ້ມູນກ່ຽວກັບການລາຍງານພາກບັງຄັບແລ້ວ, ແມ່ຍິງທີ່ລອດຊີວິດຈາກຄວາມຮຸນແຮງ ຄວນຈະໄດ້ຮັບທາງເລືອກໃຫ້ຈາກໄປໄດ້, ຖ້າພວກເຂົາບໍ່ໃຫ້ການຍິນຍອມທີ່ຈະລາຍງານຄວາມຮຸນແຮງທີ່ເກີດຂຶ້ນ.

### *ຈັນຍາບັນ ແລະການຕັດສິນໃຈກ່ຽວກັບຈັນຍາບັນ*

ຈັນຍາບັນ ແລະການຕັດສິນໃຈກ່ຽວກັບຈັນຍາບັນ (ລວມທັງການໃຊ້ຈັນຍາບັນທາງດ້ານວິຊາຊີບໃນວຽກງານສັງຄົມສົງເຄາະ) ເປັນສິ່ງສໍາຄັນທີ່ຈະຕ້ອງພິຈາລະນາໃນແງ່ຂອງ ຄວາມຮຸນແຮງຕໍ່ແມ່ຍິງ/ຄວາມຮຸນແຮງຕໍ່ເດັກ. ພະນັກງານສັງຄົມສົງເຄາະ ຈໍາເປັນຕ້ອງຮັບຮູ້ ແລະຈັດການກັບຄ່ານິຍົມສ່ວນບຸກຄົນ, ອະຄະຕິ, ການຈໍາແນກແລະຄວາມລໍາອຽງ. ບັນຫາດ້ານຈັນຍາບັນ ໄດ້ແກ່ ຄວາມເປັນສ່ວນຕົວ, ການຮັກສາຄວາມລັບ, ຜົນປະໂຫຍດ (ການກະທໍາເພື່ອຜົນປະໂຫຍດສູງສຸດຂອງແຕ່ລະບຸກຄົນ), ການບໍ່ປະຕິບັດໃນທາງທີ່ຜິດ (ຫຼີກເວັ້ນການເຮັດໃຫ້ເກີດອັນຕະລາຍ), ການຍິນຍອມ (ຂໍຄວາມຍິນຍອມຂອງຜູ້ຖືກເຄາະຮ້າຍ / ຜູ້ລອດຊີວິດ, ຕາມຄວາມເໝາະສົມກັບລະດັບວຸດທິພາວະ ແລະອາຍຸ, ກ່ອນທີ່ຈະສົ່ງກໍລະນີໄປຫາຜູ້ໃຫ້ບໍລິການອື່ນໆ ຫຼືແບ່ງປັນປະເພດຂອງຂໍ້ມູນຕ່າງໆກ່ຽວກັບກໍລະນີ), ການສົ່ງເສີມ, ຄວາມເຄົາລົບ, ຄວາມສະເໝີພາບທາງເພດ, ວິທີການທີ່ມີຄວາມອ່ອນໄຫວຕໍ່ຄວາມພິການ, ການກໍານົດຕົນເອງ ແລະ ການບໍ່ຈໍາແນກ ຄວນເປັນສ່ວນປະກອບຢູ່ໃນການບໍລິການດັ່ງກ່າວ. ການຮັກສາຄວາມລັບເປັນສິ່ງສໍາຄັນ (ຍົກເວັ້ນພື້ນຖານ 'ຈໍາເປັນຕ້ອງຮູ້'

48 International Rescue Committee. Gender Based Violence Blended Curriculum
49 ອ້າງແລ້ວ
50 Gender Based Violence Area of Responsibility (2019). The Inter-Agency Minimum Standards for Gender-Based Violence in Emergencies Programming. New York: International Rescue Committee, UNFPA and UNICEF.
51 ອ້າງແລ້ວ
52 ອ້າງແລ້ວ

ທີ່ເຄັ່ງຄັດ ເມື່ອນຳໃຊ້ພາຍໃຕ້ກົດລະບຽບການລາຍງານພາກບັງຄັບ) ເນື່ອງຈາກຜົນໄດ້ຮັບທີ່ບໍ່ຕ້ອງການອາດເກີດຂຶ້ນໄດ້ ເມື່ອຂໍ້ມູນຖືກເປີດເຜີຍຢ່າງບໍ່ເຫມາະສົມ.

### ການປະເມີນຜົນ

"ສຳລັບການປະເມີນ ຄວາມຮຸນແຮງຕໍ່ແມ່ຍິງ (VAW), ຜູ້ລອດຊີວິດແມ່ນຫົວຂໍ້ຕົ້ນຕໍໃນຂະນະທີ່ການປະເມີນ ຄວາມຮຸນແຮງຕໍ່ເດັກ (VAC) ອາດຈະຄຳນຶງເຖິງທັດສະນະຂອງຜູ້ເບິ່ງແຍງເດັກ ແລະ 'ຜູ້ໃຫຍ່ທີ່ປອດໄພ' ຄົນອື່ນໆ ເຊັ່ນດຽວກັນກັບພະນັກງານເບິ່ງແຍງກໍລະນີ."[53] ການມີສ່ວນຮ່ວມຂອງຜູ້ມີບົດບາດອື່ນໆໃນການປະເມີນ ອາດຈະກໍ່ໃຫ້ເກີດຄວາມສ່ຽງຕໍ່ຜູ້ລອດຊີວິດທີ່. ຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ (IPV) ແມ່ນມີຢູ່ຄຽງຄູ່ກັບຄວາມກັງວົນ ດ້ານການປົກປ້ອງເດັກ, ເຊັ່ນ: ໂດຍຍຶດຫຼັກ ຄວາມຊັບຊ້ອນຂອງພະລັງອຳນາດທີ່ເປັນອັນຕະລາຍຕື່ມອີກ. ລະບຽບການບໍລິການຮ່ວມກັນ ແລະການປະສານງານລະຫວ່າງພະນັກງານສັງຄົມສົງເຄາະ ທາງດ້ານຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ສາມາດຊ່ວຍຫຼຸດຜ່ອນຄວາມສ່ຽງທີ່ກ່ຽວຂ້ອງກັບ ແນວທາງການປະເມີນທີ່ຫຼາກຫຼາຍເຫຼົ່ານີ້. ການປະຕິບັດການຫຼຸດຜ່ອນຜົນກະທົບທີ່ເປັນໄປໄດ້ ໃນກໍລະນີທີ່ມີຄວາມກັງວົນກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍລວມທັງການໄດ້ຮັບການຍິນຍອມ ຈາກຜູ້ລອດຊີວິດແຕ່ລະຄົນ, ແລະຈັດໃຫ້ມີການສຳພາດສ່ວນບຸກຄົນກັບພໍ່ແມ່ແຕ່ລະຄົນ ເພື່ອໃຫ້ພື້ນທີ່ປອດໄພສຳລັບການເປີດເຜີຍຂໍ້ມູນ, ແລະສຳລັບການສົນທະນາໃນກອງປະຊຸມກໍລະນີ.[54] ຜູ້ລອດຊີວິດ ຈາກຄວາມຮຸນແຮງຕໍ່ແມ່ຍິງ ຄວນຖືກສະເໜີໃຫ້ເຊື່ອມໂຍງກັບ ການວາງແຜນຄວາມປອດໄພທີ່ເປັນຄວາມລັບ, ການຄຸ້ມຄອງກໍລະນີ, ການປະສານງານການສົ່ງຕໍ່ ແລະການບໍລິການຊ່ວຍເຫຼືອທາງດ້ານຈິດໃຈຢ່າງຕໍ່ເນື່ອງ. ການປະເມີນ, ລວມທັງການປະເມີນການປະສານງານ ໃນກໍລະນີຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ທີ່ເກີດຂຶ້ນຮ່ວມກັນ, ຄວນໃຫ້ທົ່ວເຖິງ ບໍ່ແມ່ນພຽງແຕ່ສຸມໃສ່ຄວາມສ່ຽງທີ່ຮີບດ່ວນຕໍ່ແມ່ຍິງແລະ / ຫຼືເດັກນ້ອຍເທົ່ານັ້ນ, ແຕ່ຍັງລວມເອົາ ເສັ້ນທາງໄປສູ່ການຟື້ນຕົວໃນໄລຍະຍາວ ຈາກການບາດແຜທາງຈິດໃຈທີ່ຮຸນແຮງທັງຂອງເດັກ ແລະແມ່ຍິງ.[55]

### ການປະເມີນຄວາມສ່ຽງ

ໃນສ່ວນຫນຶ່ງຂອງການປະເມີນ, ພະນັກງານທີ່ໄດ້ຮັບການຝຶກອົບຮົມ ຄວນປະເມີນຄວາມສ່ຽງສະເພາະໃຫ້ສຳເລັດ ເພື່ອໃຫ້ຮັບຮູ້ວິທີການແກ້ໄຂທີ່ເຫມາະສົມ. ຄວນໃຊ້ເຄື່ອງມືທີ່ອີງໃສ່ຫຼັກຖານ ໃນການປະເມີນຄວາມສ່ຽງ ແລະຄວນມີຄວາມເຂົ້າໃຈດີ ກ່ຽວກັບຕົວຊີ້ວັດຄວາມສ່ຽງໃນສະຖານະການ ແລະສະພາບການທີ່ແຕກຕ່າງກັນ (ເຊັ່ນ: ການແຍກອອກຈາກຄູ່ຮັກ/ຄູ່ຄອງ ທີ່ໃຊ້ຄວາມຮຸນແຮງ ເປັນປັດໄຈທີ່ເພີ່ມຄວາມສ່ຽງຕໍ່ ຄວາມຮຸນແຮງທີ່ຫຼາຍຂຶ້ນ).[56]

### ການວາງແຜນຄວາມປອດໄພ

ຄວນມີການວາງແຜນຄວາມປອດໄພ ເພື່ອຊ່ວຍຜູ້ລອດຊີວິດທັງໝົດ. ໃນກໍລະນີທີ່ທັງແມ່ ແລະເດັກມີຄວາມສ່ຽງຕໍ່ຄວາມຮຸນແຮງ, ຄວນມີການສ້າງແຜນຄວາມປອດໄພຂຶ້ນ ສຳລັບແມ່ ລວມເຖິງລູກໆຂອງນາງຕາມຄວາມເໝາະສົມ. ຄວນເອົາໃຈໃສ່ວ່າ ເດັກນ້ອຍບໍ່ແມ່ນຜູ້ທີ່ບໍ່ສາມາດຕອບໂຕ້ໃດໆ (passive agents) ໃນ ຄວາມຮຸນແຮງໃນຄູ່ຮັກ/ຄູ່ຊີວິດ (IPV) ລະຫວ່າງຜູ້ເບິ່ງແຍງ, ແລະລວມເອົາການກະທຳສະເພາະ ທີ່ໄດ້ຮັບແຈ້ງໂດຍ ສະຖານະ/ຄວາມສາມາດໃນການພັດທະນາ ແລະຈິດໃຈຂອງເດັກໃນການປົກປ້ອງເດັກ ແລະຫຼຸດຜ່ອນອັນຕະລາຍໃຫ້ເຫຼືອໜ້ອຍທີ່ສຸດ ພ້ອມກັບຄວາມປອດໄພຂອງຜູ້ລອດຊີວິດ ທີ່ເປັນຜູ້ໃຫຍ່. ສິ່ງເຫຼົ່ານີ້ຄວນຖືກສ້າງຂຶ້ນຮ່ວມກັນ ແລະລວມເອົາການປະເມີນຄວາມສ່ຽງ, ທັກສະຄວາມປອດໄພທົ່ວໄປ, ຍຸດທະສາດທີ່ຈະໃຊ້ ໃນເວລາພົບການປະເຊີນໜ້າທີ່ຮຸນແຮງ ແລະຍຸດທະສາດທີ່ຈະໃຊ້ ຫາກແມ່ເລືອກທີ່ຈະໜີອອກຈາກຜູ້ກະທຳຜິດ.[57]

### ການຢ້ຽມຢາມເຮືອນ

ການໄປຢ້ຽມຢາມເຮືອນ ແມ່ນການປະຕິບັດໂດຍທົ່ວໄປໃນການສະໜັບສະໜູນການປົກປ້ອງເດັກ ໂດຍທີ່ພະນັກງານສັງຄົມສົງເຄາະຈະພົບປະກັບເດັກນ້ອຍ ແລະຄອບຄົວຢູ່ໃນເຮືອນຂອງພວກເຂົາ. ແນວໃດກໍ່ຕາມ, ບໍ່ແນະນຳໃຫ້ໃຊ້ສິ່ງເຫຼົ່ານີ້ໃນເວລາທີ່ເຮັດວຽກກັບແມ່ຍິງທີ່ມີຄວາມສ່ຽງຕໍ່ຄວາມຮຸນແຮງ ເນື່ອງຈາກອາດສົ່ງຜົນຕໍ່ການຮັກສາຄວາມລັບ ແລະຄວາມປອດໄພຂອງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ເຊັ່ນດຽວກັນກັບພະນັກງານສັງຄົມສົງເຄາະ. ສະຖານທີ່ປອດໄພທາງເລືອກນອກເຮືອນ ທີ່ສາມາດເຂົ້າເຖິງໄດ້ ແລະໃຫ້ຄວາມຮູ້ສຶກເປັນສ່ວນຕົວແມ່ນເປັນຄວາມຕ້ອງການສຳລັບຜູ້ໃຊ້ບໍລິການ ທີ່ຖືກໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ຫຼືໃນກໍລະນີທີ່ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍເກີດຂຶ້ນຮ່ວມກັນ. ການໄປຢ້ຽມຢາມເຮືອນບໍ່ຄວນຖືກໃຊ້ເພື່ອກຳນົດກໍລະນີ ຄວາມຮຸນແຮງຕໍ່ແມ່ຍິງເຊັ່ນກັນ.

53 International Rescue Committee. Gender Based Violence Blended Curriculum
54 ອ້າງແລ້ວ
55 Stanley, Nicky and Humphreys, Cathy ‘Multi-Agency and Multi-Disciplinary Work: Barriers and Opportunities’ in edit. Cathay Humphries and Nicky Stanley Domestic violence and child protection : Directions for good practice (2006) London ; Philadelphia : Jessica Kingsley Publishers, 2006.
56 Commonwealth of Australia. (2022) National plan to end violence against women and children 2022-2032, Australia.
57 International Rescue Committee. Gender Based Violence Blended Curriculum

ໃນກໍລະນີທີ່ບໍ່ສາມາດຫຼີກລ່ຽງການໄປຢ້ຽມຢາມເຮືອນໄດ້ ການປະຕິບັດທີ່ສໍາຄັນ ຊ່ວຍຫຼຸດຜ່ອນຄວາມສ່ຽງ ແມ່ນໄດ້ແກ່:

- ເຮັດໃຫ້ການຢ້ຽມຢາມ ເບິ່ງຄືວ່າເປັນກິດຈະກໍາປະຈໍາ ແລະເປັນໜຶ່ງໃນຫຼາຍໆການໄປຢ້ຽມຢາມຄົວເຮືອນໃນຊຸມຊົນໃນເວລານັ້ນ, ດໍາເນີນການເພື່ອສະໜອງການບໍລິການ ຫຼືຂໍ້ມູນຂ່າວສານທີ່ບໍ່ກ່ຽວຂ້ອງກັບ ຄວາມຮຸນແຮງຕໍ່ແມ່ຍິງ;
- ວາງແຜນຮ່ວມກັບຜູ້ລອດຊີວິດ ກ່ຽວກັບວັນ ແລະເວລາທີ່ດີທີ່ສຸດ ໃນການໄປຢ້ຽມຢາມ ຕອນທີ່ມີສະມາຊິກຊຸມຊົນອ້ອມແອ້ມໜ້ອຍກວ່າ ແລະເມື່ອຜູ້ກະທໍາຜິດບໍ່ຢູ່ເຮືອນ ຫຼືຢູ່ໃກ້ເຮືອນ;
- ສ້າງລະຫັດ ຫຼືສັນຍານຮ່ວມກັບຜູ້ລອດຊີວິດ ເພື່ອໃຫ້ລາວສາມາດບອກໄດ້ວ່າ ຂະນະນັ້ນລາວບໍ່ປອດໄພອີກຕໍ່ໄປ;
- ວາງແຜນກັບຜູ້ລອດຊີວິດວ່າ ລາວຈະເວົ້າແນວໃດຖ້າລາວປະເຊີນກັບການໄປຢ້ຽມຢາມ ຂອງພະນັກງານສັງຄົມສົງເຄາະ ແລະຍ້ອນຫຍັງພະນັກງານສັງຄົມສົງເຄາະຈຶ່ງຢູ່ບ່ອນນັ້ນ ເພື່ອທີ່ນາງຈະບໍ່ຕ້ອງເປີດເຜີຍຕົນເອງ ຫຼືເປີດເຜີຍພະນັກງານສັງຄົມ.[58]

### *ການຊ່ວຍເຫຼືອທາງດ້ານສຸຂະພາບຈິດ ແລະຈິດຕະສັງຄົມ*

ການບໍລິການຊ່ວຍເຫຼືອທາງດ້ານສຸຂະພາບຈິດ ແລະຈິດຕະສັງຄົມ (MHPSS) ທີ່ສົ່ງມອບໂດຍກົງ ຫຼືຜ່ານການສົ່ງຕໍ່ ຄວນປະຕິບັດຕາມແນວທາງທີ່ເອົາຜູ້ລອດຊີວິດເປັນໃຈກາງ ພ້ອມທັງໃຫ້ມີຄວາມອ່ອນໄຫວຕໍ່ເດັກນ້ອຍ ແລະຜູ້ທີ່ມີຄວາມພິການ/ ບົດບາດຍິງ-ຊາຍ. ການນໍາໃຊ້ວິທີການຄອບຄົວບໍາບັດ (family treatment) ທີ່ກ່ຽວຂ້ອງກັບການມີສ່ວນຮ່ວມຂອງຄູ່ຮັກ/ຄູ່ຄອງ ທີ່ເປັນຜູ້ກະທໍາຄວາມຮຸນແຮງ ແມ່ນມີຄວາມສ່ຽງສູງຕໍ່ຜູ້ລອດຊີວິດ ແລະບໍ່ແນະນໍາໃຫ້ໃຊ້ວິທີດັ່ງກ່າວ. ມັນສາມາດເພີ່ມທະວີຄວາມຊັບຊ້ອນຂອງການຄວບຄຸມ ແລະການລ່ວງລະເມີດ. ການໄກ່ເກ່ຍແມ່ນແນວທາງປະຕິບັດ ຄວາມຍຸຕິທໍາຕາມປະເພນີທົ່ວໄປ, ແຕ່ບໍ່ແນະນໍາສໍາລັບກໍລະນີທີ່ກ່ຽວຂ້ອງກັບຄວາມຮຸນແຮງຕໍ່ແມ່ຍິງເຊັ່ນກັນ. ໃນທາງປະຕິບັດ, ວິທີການຄອບຄົວບໍາບັດ ຫຼື 'ການໃຫ້ຄໍາປຶກສາໃນຄອບຄົວ' ແລະການໄກ່ເກ່ຍກ່ຽວຂ້ອງກັບ ຄວາມຊັບຊ້ອນແບບດຽວກັນ, ເຊິ່ງຜູ້ລອດຊີວິດທີ່ເປັນຜູ້ໃຫຍ່ ຈະຖືກຕໍານິຕິຕຽນ ກ່ຽວກັບຄວາມຮຸນແຮງ , ແທນທີ່ຈະສຸມໃສ່ການກະທໍາຜິດຂອງຜູ້ກະທໍາຜິດ. ແນວໃດກໍ່ຕາມ, ການໃຫ້ຄໍາປຶກສາແກ່ແມ່ ແລະລູກໆ ສາມາດຊ່ວຍຟື້ນຟູ ແລະຮັດແໜ້ນຄວາມສໍາພັນຂອງແມ່ ແລະລູກໆໄດ້, ເຊິ່ງຈະຊ່ວຍຟື້ນຟູຂຶ້ນຕາມລໍາດັບ. ແນວໃດກໍ່ຕາມ, ໃນທາງປະຕິບັດ, ການໃຫ້ຄໍາປຶກສາດັ່ງກ່າວ ຄວນຈະມີພື້ນຖານມາຈາກ ຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຄວາມຊັບຊ້ອນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ, ເພື່ອຮັບປະກັນວ່າ ການໃຫ້ຄໍາປຶກສາດັ່ງກ່າວ ຍັງຊ່ວຍເສີມສ້າງຄວາມເຂັ້ມແຂງ ໂດຍເອົາຜູ້ລອດຊີວິດເປັນໃຈກາງ ພ້ອມທັງໃຫ້ມີຄວາມອ່ອນໄຫວຕໍ່ເດັກນ້ອຍ ແລະຜູ້ທີ່ມີຄວາມພິການ/ ບົດບາດຍິງ-ຊາຍ.

### *ການຢ້ຽມຢາມພາຍຫຼັງການປະຮ້າງ*

ເມື່ອຄູ່ຜົວເມຍປະຮ້າງກັນ, ຜູ້ເບິ່ງແຍງອາດຈະຈັດ (ຢ່າງເປັນທາງການ ຫຼືບໍ່ເປັນທາງການ) ໃຫ້ລູກໆໄດ້ໃຊ້ເວລາກັບພໍ່ແມ່ແຕ່ລະຄົນ. ໃນກໍລະນີທີ່ ຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງຍັງມີຢູ່, ໄລຍະຫຼັງຈາກການປະຮ້າງກັນນີ້ ແມ່ນເວລາທີ່ມີຄວາມສ່ຽງສູງຕໍ່ຜູ້ລອດຊີວິດ ເຊິ່ງສັງເກດໄດ້ຈາກ ຄວາມຮຸນແຮງທີ່ເພີ່ມຂຶ້ນທັງຕໍ່ຜູ້ລອດຊີວິດ ທີ່ເປັນຜູ້ໃຫຍ່ແລະເດັກນ້ອຍ.[59] ການໄປຢ້ຽມຢາມ ແລະການຕິດຕໍ່ຫຼັງຈາກການປະຮ້າງ ຍັງສະໜອງໂອກາດໃນການຄວບຄຸມ ການບີບບັງຄັບຢ່າງຕໍ່ເນື່ອງ ແລະການລ່ວງລະເມີດ ລວມທັງຜ່ານຄວາມສໍາພັນຂອງຄູ່ຮັກ/ຄູ່ຄອງ ທີ່ລ່ວງລະເມີດຕໍ່ເດັກ.[60] ພະນັກງານປົກປ້ອງເດັກ ຄວນເຮັດວຽກຮ່ວມກັນຢ່າງໃກ້ຊິດ ກັບພາກສ່ວນກ່ຽວຂ້ອງໃນການ ແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ໃນກໍລະນີທີ່ມີ ຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ ແລະກໍລະນີທີ່ມີການປະຮ້າງກັນເກີດຂຶ້ນ, ເຊັ່ນດຽວກັນກັບ ເມື່ອພິຈາລະນາການກະກຽມການຕິດຕໍ່ລະຫວ່າງພໍ່ແມ່ແລະລູກໆ ພາຍຫຼັງການປະຮ້າງກັນ. ພະນັກງານສັງຄົມສົງເຄາະຄວນເຮັດວຽກໂດຍກົງກັບຜູ້ລອດຊີວິດຈາກ ຄວາມຮຸນແຮງຕໍ່ແມ່ຍິງ ເພື່ອປະເມີນ ແລະວາງແຜນຄວາມສ່ຽງຢ່າງພຽງພໍ ແລະຮັບປະກັນການບໍລິການຢ່າງຕໍ່ເນື່ອງສໍາລັບນາງ ແລະລູກໆ ທັງກ່ອນ ແລະຫຼັງການຢ້ຽມຢາມ ແລະການຕິດຕໍ່ໃນຮູບແບບອື່ນໆ.

### *ການສົ່ງຕໍ່ຫຼາຍຂະແໜງການ ແລະການປະສານງານ*

ບັນດາຜູ້ມີບົດບາດໃນຫຼາຍຂະແໜງການ ຮ່ວມກັນຮັບຜິດຊອບໃນການສະໜັບສະໜູນຜູ້ລອດຊີວິດ ທີ່ເປັນຜູ້ໃຫຍ່, ໄວໜຸ່ມ ແລະເດັກນ້ອຍ ໃຫ້ເຂົ້າເຖິງການບໍລິການທີ່ມີຄຸນນະພາບ, ທັນການ, ຮອບດ້ານ ແລະມີການປະສານງານກັນ. ພະນັກງານດ່ານໜ້າຕ້ອງສາມາດຮັບຮູ້ ແລະຕອບສະໜອງຕໍ່ຜູ້ລອດຊີວິດຈາກ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໄດ້ຢ່າງມີປະສິດຕິພາບ.[61] ອາດຈໍາເປັນຕ້ອງມີຜູ້ຊ່ຽວຊານ ແລະການບໍລິການສະເພາະດ້ານ ເພື່ອການຕອບສະໜອງຢ່າງເຕັມສ່ວນ, ສະນັ້ນ ກົນໄກການສົ່ງຕໍ່ທີ່ຖືກສ້າງຕັ້ງຂຶ້ນ ເພື່ອໃຫ້ສາມາດເຂົ້າຫາການບໍລິການເຫຼົ່ານີ້ໄດ້ທັນເວລາ ຄວນມີຄວາມພ້ອມ ແລະເປັນທີ່ຮູ້ຈັກ ຂອງບັນດາພະນັກງານດ່ານໜ້າ.

58 USAID et al. (2017). Inter-Agency GBV Case Management Guidelines. USAID, PRIMERO, UNFPA, UNICEF, UNHCR, International Rescue Committee, International Medical Corps. 2017.
59 Humphreys, C. (2000) Social Work, Domestic Violence and Child Protection: Challenging Practice. Bristol: The Policy Press.
60 ອ້າງແລ້ວ
61 UN Women, UNFPA, UNDP, WHO and UNODC (2015). Essential Services Package for Women and Girls Subject to Violence

ເປັນທີ່ຮັບຮູ້ແລ້ວວ່າ ລະບົບວຽກງານສັງຄົມສົງເຄາະ ແລະການບໍລິການ ອາດຈະຍັງບໍ່ໄດ້ຮັບການພັດທະນາ, ຫຼືມີພາລະວຽກງານຫຼາຍເກີນໄປ. ຫາກພວກເຂົາຍັງຂາດເຂີນ ທັງຈຳນວນ ແລະການແຈກຢາຍ, ບັນດາພາກສ່ວນທີ່ມີບົດບາດໃນຫຼາຍຂະແໜງການ ຄວນໄດ້ເຮັດວຽກຮ່ວມກັນ ເພື່ອປະຕິບັດພັນທະຮ່ວມກັນໃນການປົກປ້ອງ ແລະ ສະໜັບສະໜູນຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອ ແລະຕົກຢູ່ໃນຄວາມສ່ຽງ, ໂດຍບໍ່ມີການປະນີປະນອມຕໍ່ວຽກງານສັງຄົມສົງເຄາະ ດ້ວຍການບໍລິການທີ່ແຕກຕ່າງ ແລະມີຄວາມຊ່ຽວຊານ. ເພື່ອອຳນວຍຄວາມສະດວກໃຫ້ແກ່ວຽກງານຫຼາຍຂະແໜງການ ແລະການປະສານງານ, ພະນັກງານບໍລິການສັງຄົມ ຄວນຊຸກຍູ້ການປຶກສາຫາລືລະຫວ່າງບັນດາຜູ້ທີ່ມີບົດບາດໃນຊຸມຊົນ, ອົງການຈັດຕັ້ງສາກົນ ແລະຂະແໜງຍຸຕິທຳ ເພື່ອເປີດຊ່ອງທາງການສື່ສານ ແລະ ຄວາມໄວ້ວາງໃຈ ທີ່ຈະອຳນວຍຄວາມສະດວກໃຫ້ແກ່ການສົ່ງຕໍ່ ລະຫວ່າງບັນດາອົງການຈັດຕັ້ງ ແລະຜູ້ຊ່ຽວຊານຕ່າງໆ. ລະດັບການບໍລິການ ຂອງໜ່ວຍງານຫຼາຍຂະແໜງການ ແລະກົນໄກການປະສານງານອື່ນໆ ສາມາດປັບປຸງການປະສານງານ ໃນການບໍລິການດ້ານການຮັບມືກັບ ຄວາມຮຸນແຮງຕໍ່ແມ່ຍິງ-ຄວາມຮຸນແຮງຕໍ່ເດັກ ແລະ ອຳນວຍຄວາມສະດວກໃນການວາງແຜນ ແລະການຈັດສົ່ງມອບການບໍລິການ. ຄວນໃຊ້ກົນໄກຫຼາຍຂະແໜງການເຫຼົ່ານີ້ ເພື່ອປັບປຸງການຕອບສະໜອງຂອງລະບົບການແກ້ໄຂ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ທີ່ເກີດຂຶ້ນກັບແມ່ຍິງ, ໄວໜຸ່ມ ແລະເດັກນ້ອຍ. ໜ່ວຍງານປົກປ້ອງເດັກທີ່ຖືກມອບໝາຍ ແມ່ນເປັນຈຸດໃຈກາງຂອງການປະສານງານ ດ້ານການປ້ອງກັນ, ການສະໜັບສະໜູນເບື້ອງຕົ້ນ ແລະການບໍລິການແກ້ໄຂສຳລັບເດັກນ້ອຍ ແລະຄອບຄົວຂອງພວກເຂົາ ແລະຍັງເປັນຈຸດໃຈກາງຂອງການປະສານງານ ລະຫວ່າງການບໍລິການປ້ອງກັນ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ.

## *ການປະຊຸມກໍລະນີ*

ການປະຊຸມກໍລະນີ ທີ່ກ່ຽວຂ້ອງກັບຜູ້ໃຫ້ບໍລິການ ກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ເຊັ່ນດຽວກັນກັບຜູ້ທີ່ມີບົດບາດຫຼາຍພາກສ່ວນທີ່ກ່ຽວຂ້ອງ ສາມາດສະຫນັບສະຫນູນການປະສານງານ ການບໍລິການທີ່ມີປະສິດຕິພາບ. ການປະຊຸມກໍລະນີຄວນຈະອີງໃສ່ຄວາມປາດຖະຫນາ ແລະການຍິນຍອມຂອງຜູ້ລອດຊີວິດ, ຕາມຄວາມເຫມາະສົມກັບລະດັບວຸດທິພາວະ, ແລະອາຍຸຂອງພວກເຂົາ, ແລະຄວນຈະໄດ້ຮັບຄວາມເຄົາລົບ ໃນການຮັກສາຄວາມລັບ, ຄວາມປອດໄພ, ແລະຜົນປະໂຫຍດທີ່ສູງສຸດຂອງເດັກເມື່ອເດັກນ້ອຍມີສ່ວນຮ່ວມ, ແລະເພື່ອປ້ອງກັນອັນຕະລາຍອື່ນໆເພີ່ມຕື່ມ. ການປະຊຸມກໍລະນີ ຄວນຈະຖືກຄຸ້ມຄອງດ້ວຍລະບຽບການ ແລະຂັ້ນຕອນທີ່ອະນຸຍາດໃຫ້ມີທັດສະນະ, ຊັບພະຍາກອນ ແລະທັກສະຂອງຜູ້ໃຫ້ບໍລິການທີ່ແຕກຕ່າງກັນ ໃນແຜນດຳເນີນງານກໍລະນີຂອງຜູ້ໃຊ້ບໍລິການ.[62] ຄວນມີມາດຕະການຮັກສາຄວາມລັບທີ່ເຄັ່ງຄັດ ລວມເຖິງການຈຳກັດການແບ່ງປັນຂໍ້ມູນກ່ຽວກັບກໍລະນີ ແລະການມີສ່ວນຮ່ວມຂອງຜູ້ເຂົ້າຮ່ວມກອງປະຊຸມກໍລະນີອື່ນໆ ຕາມພື້ນຖານຄວາມຕ້ອງການ. ກ່າວອີກຢ່າງໜຶ່ງກໍຄື, ບໍ່ໃຫ້ມີບຸກຄົນອື່ນໆເຂົ້າຮ່ວມ ເວັ້ນເສຍແຕ່ວ່າ ການປະກອບສ່ວນຂອງພວກເຂົາ ມີຄວາມຈຳເປັນສຳລັບການຄຸ້ມຄອງຜູ້ລອດຊີວິດ ແລະເດັກນ້ອຍ.

## *ການບໍລິການດ້ານຍຸດຕິທຳ*

ໃນຂະນະທີ່ການໄກ່ເກ່ຍ ເປັນການແກ້ໄຂທົ່ວໄປໃນຂະແຫນງການຍຸຕິທຳ ເປັນວິທີການເພື່ອຫລີກລ່ຽງຄວາມຈຳເປັນຂອງການດຳເນີນຄະດີໃນສານ, ການໄກ່ເກ່ຍບໍ່ໄດ້ແນະນຳໃຫ້ໃຊ້ສຳລັບ ກໍລະນີຄວາມຮຸນແຮງຕໍ່ແມ່ຍິງ ເນື່ອງຈາກວ່າ ມັນສາມາດສະກັດກັ້ນການຄວບຄຸມ ແລະການລ່ວງລະເມີດຂອງຜູ້ກະທຳຜິດທີ່ເປັນເພດຊາຍ, ພ້ອມທັງອຳນວຍຄວາມສະດວກ ໃນການຕຳນິຕິຕຽນຜູ້ຖືກເຄາະຮ້າຍ ແລະເຮັດໃຫ້ເກີດຊ້ຳຄືນບັນທັດຖານຂອງ ຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ ຕໍ່ແມ່ຍິງ. ແລະເດັກຍິງນຳອີກ.[63] ດັ່ງນັ້ນ, ພະນັກງານສັງຄົມສົງເຄາະ ຈຶ່ງ**ບໍ່ຄວນ**ພະຍາຍາມໄກ່ເກ່ຍລະຫວ່າງຜູ້ກະທຳຜິດ ແລະຜູ້ລອດຊີວິດ, ແຕ່ຄວນໃຫ້ຂໍ້ມູນແກ່ຜູ້ລອດຊີວິດ ກ່ຽວກັບທາງເລືອກຂອງຕົນ, ປຶກສາກ່ຽວກັບຄວາມສ່ຽງ ແລະຈັດໃຫ້ມີການສົ່ງຕໍ່ໃນແງ່ບວກ.[64] ພະນັກງານສັງຄົມສົງເຄາະ ຄວນເຮັດວຽກຮ່ວມກັບຜູ້ມີບົດບາດໃນຂະແໜງຍຸດຕິທຳ ເພື່ອສ້າງຄວາມເຂັ້ມແຂງຢ່າງເປັນທາງການ ໃນລະບົບຍຸດຕິທຳເພື່ອປົກປ້ອງແມ່ຍິງ ແລະເດັກນ້ອຍຢ່າງມີປະສິດຕິພາບ ໂດຍພິຈາລະນາທັດສະນະຂອງຄວາມພິການ. ເຊິ່ງລວມມີການເຮັດໃຫ້ປະສົມກົມກຽວກັນ ລະຫວ່າງການຊ່ວຍເຫຼືອທາງດ້ານກົດຫມາຍ ສຳລັບຜູ້ລອດຊີວິດ ຈາກຄວາມຮຸນແຮງທີ່ເປັນຜູ້ໃຫຍ່, ແລະສຳລັບຂໍ້ຂັດແຍ່ງໃນການປົກປ້ອງ ແລະການຮັກສາເດັກນ້ອຍ. ພະນັກງານບໍລິການສັງຄົມຄວນຄຸ້ນເຄີຍ ແລະເຮັດວຽກກັບລະບົບການປົກປ້ອງຊຸມຊົນ ແລະຜູ້ທີ່ມີບົດບາດກ່ຽວຂ້ອງເພື່ອໃຫ້ບໍລິການທີ່ເອົາເດັກ ແລະແມ່ຍິງເປັນໃຈກາງ, ແລະອາດຈະກ່ຽວຂ້ອງກັບການເຮັດວຽກຮ່ວມກັບພາກສ່ວນກ່ຽວຂ້ອງຂອງຊຸມຊົນທີ່ຮັບຜິດຊອບໜ້າທີ່ໄກ່ເກ່ຍ ຫຼືເປັນຜູ້ນຳພາກົນໄກຄວາມຍຸຕິທຳຕາມປະເພນີ. ໃນການເຮັດດັ່ງນັ້ນ, ສິ່ງສຳຄັນແມ່ນຕ້ອງຮັບປະກັນວ່າການບໍລິການຊຸມຊົນ ແລະການແກ້ໄຂຕາມປະເພນີເຫຼົ່ານີ້ ແມ່ນມີຄວາມອ່ອນໄຫວຕໍ່ບົດບາດຍິງຊາຍ, ຄວາມພິການ ແລະເດັກນ້ອຍ. ພາກສ່ວນກ່ຽວຂ້ອງຂອງຊຸມຊົນເຫຼົ່ານີ້ ຈະປະກອບມີ ຜູ້ນຳສາດສະຫນາ, ຜູ້ນຳຊຸມຊົນ ແລະຊົນເຜົ່າ, ຫົວຫນ້າຄອບຄົວຂະຫຍາຍ ແລະຜູ້ພິພາກສາສານປະເພນີ.[65]

---

62 International Rescue Committee. Gender Based Violence Blended Curriculum

63 USAID et al. (2017). Inter-Agency GBV Case Management Guidelines. USAID, PRIMERO, UNFPA, UNICEF, UNHCR, International Rescue Committee, International Medical Corps. 2017.

64 ອ້າງແລ້ວ

65 Ellsberg, M. (2008). Violence Against Women in Melanesia and East Timor: Building Global and Regional Promising Approaches. Canberra: Office of Development Effectiveness, AusAID; UN Women (2021). Training package for prosecutors responding to violence against women and girls in Asia and the Pacific. Bangkok; UN Women, 2021; UN Women and World Health Organization (WHO) (2022). Improving the collection and use of administrative data on violence against women. New York; UN Women and WHO, 2022.

### *ໄວໜຸ່ມ*

ສິ່ງສຳຄັນເພື່ອຮັບປະກັນວ່າ ຄວາມຕ້ອງການສະເພາະຂອງໄວໜຸ່ມ ທີ່ລອດຊີວິດຈາກຄວາມຮຸນແຮງ, ລວມທັງຜູ້ທີ່ໄດ້ແຕ່ງງານແລ້ວ, ແລະຜູ້ທີ່ມີລູກ, ແລະຜູ້ທີ່ເພິ່ງພາອາໄສທາງເສດຖະກິດ ກັບຜູ້ກະທຳຄວາມຮຸນແຮງ, ໄດ້ຮັບການພິຈາລະນາເຂົ້າໃນການອອກແບບ ແລະການໃຫ້ບໍລິການ. ຜູ້ໃຫ້ບໍລິການຄວນກຽມພ້ອມທີ່ຈະຕອບສະໜອງກັບໄວໜຸ່ມຢ່າງມີປະສິດຕິພາບ, ທັງໂດຍທາງກົງ ຫຼືຜ່ານ ການສົ່ງຕໍ່ທີ່ເໝາະສົມ ໄປຫາການບໍລິການຊ່ວຍເຫຼືອສະເພາະດ້ານທີ່ມີຢູ່ແລ້ວ. ການປົກປ້ອງເດັກ ແລະລະບົບການຮັບມືກັບ ຄວາມ ຮຸນແຮງບົນພື້ນຖານທາງເພດ (GBV) ຄວນຄຳນຶງເຖິງຄວາມສາມາດໃນການພັດທະນາຂອງເດັກ ແລະໄວໜຸ່ມຢ່າງຈະແຈ້ງ ລວມທັງ ການໃຫ້ບໍລິການວຽກງານສັງຄົມສົງເຄາະ. ເບິ່ງຕາຕະລາງໃນພາກທີ 5.4 ກ່ຽວກັບ 'ຄຳແນະນຳສຳລັບການເຮັດວຽກກັບຜູ້ລອດຊີວິດ ທີ່ເປັນເດັກນ້ອຍ, ໄວໜຸ່ມ ແລະຜູ້ໃຫຍ່' ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການຂໍຄວາມຍິນຍອມ ແລະໄວໜຸ່ມ.

### *ການຊ່ວຍເຫຼືອ ແລະ ການເບິ່ງແຍງຄະດີໄລຍະຍາວ ສຳລັບຜູ້ຖືກເຄາະຮ້າຍຈາກການລ່ວງລະເມີດທາງເພດເດັກ ຫຼື ຜູ້ໃຫຍ່ທີ່ປະສົບກັບຄວາມຮຸນແຮງທາງເພດ ເມື່ອຍັງເປັນເດັກນ້ອຍ*

ເມື່ອພິຈາລະນາວ່າ ຄວາມຮຸນແຮງທາງເພດມີຜົນກະທົບຕະຫຼອດຊີວິດ, ມັນຈຳເປັນຕ້ອງມີການຊ່ວຍເຫຼືອຢ່າງສະໝໍ່າສະເໝີ ເພື່ອ ຕິດຕາມຜົນກະທົບທີ່ອາດຈະເກີດຂຶ້ນ ແລະຕອບສະໜອງຕໍ່ຄວາມຕ້ອງການຕ່າງໆທີ່ກ່ຽວຂ້ອງ ຕະຫຼອດຊີວິດຂອງເດັກຈົນກ້າວສູ່ການ ເປັນຜູ້ໃຫຍ່.

### *ການບໍລິຫານຄຸ້ມຄອງຂໍ້ມູນ*

ມັນຍັງມີຄວາມຈຳເປັນ ທີ່ຈະສ້າງຄວາມເຂັ້ມແຂງໃນການເກັບກຳ ແລະການແບ່ງປັນຂໍ້ມູນການບໍລິຫານຄຸ້ມຄອງ ທີ່ມີຄຸນນະພາບສູງ ແລະຕໍ່ເນື່ອງກ່ຽວກັບ ຄວາມຮຸນແຮງຕໍ່ເດັກ ແລະຄວາມຮຸນແຮງຕໍ່ແມ່ຍິງ.[66] ລະບົບ ແລະການປະຕິບັດໃນການແບ່ງປັນຂໍ້ມູນ ຄວນ ເປັນໄປຕາມ ມາດຕະຖານວຽກງານ ຄວາມຮຸນແຮງບົນພື້ນຖານທາງເພດ ແລະມາດຕະຖານການປົກປ້ອງເດັກ ເພື່ອການບໍລິຫານ ຄຸ້ມຄອງຂໍ້ມູນທີ່ປອດໄພ ແລະມີຈັນຍາບັນ.[67] ຄວາມພະຍາຍາມເພື່ອປັບປຸງການປະສານງານ ແລະການບໍລິຫານຄຸ້ມຄອງຂໍ້ມູນກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ທີ່ສອດຄ່ອງກັນຢ່າງເໝາະສົມ ຈະລວມເອົາການເຊື່ອມສານເຂົ້າກັບລະບົບເຫຼົ່ານີ້, ແຕ່ຄວນຄຳນຶງເຖິງການແບ່ງປັນຂໍ້ມູນທີ່ແຕກຕ່າງກັນ, ມາດຕະຖານການປົກປ້ອງສຳລັບ ກໍລະນີຄວາມຮຸນແຮງຕໍ່ແມ່ຍິງ/ຄວາມຮຸນແຮງ ຕໍ່ເດັກ (ສິດການເຂົ້າເຖິງ, ລະບຽບການແບ່ງປັນຂໍ້ມູນ, ການລາຍງານ), ແລະຫຼີກເວັ້ນການມີພາລະທີ່ຫຼາຍເກີນໄປ ຂອງຜູ້ເກັບກຳຂໍ້ມູນ ແລະຕ້ອງຮັບປະກັນການສະໜອງຊັບພະຍາກອນ ແລະການສະໜັບສະໜູນດ້ານວິຊາການທີ່ພຽງພໍ ສຳລັບລະບົບການບໍລິການ ຄຸ້ມຄອງຂໍ້ມູນແບບເຊື່ອມສານ. ປະເພດຂອງຂໍ້ມູນທີ່ບັນທຶກໄວ້ ຈະຂຶ້ນກັບຈຸດປະສົງ ແລະສະພາບການຂອງການບໍລິການ. ການ ປະເມີນຄວາມສ່ຽງ, ແຜນການ, ບົດບັນທຶກກໍລະນີ, ການສົ່ງຕໍ່, ແລະອື່ນໆ, ຄວນສາມາດເຂົ້າເຖິງໄດ້ພາຍໃນອົງການຈັດຕັ້ງ ເພື່ອໃຫ້ ພະນັກງານສາມາດອ້າງອີງເຖິງແຜນການດັ່ງກ່າວໄດ້ງ່າຍ, ເພື່ອໃຫ້ຜູ້ຖືກເຄາະຮ້າຍ - ຜູ້ລອດຊີວິດ ບໍ່ຈຳເປັນຕ້ອງເລົ່າຊໍ້າຄືນ ປະສົບການ ຂອງຄວາມຮຸນແຮງ ແລະການລ່ວງລະເມີດຂອງພວກເຂົາຢ່າງຕໍ່ເນື່ອງ, ເພື່ອປ້ອງກັນບໍ່ໃຫ້ບຸກຄົນດັ່ງກ່າວ ເກີດບາດແຜທາງຈິດໃຈຮຸນ ແຮງຊໍ້າຄືນໃໝ່ (re-traumatising). ຍິ່ງໄປກວ່ານັ້ນ, ການເກັບກຳຂໍ້ມູນ ແລະຂໍ້ມູນຕົວເລກ ຍັງສາມາດສົ່ງເສີມຄວາມຮັບຜິດຊອບ ໃນການບໍລິການ ແລະຊ່ວຍໃຫ້ຮູ້ແນວທາງການປະຕິບັດທີ່ດີທີ່ສຸດໃນອະນາຄົດ.

### *ການປ້ອງກັນຄວາມຮຸນແຮງ ໃນລະຫວ່າງໄພພິບັດທາງທຳມະຊາດ ແລະສະຖານະການສຸກເສີນ*

ພະນັກງານບໍລິການສັງຄົມ ທີ່ເຮັດວຽກຮ່ວມກັບພະແນກຄຸ້ມຄອງໄພພິບັດ ຍັງມີບົດບາດສຳຄັນໃນການປ້ອງກັນ, ປົກປ້ອງ ແລະ ປະຕິບັດການແກ້ໄຂຕໍ່ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໃນລະຫວ່າງການກຽມພ້ອມ ແລະການຕອບສະໜອງແບບ ສຸກເສີນ, ດັ່ງທີ່ໄດ້ກຳນົດໄວ້ໃນ ຂອບວຽກພາກພື້ນອາຊຽນໃນການປົກປ້ອງ, ບົດບາດຍິງຊາຍແລະການມີສ່ວນຮ່ວມໃນການບໍລິຫານ ຈັດການໄພພິບັດ ແລະຂໍ້ແນະນຳປະກອບ.[68]

66 UN Women and World Health Organization (WHO) (2022). Improving the collection and use of administrative data on violence against women. New York; UN Women and WHO, 2022.

67 The Alliance for Child Protection in Humanitarian Action, Minimum Standards for Child Protection in Humanitarian Action, 2019 Edition, 2019; and, Gender Based Violence Area of Responsibility (2019). The Inter-Agency Minimum Standards for Gender-Based Violence in Emergencies Programming. New York: International Rescue Committee, UNFPA and UNICEF.

68 https://asean.org/book/guidelines-for-operationalising-the-asean-regional-framework-of-protection-gender- and-inclusion-in-disaster-management/

# 6. ການວາງແຜນກ່ຽວກັບ ພະນັກງານ ແລະການບໍລິການ ສັງຄົມສົງເຄາະ ສໍາລັບ ຄວາມຮຸນແຮງຕໍ່ເດັກ ແລະຄວາມ ຮຸນແຮງຕໍ່ແມ່ຍິງ

ໃນການປະເມີນ ແລະວາງແຜນການບໍລິການທີ່ຈໍາເປັນ ແລະພະນັກງານທີ່ບໍລິການສັງຄົມສົງເຄາະທີ່ຈໍາເປັນ ເພື່ອສະໜອງບໍລິການ, ເພື່ອປ້ອງກັນ ແລະແກ້ໄຂຄວາມຮຸນແຮງຕໍ່ເດັກ ແລະແມ່ຍິງ, ມີຂໍ້ກໍານົດທາງດ້ານລະບົບຈໍານວນໜຶ່ງທີ່ຈໍາເປັນ ເພື່ອຮັບປະກັນການບໍລິການດ້ານສັງຄົມສົງເຄາະ ທີ່ມີຄຸນນະພາບ:

**ຂອບນິຕິກໍາ** ແລະນະໂຍບາຍ ທີ່ມີຫຼາຍຂະແໜງການ ແລະປົກປ້ອງສິດຂອງເດັກ, ໄວໜຸ່ມ ແລະແມ່ຍິງໃຫ້ປາສະຈາກຄວາມຮຸນແຮງທຸກຮູບແບບ, ລວມທັງໃນລະຫວ່າງຄວາມຂັດແຍ່ງ, ວິກິດການ ແລະໄພພິບັດທາງທໍາມະຊາດ.[69]

- ນິຕິກໍາ ແລະນະໂຍບາຍ ຖືກເຊື່ອມເຂົ້າໃນຂໍ້ມູນການແຜ່ຂະຫຍາຍ ໃນລະດັບປະເທດທີ່ເຂັ້ມແຂງ ໂດຍແບ່ງຕາມອາຍຸ, ເພດ, ຄວາມພິການ, ຊົນເຜົ່າ ແລະສະຖານທີ່; ແລະກໍານົດຕົວວັດແທກ ສໍາລັບການບໍລິຫານຄຸ້ມຄອງການເກັບກໍາຂໍ້ມູນໃນແບບທ້ອງຖິ່ນ ແລະການລາຍງານ
- ນະໂຍບາຍ ແລະນິຕິກໍາແຫ່ງຊາດ ສອດຄ່ອງກັບມາດຕະຖານສາກົນ ແລະພາກພື້ນ ລວມທັງພັນທະໃນການຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະສິດທິໃນການປົກປ້ອງເດັກ.
- ນິຕິກໍາ (i) ຊຸກຍູ້ໃຫ້ພໍ່ແມ່, ຄູສອນ, ແລະຜູ້ເບິ່ງແຍງຄົນອື່ນໆ ໃຊ້ມາດຕະການບໍ່ຮຸນແຮງເພື່ອລົງໂທດລູກຫຼານຂອງຕົນເອງ, (ii) ກໍານົດໃຫ້ການລ່ວງລະເມີດທາງເພດ ແລະການຂູດຮີດແມ່ຍິງ ແລະເດັກນ້ອຍ ເປັນຄວາມຜິດທາງອາຍາ, (iii) ຊ່ວຍໃຫ້ສາມາດເອົາຜູ້ກະທໍາຜິດອອກຈາກເຮືອນ, ເພື່ອຊ່ວຍປ້ອງກັນການແຍກເດັກນ້ອຍໂດຍບໍ່ຈໍາເປັນ, (iv) ອະທິບາຍເຖິງການລົງໂທດ, ການຂວໍ້າບາດ ແລະມາດຕະການບັງຄັບໃຫ້ຜູ້ກະທໍາຜິດຕ້ອງໄດ້ຮັບຜິດ, ແລະ (v) ຮວມເອົາຄູ່ຮັກ/ຄູ່ຊີວິດ ທີ່ບໍ່ໄດ້ແຕ່ງງານເຂົ້າໃນຂອບກົດໝາຍ ສໍາລັບຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ.
- ຂອບນິຕິກໍາ ແລະນະໂຍບາຍແມ່ນກວມເອົາຜູ້ທີ່ມີຄວາມພິການ ແລະມີຂໍ້ບັນຍັດທີ່ຈະແຈ້ງໃນການປົກປ້ອງແມ່ຍິງ ແລະເດັກທີ່ມີຄວາມພິການ ຈາກຄວາມຮຸນແຮງ.
- ເສັ້ນທາງໄປສູ່ຄວາມສໍາເລັດທີ່ກ້າວໜ້າ ແມ່ນໄດ້ອະທິບາຍໄວ້ໃນນະໂຍບາຍທີ່ມຸ່ງຫວັງ, ໂດຍຄໍານຶງເຖິງສະພາບການທາງດ້ານເສດຖະກິດ-ສັງຄົມ ແລະ ວັດທະນະທໍາ.
- ແຜນປະຕິບັດງານຫຼາຍຂະແໜງການແຫ່ງຊາດ ກ່ຽວກັບການຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ກໍານົດຊຸດການບໍລິການສັງຄົມທີ່ຈໍາເປັນ ລວມມີແຜນການຮັບມືກັບຂໍ້ຂັດແຍ່ງ ແລະວິກິດການ.

**ກ່ອງຂໍ້ຄວາມທີ່ມີຕົວຢ່າງຂອງຂໍ້ກໍານົດການມີສ່ວນຮ່ວມຂອງຄົນພິການໃນຫວຽດນາມ:**

- ລັດຖະທໍາມະນູນແຫ່ງສາທາລະນະລັດສັງຄົມນິຍົມຫວຽດນາມ ໄດ້ຮັບການຮັບຮອງເອົາໃນປີ 1992 ແລະ ປັບປຸງໃນປີ 2001 ໂດຍສະພາແຫ່ງຊາດ. ການປົກປ້ອງຄົນພິການໄດ້ກໍານົດໄວ້ໃນມາດຕາ 59 ແລະ 67.
- ກົດໝາຍວ່າດ້ວຍຄົນພິການແຫ່ງຊາດຫວຽດນາມ (2010) ລວມມີການສ້າງຕັ້ງສະພາປະສານງານແຫ່ງຊາດ ວ່າດ້ວຍຄົນພິການ (NCCD), ການປະກາດໃຊ້ລະຫັດການເຂົ້າເຖິງທີ່ປາສະຈາກອຸປະສັກ, ມາດຕະຖານການກໍ່ສ້າງສາທາລະນະ ແລະການຂົນສົ່ງສາທາລະນະ, ແລະຄວາມພິການຫຼາຍຢ່າງ. ຂໍ້ກໍານົດລວມຢູ່ໃນກົດໝາຍວ່າດ້ວຍການຝຶກອົບຮົມວິຊາຊີບ.
- ດໍາລັດ 28/2012/ND-CP ໃຫ້ຄໍາແນະນໍາສໍາລັບຫຼາຍມາດຕາຂອງກົດໝາຍວ່າດ້ວຍຄົນພິການ.
- ແຜນປະຕິບັດງານແຫ່ງຊາດເພື່ອສະຫນັບສະຫນູນຄົນພິການ ປີ 2021-203

69 https://asean.org/book/asean-regional-framework-on-protection-gender-and-inclusion-in-disaster- management-2021-2025-arf-pgi/

**ຊັບພະຍາກອນຂອງການບໍລິການ:** ການບໍລິການສັງຄົມທີ່ຈຳເປັນເພື່ອການປ້ອງກັນ ແລະແກ້ໄຂຄວາມຮຸນແຮງຕ້ອງມີຊັບພະຍາກອນຢ່າງພຽງພໍ.

- ການວິເຄາະງົບປະມານອີງໃສ່ຫຼັກຖານ ແລະຄ່າໃຊ້ຈ່າຍທີ່ຮັບປະກັນການຈັດສັນ ແລະການຈັດສັນຢ່າງພຽງພໍສຳລັບການບໍລິການສັງຄົມທີ່ຈຳເປັນ (ລວມທັງການປົກປ້ອງສັງຄົມ) ທີ່ປ້ອງກັນ ແລະຕອບສະໜອງຕໍ່ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ.
- ຈັດງົບປະມານທີ່ລວມເອົາຄວາມພິການ ຮັບປະກັນວ່າກອງທຶນດັ່ງກ່າວຈະຊ່ວຍແກ້ໄຂອຸປະສັກ ໃນການເຂົ້າເຖິງຂອງແມ່ຍິງ ແລະເດັກນ້ອຍພິການ ໃນມາດຕະການປ້ອງກັນ ແລະແກ້ໄຂຄວາມຮຸນແຮງ, ແລະຍັງສະໜອງການສະໜັບສະໜູນທີ່ມີຈຸດປະສົງສຳລັບແມ່ຍິງ ແລະເດັກທີ່ມີຄວາມພິການ.
- ກຳນົດມາດຕະຖານການດຳເນີນງານທີ່ເໝາະສົມ ສຳລັບການບໍລິການທາງສັງຄົມທີ່ຈຳເປັນທັງໝົດ ທີ່ກຳນົດວ່າພວກເຂົາດຳເນີນງານ ໃນລັກສະນະທີ່ເຄົາລົບຄວາມເປັນສ່ວນຕົວ ແລະກຽດສັກສີຂອງແມ່ຍິງ ແລະ ເດັກນ້ອຍ.

**ການຕອບສະໜອງດ້ານບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມດ້ານຊັບພະຍາກອນມະນຸດ:** ການປະກອບອາຊີບຂອງພະນັກງານສັງຄົມສົງເຄາະ ຮຽກຮ້ອງໃຫ້ມີການກຳນົດພາລະບົດບາດ ແລະຄວາມຮັບຜິດຊອບພາຍໃນຂະແໜງການຢ່າງຈະແຈ້ງ, ລາຍລະອຽດຂອງວຽກທີ່ໄດ້ມາດຕະຖານ, ການຊີ້ນຳທີ່ມີໂຄງສ້າງ ແລະ ອັດຕາສ່ວນຂອງຜູ້ໃຊ້ບໍລິການ.[70] ການປະຕິບັດເຫຼົ່ານີ້ຄວນຄຳນຶງເຖິງ ແລະສະໜັບສະໜູນການປະສານງານກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ. ການບໍລິການວຽກງານສັງຄົມສົງເຄາະ ທີ່ສອດຄ່ອງກັບຄຳແນະນຳລວມຢູ່ໃນນີ້, ລວມທັງການຮັກສາຄວາມຊ່ຽວຊານສະເພາະທີ່ແຕກຕ່າງກັນ.

ຍຸດທະສາດດ້ານຊັບພະຍາກອນມະນຸດ ຄວນຕອບສະໜອງດ້ານບົດບາດຍິງ-ຊາຍ ແລະກວມເອົາການມີສ່ວນຮ່ວມຮອບດ້ານ. ໃນຖານະຂະແໜງການເບິ່ງແຍງ, ແມ່ຍິງມັກຈະປະກອບເປັນແຮງງານທາງສັງຄົມສ່ວນໃຫຍ່ ໂດຍສະເພາະໃນລະດັບການບໍລິການ.[71] ການຊອກຫາຊັບພະຍາກອນມະນຸດ ທີ່ຕອບສະໜອງດ້ານບົດບາດຍິງ-ຊາຍ ຄວນສົ່ງເສີມຄວາມສະເໝີພາບຂອງແມ່ຍິງ ໃນການຈ້າງງານທີ່ໄດ້ຮັບຄ່າຈ້າງ, ຕົວຢ່າງ: ຜ່ານການລາພັກລ້ຽງລູກໂດຍໄດ້ຮັບຄ່າຈ້າງ ແລະທາງເລືອກໃນການບໍລິການເບິ່ງແຍງເດັກ, ຜ່ານໂອກາດໃນການຍົກລະດັບທັກສະ ແລະການເລື່ອນຕຳແໜ່ງໄປສູ່ລະດັບຜູ້ບໍລິຫານ. ນອກຈາກນີ້, ຍັງຮຽກຮ້ອງໃຫ້ມີການຊີ້ນຳທີ່ພຽງພໍເພື່ອເຮັດໃຫ້ສາມາດພັດທະນາທັກສະໄດ້.

**ໂຄງສ້າງການບໍລິການ ແລະການປະສານງານ:** ໂຄງສ້າງວຽກງານສັງຄົມທີ່ເປັນທາງການ ຕ້ອງການການນຳພາ, ການຄຸ້ມຄອງ ແລະການຊີ້ນຳທີ່ຈະແຈ້ງ, ແລະກົນໄກການປະສານງານ, ໃນລະດັບຊາດ, ທ້ອງຖິ່ນ ແລະຊຸມຊົນ.

- ໂຄງສ້າງການນຳພາແຫ່ງຊາດທີ່ເປັນທາງການ ໄດ້ເສີມສ້າງບົດບາດຂອງພະນັກງານບໍລິການສັງຄົມເພື່ອປະສານງານ ແລະ ຊຸກຍູ້ການລິເລີ່ມການສະກັດກັ້ນ ແລະຕ້ານການໃຊ້ຄວາມຮຸນແຮງ.
- ທຸກພາກສ່ວນທີ່ກ່ຽວຂ້ອງ ມີສ່ວນຮ່ວມໃນລະດັບສູງສຸດຕັ້ງແຕ່ເລີ່ມຕົ້ນ. ຄວາມຮັບຜິດຊອບລວມນີ້ໄດ້ຮັບການສະໜັບສະໜູນ ແລະທຶນຮອນສຳລັບການຈັດຕັ້ງປະຕິບັດແຜນການ.
- ໂຄງສ້າງກຳນົດຄວາມຕ້ອງການພະນັກງານ ໂດຍພິຈາລະນາໃສ່ຈຳນວນພະນັກງານ ທີ່ພຽງພໍກັບອັດຕາສ່ວນປະຊາກອນ.[72]
- ໂຄງສ້າງພິຈາລະນາເຖິງບົດບາດຂອງລັດຖະບານ ໃນຖານະຜູ້ຮັບຜິດຊອບຕົ້ນຕໍ ແລະປະກອບມີຕົວກຳນົດການທີ່ຈະແຈ້ງສຳລັບຄວາມສຳພັນກັບຜູ້ສະໜັບສະໜູນທີ່ບໍ່ແມ່ນລັດຖະບານ, ຜູ້ປະຕິບັດ ແລະຜູ້ໃຫ້ບໍລິການທາງດ້ານສັງຄົມ.
- ມີການກຳນົດພາລະບົດບາດ, ໜ້າວຽກ ແລະຄວາມຮັບຜິດຊອບ ຂອງພະນັກງານ ວິຊາຊີບດ້ານສັງຄົມສົງເຄາະ, ພະນັກງານທີ່ໄດ້ຮັບການຝຶກອົບຮົມດ້ານສັງຄົມສົງເຄາະ ແລະອາສາສະໝັກໃນລະດັບສູນກາງ ແລະທ້ອງຖິ່ນ ແມ່ນໄດ້ຖືກກຳນົດຢ່າງຈະແຈ້ງ.
- ໃນກໍລະນີທີ່ມີ ພະນັກງານບໍລິການສັງຄົມສົງເຄາະ ທີ່ແຕກຕ່າງອອກໄປ (ຕົວຢ່າງ: ທີ່ພັກອາໄສຊົ່ວຄາວສຳລັບແມ່ຍິງ ແລະເດັກຍິງ, ພະແນກປົກປ້ອງເດັກໃນຫ້ອງການບໍລິການສັງຄົມ, ການຊ່ວຍເຫຼືອດ້ານຈິດຕະສັງຄົມທີ່ເອົາແມ່ຍິງເປັນໃຈກາງ ແລະອື່ນໆ.) ການໃຫ້ບໍລິການແມ່ນຈະຄຳນຶງເຖິງ ຄວາມຮຸນແຮງທີ່ເກີດຂຶ້ນຮ່ວມກັນ.

70 UNICEF (2019). Guidelines to Strengthen the Social Service Workforce for Child Protection. New York; February, 2019.
71 UNICEF East Asia and the Pacific Regional Office and the Global Social Service Workforce Alliance (2019). The Social Service Workforce in the East Asia and Pacific Region: Multi-Country Review, UNICEF, Bangkok, 2019.
72 GSSWA and UNICEF, October 2022, Proposed guidance on developing minimum social service workforce ratios. Desk review findings and a step-by-step guide. https://www.unicef.org/media/133416/file/PROPOSED%20GUIDANCE%20ON%20DEVELOPING%20MINIMUM%20SOCIAL%20S ERVICE%20WORKFORCE%20RATIOS.pdf

- ໂຄງສ້າງດັ່ງກ່າວ ພິຈາລະນາຄວາມຕ້ອງການດ້ານບົດບາດຍິງຊາຍ ທີ່ໃຫ້ຄວາມສໍາຄັນຕໍ່ຄວາມປອດໄພ, ແລະສະຫວັດດີການຂອງແມ່ຍິງ ແລະຜູ້ເຄາະຮ້າຍເດັກນ້ອຍ ແລະຜູ້ລອດຊີວິດຈາກຄວາມຮຸນແຮງ. ຕົວຢ່າງ, ລະບຽບການກໍານົດວ່າ ພະນັກງານສັງຄົມສົງເຄາະເພດຊາຍສາມາດ ແລະບໍ່ສາມາດເຮັດວຽກແບບສອງຕໍ່ສອງ ກັບແມ່ຍິງ ແລະຜູ້ເຄາະຮ້າຍເດັກນ້ອຍ ແລະຜູ້ລອດຊີວິດໄດ້.
- ກົນໄກສໍາລັບການເຮັດວຽກຮ່ວມກັນຢ່າງເປັນທາງການ ແລະການປະສານງານກັບພະນັກງານທີ່ເປັນຄູ່ຮ່ວມມືຢ່າງສະໝໍ່າສະເໝີ ແລະເປັນລະບົບ - ດ້ານສາທາລະນະສຸກ, ຍຸຕິທໍາ ແລະຕໍາຫລວດ, ແລະການສຶກສາ - ຖືກນໍາມາໃຊ້ຢູ່ຂັ້ນສູນກາງ ແລະທ້ອງຖິ່ນ ເພື່ອການດໍາເນີນງານຫຼາຍພາກສ່ວນ ກ່ຽວກັບການສະກັດກັ້ນ ແລະຕ້ານການໃຊ້ຄວາມຮຸນແຮງ.

**ການອາງແຜນແບບມີສ່ວນຮ່ວມ ແລະຄວາມຮັບຜິດຊອບ:** ຜູ້ຖືກເຄາະຮ້າຍ ແລະຜູ້ລອດຊີວິດ ທີ່ເປັນແມ່ຍິງ, ແລະຜູ້ໃຫຍ່ ທີ່ປະສົບກັບຄວາມຮຸນແຮງຕັ້ງແຕ່ຍັງເປັນເດັກນ້ອຍ ຄວນມີສ່ວນຮ່ວມໃນການວາງແຜນ, ການອອກແບບ ແລະທົບທວນລະບົບການບໍລິການສັງຄົມ.

- ຜູ້ຖືກເຄາະຮ້າຍ ແລະຜູ້ລອດຊີວິດ ໄດ້ຮັບຄໍາປຶກສາໃນລະຫວ່າງການວາງແຜນ, ຕິດຕາມ ແລະປະເມີນການບໍລິການປ້ອງກັນ ແລະແກ້ໄຂຄວາມຮຸນແຮງ.
- ກົນໄກການຮ້ອງຟ້ອງ ແລະການຮ້ອງທຸກ ແມ່ນສາມາດເຂົ້າເຖິງໄດ້ສໍາລັບທຸກຄົນ (ເຊັ່ນ: ພິຈາລະນາຂໍ້ຈໍາກັດດ້ານການຮູ້ໜັງສື ແລະພາສາ, ການຮັກສາຄວາມລັບ ແລະປອດໄພສໍາລັບແມ່ຍິງ ແລະເດັກນ້ອຍໃນການເຂົ້າເຖິງ, ສະເຫນີວິທີການແກ້ໄຂສະເພາະສໍາລັບແມ່ຍິງ ແລະເດັກນ້ອຍພິການ ແລະອື່ນໆ), ແລະມີການເຜີຍແຜ່ບົດລາຍງານຢ່າງເປັນປະຈໍາ.

**ຄວາມຮັບຜິດຊອບຂອງພະນັກງານ:** ມີກົນໄກເພື່ອຈັດໃຫ້ພະນັກງານບໍລິການສັງຄົມທຸກຂັ້ນ ຮັບຜິດຊອບຕາມຊຸດມາດຕະຖານ ແລະຈັນຍາບັນ.
- ໂຄງສ້າງ ແລະ ການບໍລິການເພື່ອປ້ອງກັນ ແລະ ຕອບສະໜອງຕໍ່ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ແມ່ນຢູ່ພາຍໃຕ້ມາດຕະຖານຂັ້ນຕໍ່າຢ່າງເປັນທາງການ ແລະ ສິ່ງເຫຼົ່ານີ້ຈະຖືກທົບທວນເປັນປະຈໍາ ແລະ ເປັນໄລຍະທີ່ກໍານົດໄວ້.
- ມີລະບົບການຂຶ້ນທະບຽນວິຊາຊີບໃຫ້ແກ່ພະນັກງານສັງຄົມຜ່ານສະພາແຫ່ງ ຊາດທີ່ເປັນອົງການສາທາລະນະ ເພື່ອຍົກສູງຄຸນນະພາບການປະຕິບັດວຽກງານສັງຄົມ, ສົ່ງເສີມ ແລະ ຍົກສູງມາດຕະຖານ ແລະ ຈັນຍາບັນວິຊາຊີບ.
- ຜູ້ກວດກາທົ່ວໄປ, ຜູ້ສະໜັບສະໜູນພົນລະເມືອງ ຫຼື ຜູ້ຕິດຕາມຖືກແຕ່ງຕັ້ງໃຫ້ສືບສວນການຮ້ອງຮຽນສະເພາະກ່ຽວກັບໂຄງສ້າງພະນັກງານຮັບໃຊ້ສັງຄົມ (ຄໍາຮ້ອງທຸກທີ່ບໍ່ສາມາດແກ້ໄຂໄດ້ໃນກົນໄກປົກກະຕິ).

# 7. ການພັດທະນາຄວາມຮູ້ ແລະທັກສະ, ແລະສ້າງຄວາມເປັນມືອາຊີບໃຫ້ແກ່ພະນັກງານສັງຄົມສົງເຄາະ ສໍາລັບການບໍລິການ ແກ່ຜູ້ທີ່ຖືກໃຊ້ຄວາມຮຸນແຮງຕໍ່ເດັກ ແລະຄວາມຮຸນແຮງຕໍ່ແມ່ຍິງ

ການສ້າງຄວາມເຂັ້ມແຂງຂອງພະນັກງານສັງຄົມສົງເຄາະ ປະກອບມີການສຶກສາ ແລະການພັດທະນາທັກສະ ໂດຍອີງໃສ່ຂອບຄວາມສາມາດທີ່ຕົກລົງກັນ, ລະບຽບການ ແລະການຮັບຮອງຜູ້ໃຫ້ການຝຶກອົບຮົມ ແລະການສຶກສາ, ແລະການປະເມີນ ແລະແກ້ໄຂບັນຫາ ແລະຈຸດອ່ອນຂອງຊັບພະຍາກອນມະນຸດ.

ຄວາມພະຍາຍາມເພື່ອເຮັດໃຫ້ ພະນັກງານສັງຄົມສົງເຄາະເປັນມືອາຊີບ ຄວນຮັບຮອງເອົາວິທີການທັງຫມົດຂອງລະບົບ ເຊິ່ງເນັ້ນໃສ່ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ. ອົງປະກອບທີ່ສໍາຄັນຂອງເລື່ອງນີ້ແມ່ນການພັດທະນາຄວາມຮູ້ ແລະທັກສະໂດຍຜ່ານ **ການລອງປະຕິບັດ, ການກວດສອບ ແລະນໍາໃຊ້ວິທີການສ້າງຄວາມສາມາດທີ່ມີປະສິດຕິຜົນ ທີ່ກ່ຽວຂ້ອງກັບສະພາບການ,** ລວມທັງການຝຶກອົບຮົມຄູຝຶກ (ToTs), ການຝຶກສອນ ແລະຮູບແບບການຮຽນຮູ້ທາງໄກ.

ນອກຈາກນີ້, ແນະນໍາໃຫ້ຮ່ວມມືກັບສະຖາບັນການສຶກສາລະດັບວິທະຍາໄລ ເພື່ອລວມເອົາການປ້ອງກັນຄວາມຮຸນແຮງເຂົ້າໃນຫຼັກສູດກ່ອນການບໍລິການຂອງຜູ້ຊ່ຽວຊານທີ່ກ່ຽວຂ້ອງ (ພະຍາບານ, ການຢາ, ສັງຄົມສົງເຄາະ, ການສຶກສາ, ຜູ້ຊ່ຽວຊານດ້ານການບັງຄັບໃຊ້ກົດຫມາຍ, ແລະອື່ນໆ). ສະຫນັບສະຫນູນໂຄງການການສຶກສາ, ເຊັ່ນ: ຕໍາແໜ່ງວຽກງານ ແລະການແລກປ່ຽນ ຍັງສາມາດສະຫນັບສະຫນູນພິເສດໃນວຽກງານ ຄວາມຮຸນແຮງຕໍ່ແມ່ຍິງ ແລະ / ຫຼື ຄວາມຮຸນແຮງຕໍ່ເດັກ.

**ການຮຽນຮູ້ໃນການສະໜອງບໍລິການ ແລະການຮຽນຮູ້ຢ່າງຕໍ່ເນື່ອງ ສໍາລັບການປະຕິບັດພະນັກງານສັງຄົມສົງເຄາະ, ຜູ້ຊ່ຽວຊານ ແລະອາສາສະໝັກກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ແມ່ນສໍາຄັນເຊັ່ນກັນ.** ອັນນີ້ລວມເຖິງການຮຽນຮູ້ຂອງ ຄວາມຮຸນແຮງຕໍ່ແມ່ຍິງ-ຄວາມຮຸນແຮງຕໍ່ເດັກ, ຄວາມຮູ້ ແລະປະສົບການທີ່ແບ່ງປັນໂອກາດ ໃຫ້ແກ່ພະນັກງານສັງຄົມສົງເຄາະ ເຊັ່ນດຽວກັນກັບພະນັກງານຂອງຄູ່ຮ່ວມມື ແລະຜູ້ມີບົດບາດໃນຫຼາຍຂະແໜງການທີ່ກ່ຽວຂ້ອງ. ເຫດການເຫຼົ່ານີ້ ຄວນໄດ້ຮັບການນໍາໃຊ້ເປັນໂອກາດທີ່ຈະເສີມສ້າງຄວາມສໍາພັນລະຫວ່າງຜູ້ທີ່ມີບົດບາດ ເຊັ່ນດຽວກັນກັບການປະສານງານທີ່ກ້າວຫນ້າ ແລະການປະຕິບັດການບໍລິການແບບປະສົມປະສານ ທີ່ເຫມາະສົມກັບລະບົບວຽກງານ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກນ້ອຍ.

ໂຄງການການຝຶກອົບຮົມຄວນເນັ້ນໃສ່ ຄວາມຈໍາເປັນໃນການໃຊ້ແນວທາງສະເພາະ ສໍາລັບເດັກນ້ອຍ ແລະລະບຽບການສະເພາະເດັກນ້ອຍທີ່ຕ້ອງປະຕິບັດຕາມ. ພວກເຂົາຍັງຄວນຫຼີກເວັ້ນການປະຕິບັດແບບເອົາແຕ່ຮູບການ (tokenistic), ເຊັ່ນ "ການເພີ່ມ" ເດັກນ້ອຍໃນກອງປະຊຸມ ຄວາມຮຸນແຮງຕໍ່ແມ່ຍິງ. ໃນທາງກົງກັນຂ້າມ, ກອງປະຊຸມກ່ຽວກັບ ຄວາມຮຸນແຮງຕໍ່ເດັກ ຄວນເນັ້ນໃສ່ວິທີການທີ່ແຕກຕ່າງກັນຈາກ ຄວາມຮຸນແຮງຕໍ່ແມ່ຍິງ ເຊິ່ງຈັດລໍາດັບຄວາມສໍາຄັນຂອງ ການສ້າງຄວາມເຂັ້ມແຂງ ແກ່ຜູ້ລອດຊີວິດ ໃນຖານະເປັນຜູ້ຕັດສິນໃຈ ແລະຮຽກຮ້ອງຄວາມສົນໃຈ ໄປຫາການລ່ວງລະເມີດເດັກສະເພາະເລື່ອງເພດ, ເຊັ່ນ: ຄວາມຮຸນແຮງບົນພື້ນຖານທາງເພດ (GBV) ຕໍ່ເດັກຍິງ. ດັ່ງທີ່ໄດ້ກ່າວໄວ້ຢູ່ບ່ອນອື່ນ (ເບິ່ງໄດ້ທີ່ ການປົກປ້ອງ: ແບບຢ່າງວຽກງານສັງຄົມສົງເຄາະ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ), ການຝຶກອົບຮົມຄວນລວມເອົາການເນັ້ນໜັກໃສ່ ຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ (IPV) ແລະຜົນກະທົບຂອງມັນຕໍ່ເດັກນ້ອຍ, ເຊັ່ນດຽວກັນກັບການເກີດຂຶ້ນຮ່ວມກັນຂອງ ຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ ແລະການລະເມີດເດັກ ເພື່ອສະໜັບສະໜູນການປະສານງານທີ່ມີຄວາມອ່ອນໄຫວຕໍ່ເດັກນ້ອຍ. ການບໍລິການທີ່ເປັນມິດກັບໄວໜຸ່ມ ແລະການບໍລິການທີ່ເອົາຜູ້ລອດຊີວິດເປັນໃຈກາງ.

ຄວາມພະຍາຍາມ ໃນການເຮັດໃຫ້ພະນັກງານສັງຄົມສົງເຄາະ ມີຄວາມເປັນມືອາຊີບ ຄວນຮັບປະກັນ **ການມີສ່ວນຮ່ວມທີ່ສໍາຄັນຂອງຜູ້ສະໜອງບໍລິການໃນຊຸມຊົນ ແລະຜູ້ໃຫ້ບໍລິການທີ່ນໍາພາໂດຍແມ່ຍິງ.** ຄວາມລົ້ມເຫຼວໃນການລວມເອົາສິ່ງເຫຼົ່ານີ້ ເຂົ້າໃນຄວາມພະຍາຍາມຕໍ່ກັບຄວາມສ່ຽງດ້ານວິຊາຊີບ ທີ່ເບິ່ງຂ້າມປະສົບການອັນຍາວນານຂອງພວກເຂົາ ໃນຖານະເປັນຜູ້ໃຫ້ບໍລິການແຖວໜ້າໃນຊຸມຊົນທີ່ດ້ອຍໂອກາດ ແລະຫຼຸດຜ່ອນຄວາມຮັບຜິດຊອບຕໍ່ຜູ້ລອດຊີວິດ, ເຊິ່ງສົ່ງຜົນກະທົບຕໍ່ ປະສິດຕິພາບໂດຍລວມຂອງການບໍລິການ.[73] ອົງການສິດທິແມ່ຍິງ ແລະຕົວແທນຈາກການບໍລິການຊຸມຊົນ ຄວນເປັນສ່ວນຫນຶ່ງຂອງຂະບວນການນີ້ຕັ້ງແຕ່ເລີ່ມຕົ້ນ, ເຊັ່ນ: ຜ່ານການມີສ່ວນຮ່ວມໃນການປະສານງານ ດ້ານວິຊາຊີບ ແລະກົນໄກການວາງແຜນດ້ານບໍລິການສັງຄົມຢ່າງມືອາຊີບ ຂະບວນການປະກັນຄຸນນະພາບ ແບບເປັນຂັ້ນຕອນ ເຊິ່ງລວມມີການດໍາເນີນການເພື່ອຊ່ວຍໃຫ້ ຜູ້ໃຫ້ບໍລິການຂະໜາດນ້ອຍ ປະຕິບັດໄດ້ຕາມຂໍ້ກໍານົດການປະກັນຄຸນນະພາບ ສາມາດຊ່ວຍຫຼີກເວັ້ນການຍົກຍ້າຍຂອງພວກເຂົາ ໃນຂະນະທີ່ ສະໜອງການບໍລິການຢ່າງເປັນທາງການ.

73 Stanley and Humphreys 'Multi-Agency and Multi-Disciplinary Work: Barriers and Opportunities' in Domestic violence and Child Protection : Directions for good practice (2006) London ; Philadelphia : Jessica Kingsley Publishers, 2006.

# 8. ສະໜັບສະໜູນພະນັກງານສັງຄົມສົງເຄາະ ສຳລັບການບໍລິການ ກ່ຽວກັບ ຄວາມຮຸນແຮງຕໍ່ເດັກ ແລະຄວາມຮຸນແຮງຕໍ່ແມ່ຍິງ

**ການຊີ້ນຳແບບມືອາຊີບ ດ້ານການສະໜັບສະໜູນ**

ການຊີ້ນຳຢ່າງມີໂຄງສ້າງທີ່ສະໜອງໃຫ້, ທັງແບບບຸກຄົນ ແລະເປັນກຸ່ມ, ພະນັກງານສັງຄົມສົງເຄາະ ທີ່ໃຫ້ບໍລິການຄວນສະໜັບສະໜູນການປັບປຸງຄວາມຮູ້ ແລະທັກສະການປະຕິບັດວຽກງານ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ, ການພັດທະນາການແນວທາງປະຕິບັດ ແລະການປະສານງານຂອງກໍລະນີ. ສິ່ງນີ້ຮຽກຮ້ອງໃຫ້ຜູ້ຊີ້ນຳ ຕ້ອງມີຄວາມເຂົ້າໃຈຢ່າງເຂັ້ມແຂງ ກ່ຽວກັບບັນຫາຄວາມຮຸນແຮງຕໍ່ແມ່ຍິງ, ຄວາມຮຸນແຮງຕໍ່ເດັກ ແລະຈຸດຕັດກັນຂອງທັງສອງປະເພດຄວາມຮຸນແຮງ ລວມທັງການສະໜອງການບໍລິການວຽກງານສັງຄົມສົງເຄາະ.

**ການເບິ່ງແຍງຕົນເອງ ສຳລັບພະນັກງານ**

ການສະໜັບສະໜູນ ຜູ້ໄດ້ຮັບຜົນກະທົບຈາກ ຄວາມຮຸນແຮງຕໍ່ແມ່ຍິງ/ຄວາມຮຸນແຮງຕໍ່ເດັກ ແມ່ນປະສົບການທີ່ຄຸ້ມຄ່າສຳລັບຫຼາຍໆຄົນ, ແນວໃດກໍ່ຕາມ, ລະດັບຄວາມກົດດັນທີ່ສູງ ຈະມາພ້ອມກັບການເຮັດວຽກໃນບາງຄັ້ງຄາວ. ນອກຈາກນັ້ນ, ບັນຫາຕ່າງໆເຊັ່ນ: ບາດແຜທາງຈິດໃຈທີ່ເກີດຂຶ້ນຈາກການຮັບຟັງເລື່ອງຂອງກໍລະນີ (vicarious trauma), ຄວາມກົດດັນ ແລະອາການໝົດໄຟໃນການເຮັດສິ່ງຕ່າງໆ (burnout) ກໍເປັນສິ່ງສຳຄັນທີ່ຄວນພິຈາລະນາ. ອີກສິ່ງທີ່ສຳຄັນກໍຄືພະນັກງານ ຕ້ອງມີການຊີ້ນຳຢ່າງເປັນປົກກະຕິ ແລະມີໂອກາດທີ່ຈະໂອ້ລົມສອບຖາມ ກັບເພື່ອນຮ່ວມງານພາຍໃນສະພາບການອົງການຈັດຕັ້ງ ແລະມີແຜນການເບິ່ງແຍງຕົນເອງ.

**ການຈັດຫາຊັບພະຍາກອນມະນຸດແບບຍືນຍົງ ຈຳເປັນຕ້ອງມີລະບົບການຊ່ວຍເຫຼືອດ້ານສຸຂະພາບຈິດ ສຳລັບຜູ້ໃຫ້ບໍລິການດ່ານໜ້າ** ດ້ານການປົກປ້ອງເດັກ ແລະຄວາມຮຸນແຮງຕໍ່ແມ່ຍິງ. ເມື່ອພິຈາລະນາເຖິງອັດຕາການແຜ່ຂະຫຍາຍຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຈຳນວນຂອງແມ່ຍິງທີ່ມີສັດສ່ວນສູງ ໃນສາຍວຽກງານສັງຄົມສົງເຄາະແລ້ວ, ພະນັກງານສັງຄົມສົງເຄາະຈຳນວນຫຼາຍ ກໍຈະກາຍເປັນຜູ້ລອດຊີວິດເອງນຳ. ດ້ວຍເຫດຜົນເຫຼົ່ານີ້, ມັນຈຶ່ງເປັນສິ່ງສຳຄັນທີ່ຈະມີຂໍ້ມູນ ແລະການສົ່ງຕໍ່ທາງດ້ານສຸຂະພາບຈິດ ເຊັ່ນດຽວກັນກັບການບໍລິການດ້ານຄວາມຮຸນແຮງຕໍ່ແມ່ຍິງ ຈາກຫຼາຍຂະແໜງການ. ພະນັກງານສັງຄົມສົງເຄາະ ຈະມີຄວາມສຳພັນທາງວຽກງານກັບຜູ້ໃຫ້ບໍລິການອື່ນໆ. ດ້ວຍເຫດຜົນນີ້, ການສົ່ງຕໍ່ຄວນປະກອບມີຫຼາຍທາງເລືອກ ເພື່ອຮັບປະກັນວ່າ ພະນັກງານສັງຄົມສົງເຄາະ ສາມາດເລືອກທີ່ຈະຊອກຫາການຊ່ວຍເຫຼືອ ຈາກຜູ້ໃຫ້ບໍລິການທີ່ຕ້ອງການ ແລະຮັກສາຄວາມລັບຂອງພວກເຂົາໄດ້.

**ຄວາມປອດໄພໃນບ່ອນເຮັດວຽກ ແລະການປົກປ້ອງພະນັກງານບໍລິການສັງຄົມ**

ຄວາມປອດໄພໃນບ່ອນເຮັດວຽກ ແມ່ນມີຄວາມສຳຄັນຕໍ່ການຮັບປະກັນໃຫ້ພະນັກງານບໍລິການສັງຄົມທີ່ພຽງພໍ ແລະມີປະສິດຕິພາບ ແລະເປັນສິ່ງຈຳເປັນໃນການສ້າງສະພາບແວດລ້ອມ ໃນການປິ່ນປົວແມ່ຍິງ, ຜູ້ຖືກເຄາະຮ້າຍເດັກນ້ອຍ ແລະຜູ້ລອດຊີວິດຈາກຄວາມຮຸນແຮງ. ຜູ້ໃຊ້ບໍລິການ ແລະຄອບຄົວສ່ວນໃຫຍ່ ທີ່ພະນັກງານສັງຄົມສົງເຄາະ ໃຫ້ບໍລິການ ບໍ່ໄດ້ສະແດງໃຫ້ເຫັນເຖິງໄພຂົ່ມຂູ່ ຫຼືກໍ່ໃຫ້ເກີດອັນຕະລາຍ. ແນວໃດກໍຕາມ, ໃນກໍລະນີທີ່ອາດເປັນໄປໄດ້ວ່າຈະມີໄພຂົ່ມຂູ່ເກີດຂຶ້ນ, ເຊັ່ນ: ໃນການບໍລິການປົກປ້ອງເດັກ ຫຼືສະຖານທີ່ສົງເຄາະເດັກ ທີ່ຖືກໃຊ້ຄວາມຮຸນແຮງໃນຄອບຄົວ, ນາຍຈ້າງຄວນມີຄຳແນະນຳ ເພື່ອແກ້ໄຂບັນຫາເຫຼົ່ານີ້ຢ່າງເໝາະສົມ. ມັນເປັນສິ່ງທີ່ສຳຄັນສຳລັບອົງການຈັດຕັ້ງ ທີ່ຈ້າງພະນັກງານສັງຄົມສົງເຄາະ ເພື່ອສ້າງ ແລະຮັກສາວັດທະນະທຳ ທີ່ໃຫ້ຄວາມສຳຄັນກັບຄວາມປອດໄພ ແລະຄວາມໝັ້ນຄົງຂອງພະນັກງານ.

**ການຮ່ວມມືລະຫວ່າງຂະແໜງການ**

ການຮ່ວມມືລະຫວ່າງຂະແໜງການກໍ່ມີຄວາມສຳຄັນເຊັ່ນກັນ. ມີຄວາມຈຳເປັນຕ້ອງໄດ້ສຶກສາ ແລະຊີ້ນຳວິທີການປະສານງານ ລະຫວ່າງຫຼາຍສາຂາວິຊາການ ໃນຂະບວນການສະໜອງການບໍລິການ ແລະວຽກງານທີ່ກ່ຽວຂ້ອງ ຂອງຂະແໜງສາທາລະນະສຸກ, ການສຶກສາ, ຍຸຕິທຳ, ຕຳຫຼວດ, ສານ, ການຈັດຊື້ ແລະອົງການຈັດຕັ້ງທາງສັງຄົມອື່ນໆ. ເຊິ່ງຈະເຮັດໃຫ້ການສະໜອງການບໍລິການ ມີຄວາມເປັນເອກະພາບກັນ, ມີປະສິດຕິຜົນຫຼາຍຂຶ້ນ, ຍືນຍົງຫຼາຍຂຶ້ນ, ແລະເປັນມິດຫຼາຍຂຶ້ນ.

**ເອກະສານຊ້ອນທ້າຍ 1:** ຄຳໝັ້ນສັນຍາລະດັບພາກພື້ນ ແລະລະດັບຊາດກ່ຽວກັບສິດທິມະນຸດ, ສິດທິເດັກ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ແລະສິດທິໃນການປົກປ້ອງທາງສັງຄົມ.

| | | |
|---|---|---|
| **ລະດັບໂລກ** | Convention on the Elimination of All Forms of Discrimination Against Women (CEDAW) (ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ) | 1979 |
| | Convention on the Rights of the Child (CRC) (ສົນທິສັນຍາວ່າດ້ວຍສິດທິເດັກ) | 1989 |
| | Convention on the Rights of Persons with Disabilities (CRPD) (ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ) | 2006 |
| | 2030 ວາລະສຳລັບການພັດທະນາແບບຍືນຍົງ - ເປົ້າໝາຍການພັດທະນາແບບຍືນຍົງ (SDGs)<br>SDG 1.3: ຈັດຕັ້ງປະຕິບັດລະບົບ ແລະມາດຕະການປ້ອງກັນທາງສັງຄົມທີ່ເໝາະສົມໃນລະດັບຊາດສຳລັບທຸກຄົນ, ແລະ ຮອດປີ 2030 ບັນລຸການກວມເອົາຜູ້ທຸກຍາກ ແລະຜູ້ທີ່ມີຄວາມສ່ຽງຫຼາກຫຼາຍ.<br>SDG 5.2: ລົບລ້າງທຸກຮູບແບບຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກຍິງທັງໝົດ ໃນພາກລັດ ແລະເອກະຊົນ, ລວມທັງການຄ້າມະນຸດ ແລະ ການຂູດຮີດທາງເພດ ແລະປະເພດອື່ນໆ.<br>SDG 5.3: ລົບລ້າງທຸກການປະຕິບັດທີ່ເປັນອັນຕະລາຍ, ເຊັ່ນ: ເດັກນ້ອຍ, ການແຕ່ງງານກ່ອນໄວອັນຄວນ / ການບັງຄັບແຕ່ງງານ ແລະການຕັດອະໄວຍະວະເພດຍິງ.<br>SDG 16.2: ຢຸດຕິການລ່ວງລະເມີດ, ການຂູດຮີດ, ການຄ້າມະນຸດ ແລະທຸກຮູບແບບຂອງຄວາມຮຸນແຮງຕໍ່ ແລະ ການທໍລະມານເດັກນ້ອຍ. | 2015 |
| **ລະດັບພາກພື້ນ** | ASEAN Socio-Cultural Community Blueprint 2025 (ແຜນຜັງປະຊາຄົມວັດທະນະທຳ-ສັງຄົມອາຊຽນ 2025) | 2016 |
| | ASEAN Community Vision 2025 (ວິໄສທັດປະຊາຄົມອາຊຽນ 2025) | 2015 |
| | Ha Noi Declaration on the Enhancement of Welfare and Development of ASEAN Women and Children (ຖະແຫຼງການຮ່າໂນ້ຍ ກ່ຽວກັບການເພີ່ມທະວີສະຫວັດດີການ ແລະ ການພັດທະນາແມ່ຍິງ ແລະ ເດັກອາຊຽນ) | 2010 |
| | Hanoi Declaration on Strengthening Social Work for Cohesive and Responsive ASEAN Community (ຖະແຫຼງການຮ່າໂນ້ຍ ກ່ຽວກັບການເພີ່ມທະວີວຽກງານສັງຄົມເພື່ອໃຫ້ປະຊາຄົມອາຊຽນ ເພື່ອຄວາມສະໜິດສະໜົມ ແລະ ຕອບສະໜອງ) | 2020 |
| | ASEAN Road Map for the Implementation of the Hanoi Declaration on Strengthening Social Work for Cohesive and Responsive ASEAN Community (ແຜນຖະແຫຼງການຮ່າໂນ້ຍປະຕິບັດຖະແຫຼງການອາຊຽນ ກ່ຽວກັບການເພີ່ມທະວີວຽກງານສັງຄົມເພື່ອຄວາມສະໜິດສະໜົມ ແລະຮັບມືກັບປະຊາຄົມອາຊຽນ) | |
| | ASEAN Regional Framework on Protection, Gender, and Inclusion in Disaster Management 2021–2025 (ARF-PGI) (ຂອບພາກພື້ນອາຊຽນກ່ຽວກັບການປົກປ້ອງ, ເພດ, ແລະການລວມເຂົ້າໃນການຄຸ້ມຄອງໄພພິບັດ 2021-2025) | 2021 |
| | ASEAN Declaration on Strengthening Social Protection (ຖະແຫຼງການອາຊຽນ ກ່ຽວກັບການເພີ່ມທະວີການປົກປັກຮັກສາສັງຄົມ) | 2013 |
| | Regional Framework and Action Plan to Implement the ASEAN Declaration on Strengthening Social Protection (ຂອບວຽກ ແລະແຜນການປະຕິບັດຖະແຫຼງການອາຊຽນ ກ່ຽວກັບການເພີ່ມທະວີການປົກປັກຮັກສາສັງຄົມ) | 2018 |
| | Bali Declaration on the Enhancement of the Roles and Participation of the Persons with Disabilities in ASEAN Community and Mobilization Framework of the ASEAN Decade of Persons with Disabilities (ຖະແຫຼງການບາຫຼີ ກ່ຽວກັບການເສີມຂະຫຍາຍບົດບາດ ແລະ ການເຂົ້າຮ່ວມຂອງຄົນພິການໃນປະຊາຄົມອາຊຽນ ແລະ ຂອບເຂດການເຄື່ອນໄຫວຂອງທົດສະວັດຄົນພິການອາຊຽນ) | 2011 |

| | | |
|---|---|---|
| | ASEAN Enabling Master Plan 2025: Mainstreaming the Rights of Person with Disabilities (ແຜນແມ່ບົດອາຊຽນ 2025: ການປົກປັກຮັກສາສິດທິຂອງຄົນພິການ) | 2018 |
| | Kuala Lumpur Declaration on Ageing: Empowering Older Persons in ASEAN (ຖະແຫຼງການ ກົວລາລຳເປີ ກ່ຽວກັບຜູ້ສູງອາຍຸ: ການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ສູງອາຍຸໃນອາຊຽນ) | 2015 |
| | Declaration on the Elimination of Violence Against Women in the ASEAN Region | 2012 |
| | ASEAN Regional Plan of Action on the Elimination of Violence against Women (ASEAN RPA on EVAW) (ຖະແຫຼງການກ່ຽວກັບການລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງໃນພາກພື້ນອາຊຽນ ແຜນປະຕິບັດພາກພື້ນອາຊຽນ ກ່ຽວກັບການລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ) | 2016 |
| | ASEAN Regional Plan of Action on the Elimination of Violence Against Children (ASEAN RPA on EVAC) [Includes The Declaration on the Elimination of Violence Against Women and Elimination of Violence Against Children in ASEAN dated 2013] (ແຜນປະຕິບັດງານພາກພື້ນອາຊຽນ ກ່ຽວກັບການລຶບລ້າງຄວາມຮຸນແຮງຕໍ່ເດັກນ້ອຍ [ລວມເຖິງຖະແຫຼງການກ່ຽວກັບການລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ການລຶບລ້າງຄວາມຮຸນແຮງຕໍ່ເດັກນ້ອຍໃນອາຊຽນ ລົງວັນທີ 2013]) | 2016 |
| | Declaration on the Protection of Children from all Forms of Online Exploitation and Abuse in ASEAN (ຖະແຫຼງການກ່ຽວກັບການປົກປ້ອງເດັກນ້ອຍຈາກທຸກຮູບແບບຂອງການຂູດຮີດ ແລະການລ່ວງລະເມີດທາງອອນລາຍໃນອາຊຽນ) | 2019 |
| | ASEAN Declaration on the Rights of Children in the Context of Migration. (ຖະແຫຼງການອາຊຽນ ກ່ຽວກັບສິດທິຂອງເດັກນ້ອຍ ໃນສະພາບການອົບພະຍົບ) | 2019 |
| | ASEAN Declaration on the Protection and Promotion of the Rights of Migrant Workers (ຖະແຫຼງການອາຊຽນ ກ່ຽວກັບການປົກປັກຮັກສາ ແລະການສົ່ງເສີມສິດຂອງແຮງງານເຄື່ອນຍ້າຍ) | 2007 |
| | ASEAN Consensus on the Protection of the Rights of Migrant Workers (ຄວາມເຫັນດີເຫັນພ້ອມຂອງອາຊຽນ ກ່ຽວກັບການປົກປ້ອງສິດທິ ຂອງແຮງງານອົບພະຍົບ) | 2017 |
| | The Joint Statement of the ASEAN Ministerial Meeting for Social Welfare and Development on Mitigating the Impact of COVID-19 on Vulnerable Groups (ຖະແຫຼງການຮ່ວມ ຂອງກອງປະຊຸມລັດຖະມົນຕີສະຫວັດດີການສັງຄົມ ແລະການພັດທະນາອາຊຽນ ກ່ຽວກັບການຫຼຸດຜ່ອນຜົນກະທົບ ຂອງພະຍາດໂຄວິດ-19 ຕໍ່ກຸ່ມທີ່ມີຄວາມສ່ຽງ) | 2020 |
| | The Joint Statement of the ASEAN Ministerial Meeting for Social Welfare and Development on Mitigating the Impact of COVID-19 on Vulnerable Groups (ຖະແຫຼງການຮ່ວມ ຂອງກອງປະຊຸມລັດຖະມົນຕີສະຫວັດດີການສັງຄົມ ແລະການພັດທະນາອາຊຽນກ່ຽວກັບການຫຼຸດຜ່ອນຜົນກະທົບ ຂອງພະຍາດໂຄວິດ-19 ຕໍ່ກຸ່ມທີ່ມີຄວາມສ່ຽງ) | 2020 |

**ເອກະສານຊ້ອນທ້າຍ 2:** ຂອບວຽກລະດັບໂລກ ທີ່ກ່ຽວຂ້ອງກັບການປ້ອງກັນ ແລະການແກ້ໄຂຕໍ່ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ.

| | |
|---|---|
| Essential Services Package for Women and Girls Subject to Violence<br>(ຊຸດບໍລິການທີ່ຈຳເປັນສຳລັບແມ່ຍິງ ແລະເດັກຍິງ ທີ່ຖືກໃຊ້ຄວາມຮຸນແຮງ) | 2015 |
| International Guidelines on HIV/AIDS and Human Rights<br>(ຂໍ້ແນະນຳສາກົນກ່ຽວກັບ HIV/AIDS ແລະສິດທິມະນຸດ) | 2006 |
| RESPECT Women: Preventing Violence Against Women Framework<br>(ເຄົາລົບແມ່ຍິງ: ວຽກງານປ້ອງກັນຄວາມຮຸນແຮງຕໍ່ແມ່ຍິງ) | |
| INSPIRE: Seven Strategies for Ending Violence against Children<br>(ຄວາມປາດຖະໜາ: ເຈັດຍຸດທະສາດ ໃນການຢຸດຕິຄວາມຮຸນແຮງຕໍ່ເດັກນ້ອຍ) | 2016 |
| Guidelines for the Alternative Care of Children (UN, 2010)<br>(ຄຳແນະນຳສຳລັບການເບິ່ງແຍງເດັກທາງເລືອກ) | 2010 |
| Guidelines to Strengthen the Social Service Workforce for Child Protection<br>(ແນວທາງການເສີມສ້າງພະນັກງານບໍລິການສັງຄົມ ເພື່ອການປົກປ້ອງເດັກ) | 2019 |

**ເອກະສານຊ້ອນທ້າຍ 3:** ນິຍາມຂອງພະນັກງານດ້ານການບໍລິການສັງຄົມ.

ບັນດາຄຳນິຍາມເຫຼົ່ານີ້ແມ່ນສອດຄ່ອງກັບມາດຕາ 4 ຂອງແຜນທີ່ເສັ້ນທາງອາຊຽນ ເພື່ອປະຕິບັດຖະແຫຼງການຮ່າໂນ້ຍ ກ່ຽວກັບການເພີ່ມທະວີວຽກງານສັງຄົມສົງເຄາະ ໃຫ້ແກ່ປະຊາຄົມອາຊຽນເພື່ອຄວາມສະໜິດແໜ້ນ ແລະຕອບສະໜອງ. https://asean.org/wp-content/uploads/2021/11/FINAL-ASEAN-Social-Work-Road-Map_AMMSWD-endorsed.pd; ແລະດັດແປງມາຈາກ the Global Social Service Workforce Alliance (GSSWA) definition of the workforce

| | |
|---|---|
| **ພະນັກງານບໍລິການສັງຄົມ** | ລວມມີຜູ້ຊ່ຽວຊານສະເພາະດ້ານ ທັງພາກລັດຖະບານ ແລະບໍ່ແມ່ນລັດຖະບານ ແລະຜູ້ທີ່ໄດ້ຮັບການຝຶກອົບຮົມສະເພາະດ້ານ, ແລະອາສາສະໝັກຂັ້ນຊຸມຊົນ, ຜູ້ທີ່ເຮັດວຽກກັບເດັກນ້ອຍ, ໄວໜຸ່ມ, ແມ່ຍິງທີ່ເປັນຜູ້ໃຫຍ່ ແລະຜູ້ຊາຍ, ຜູ້ສູງອາຍຸ, ຄອບຄົວ ແລະຊຸມຊົນ, ໂດຍເນັ້ນໃສ່ຜູ້ທີ່ມີຄວາມຕ້ອງການເພີ່ມເຕີມ, ໃນສະຖານະການທີ່ອ່ອນແອ ຫຼືມີຄວາມສ່ຽງ, ເພື່ອປົກປ້ອງ ແລະຮັບປະກັນການພັດທະນາສຸຂະພາບ ແລະຄວາມເປັນຢູ່ທີ່ດີ ແລະການປະຕິບັດຕາມສິດທິຂອງພວກເຂົາ. ເພື່ອເຮັດສິ່ງນີ້, ພະນັກງານບໍລິການສັງຄົມ ຈະສະໜອງການບໍລິການປ້ອງກັນ, ແກ້ໄຂ ແລະສົ່ງເສີມ ໂດຍອາໄສຄວາມຮູ້ທັງມະນຸດສະທຳ ແລະວິທະຍາສາດສັງຄົມ, ຄວາມຮູ້ພື້ນເມືອງ, ວິຊາສະເພາະ ແລະຄວາມຮູ້ແລະທັກສະ, ວິຊາການຫຼາຍຂະແໜງ, ແລະຫຼັກການດ້ານຈັນຍາບັນ.<br><br>ພະນັກງານບໍລິການສັງຄົມມີສ່ວນຮ່ວມປະຊາຊົນ, ໂຄງສ້າງ ແລະອົງການຈັດຕັ້ງຕ່າງໆ ເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງ ການບໍລິການທີ່ຈຳເປັນ, ຫຼຸດຜ່ອນຄວາມທຸກຍາກ, ສິ່ງທ້າທາຍ ແລະຫຼຸດຜ່ອນການຈຳແນກ ແລະການໂຄດກ່ຽວທາງສັງຄົມ, ສົ່ງເສີມຄວາມຍຸຕິທຳທາງສັງຄົມ ແລະສິດທິມະນຸດ, ປ້ອງກັນ ແລະແກ້ໄຂຄວາມຮຸນແຮງ, ການລ່ວງລະເມີດ, ການຂູດຮີດ, ການເມີນເສີຍ ແລະການແຍກຄອບຄົວ. ພະນັກງານໃນອົງກອ້າງປະກອບມີ: ນັກປະຕິບັດ, ນັກຄົ້ນຄວ້າ, ຜູ້ຈັດການຄຸ້ມຄອງ ແລະນັກການສຶກສາ.<br><br>ພະນັກງານບໍລິການສັງຄົມ ປະກອບມີພະນັກງານສັງຄົມສົງເຄາະ, ພະນັກງານເບິ່ງແຍງກໍລະນີ, ພະນັກງານຊຸມຊົນ, ຜູ້ຄຸ້ມຄອງກໍລະນີ, ແລະອື່ນໆ, ລວມທັງຜູ້ທີ່ເຮັດວຽກກັບກຸ່ມສະເພາະ ຫຼືໃນບັນຫາສະເພາະເຊັ່ນ: ພະນັກງານປົກປ້ອງເດັກ ແລະຊາວໜຸ່ມ, ຜູ້ຊ່ຽວຊານໃນການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ ແລະການເຮັດວຽກຮ່ວມກັບຄົນພິການ, ຄົນທີ່ມີຄວາມຕ້ອງການເບິ່ງແຍງດ້ານສຸຂະພາບຈິດ, ຜູ້ອົບພະຍົບ ແລະຜູ້ສູງອາຍຸ. ຕຳແໜ່ງວຽກງານ ແລະໜ້າທີ່ທີ່ແນ່ນອນ ແມ່ນແຕກຕ່າງກັນໄປໃນແຕ່ລະປະເທດ, ໂດຍຕ້ອງສອດຄ່ອງກັບກົດໝາຍທ້ອງຖິ່ນ, ນະໂຍບາຍ, ວັດທະນະທຳ, ຮີດຄອງປະເພນີ ແລະການພັດທະນາປະຫວັດສາດຂອງບົດບາດ ແລະວິຊາຊີບເຫຼົ່ານີ້ ໃນແຕ່ລະສະພາບການ. |

| | |
|---|---|
| **ອາຊີບສັງຄົມສົງເຄາະ** | ອາຊີບທີ່ໂດດເດັ່ນ ແລະເປັນແກນຫຼັກໃນວຽກງານບໍລິການສັງຄົມ ເປັນອາຊີບທີ່ອີງໃສ່ການປະຕິບັດ ແລະລະບຽບວິໄນທາງວິຊາການ ທີ່ສົ່ງເສີມການປ່ຽນແປງ ແລະການພັດທະນາຂອງສັງຄົມ, ຄວາມສາມັກຄີ ແລະການມີສ່ວນຮ່ວມຂອງສັງຄົມ, ການສ້າງຄວາມເຂັ້ມແຂງ ແລະເສລີພາບແກ່ປະຊາຊົນ. ຫຼັກການຄວາມຍຸຕິທຳທາງສັງຄົມ, ສິດທິມະນຸດ, ບົດບາດຍິງຊາຍ, ຄວາມອ່ອນໄຫວທາງດ້ານວັດທະນະທຳ, ຄວາມຮັບຜິດຊອບຮ່ວມກັນ ແລະການເຄົາລົບຄວາມແຕກຕ່າງຫຼາກຫຼາຍ ແມ່ນຈຸດໃຈກາງຂອງວຽກງານສັງຄົມສົງເຄາະ. ພາຍໃຕ້ທິດສະດີຂອງວຽກງານສັງຄົມສົງເຄາະ, ວິທະຍາສາດສັງຄົມ, ມະນຸດສະທຳ ແລະຄວາມຮູ້ພື້ນເມືອງ, ວຽກງານສັງຄົມສົງເຄາະມີສ່ວນຮ່ວມກັບປະຊາຊົນ ແລະໂຄງສ້າງຕ່າງໆ ເພື່ອແກ້ໄຂສິ່ງທ້າທາຍໃນຊີວິດ ແລະຍົກລະດັບຄວາມເປັນຢູ່ທີ່ດີ. |
| **ພະນັກງານສັງຄົມສົງເຄາະ** | ຜູ້ມີຄວາມຮູ້ສະເພາະດ້ານ ທີ່ຮຽນຈົບວຸດທິການສຶກສາທາງການ, ຊຸກຍູ້ການປ່ຽນແປງ ແລະການພັດທະນາຂອງສັງຄົມ, ການເຮັດວຽກຮ່ວມກັນທາງດ້ານສັງຄົມ, ແລະສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ. ແນວໃດກໍ່ຕາມ, ໃນຫຼາຍປະເທດ, ຄຳວ່າ 'ພະນັກງານສັງຄົມສົງເຄາະ' ແມ່ນໃຊ້ໃນຄວາມໝາຍທົ່ວໄປ ເພື່ອອ້າງອີງເຖິງຜູ້ທີ່ອາດຈະໃຫ້ບໍລິການເຫຼົ່ານີ້, ແຕ່ຂາດຄຸນສົມບັດທີ່ເປັນທາງການເຫຼົ່ານີ້.  ດັ່ງທີ່ໄດ້ກ່າວຂ້າງຕົ້ນ, ພະນັກງານສັງຄົມສົງເຄາະເຮັດວຽກກັບກຸ່ມສະເພາະ ຫຼືບັນຫາສະເພາະເລື້ອຍໆ. ມີສ່ວນຮ່ວມກັບບຸກຄົນ ແລະປະຊາກອນທີ່ປະສົບກັບບາດແຜທາງຈິດໃຈ (trauma). ດ້ວຍເຫດຜົນນີ້, ພວກເຂົາຈຶ່ງມີທັກສະສະເພາະທີ່ກ່ຽວຂ້ອງກັບຄວາມຕ້ອງການເຫຼົ່ານີ້ ແລະຕ້ອງການຮັບປະກັນວ່າ ວິທີການບໍ່ກໍ່ໃຫ້ເກີດອັນຕະລາຍ. ພະນັກງານສັງຄົມສົງເຄາະ ມັກຈະມີບົດບາດສຳຄັນໃນການປະສານງານລະຫວ່າງໜ່ວຍງານ ແລະການພັດທະນາລະບົບ ເຊັ່ນດຽວກັນກັບການພັດທະນານະໂຍບາຍ, ການຈັດຕັ້ງປະຕິບັດ ແລະການຕິດຕາມ. |
| **ພະນັກງານທີ່ໄດ້ຮັບການຝຶກອົບຮົມສະເພາະດ້ານຫຼືຝຶກອົບຮົມດ້ານສັງຄົມສົງເຄາະ** | ປະຊາຊົນທີ່ໄດ້ຮັບການຝຶກອົບຮົມ, ໂດຍຜ່ານການຝຶກອົບຮົມທີ່ບໍ່ແມ່ນ ວຸດທິການຈົບການສຶກສາທາງການເພື່ອປະຕິບັດຫນ້າທີ່ວຽກງານສັງຄົມສົງເຄາະບາງຢ່າງ, ໃນຂະນະທີ່ເຮັດວຽກຄຽງຄູ່ ຫຼືສະຫນັບສະຫນູນການເຮັດວຽກ ຂອງຜູ້ຊ່ຽວຊານໃນສາຂາດຽວກັນ. ພວກເຂົາຊອກຫາວິທີ ຕອບສະຫນອງຄວາມຕ້ອງການ ຂອງບຸກຄົນໃນສະຖານະການ ແລະກຸ່ມ ທີ່ມີຄວາມສ່ຽງ ໂດຍຜ່ານການເຜີຍແຜ່ ແລະການຊ່ວຍເຫຼືອໃນລະດັບຊຸມຊົນ ແລະມີຄວາມສຳຄັນຕໍ່ການສະຫນອງການບໍລິການທາງສັງຄົມ ໂດຍສະເພາະໃນສະພາບແວດລ້ອມທີ່ມີຊັບພະຍາກອນທີ່ໜ້ອຍ. ພະນັກງານທີ່ໄດ້ຮັບການຝຶກອົບຮົມສະເພາະດ້ານ ໃຫ້ບໍລິການໃນພາລະບົດບາດຕ່າງໆ ເປັນພະນັກງານທີ່ໄດ້ຮັບຄ່າຈ້າງ ຫຼືເປັນອາສາສະໝັກ. |
| **ພະນັກງານພັນທະມິດ** | ຜູ້ຊ່ຽວຊານສະເພາະ ແລະຜູ້ທີ່ຜ່ານການອົບຮົມທີ່ກ່ຽວຂ້ອງ ໃນຂະແໜງການຕ່າງໆ ເຊັ່ນ: ການສຶກສາ, ສາທາລະນະສຸກ ຫຼືຍຸຕິທຳ, ຜູ້ທີ່ມີພາລະບົດບາດສຳຄັນ ທີ່ກ່ຽວຂ້ອງກັບການເບິ່ງແຍງ, ຊ່ວຍເຫຼືອ, ປ້ອງກັນ, ສ້າງຄວາມເຂັ້ມແຂງ, ປົກປ້ອງ ແລະສົ່ງເສີມສິດທິຂອງປະຊາຊົນ. ພວກເຂົາບໍ່ແມ່ນຜູ້ໃຫ້ບໍລິການສັງຄົມຕົ້ນຕໍ, ແຕ່ປະຕິບັດບົດບາດສະເພາະໃນຂະແຫນງການຂອງຕົນເອງ. ພາລະບົດບາດ ແລະຄວາມຮັບຜິດຊອບທີ່ເຂົາເຈົ້າປະຕິບັດສາມາດເປັນສິ່ງສຳຄັນ ໃຫ້ແກ່ການໃຫ້ບໍລິການສັງຄົມໄດ້ຢ່າງມີປະສິດຕິພາບ (ອາດລວມເຖິງ ພະນັກງານຂອງໂຮງຮຽນ ທີ່ຮັບຜິດຊອບການຮັບເຂົ້າຮຽນ ແລະການຊ່ວຍເຫຼືອເພີ່ມເຕີມຢູ່ໃນໂຮງຮຽນ ສຳລັບເດັກນ້ອຍທີ່ຕ້ອງອາໄສຢູ່ກັບຜູ້ອຸປະຖຳ ຫຼືຜູ້ເບິ່ງແຍງທີ່ເປັນພີ່ນ້ອງ; ພະນັກງານຂອງໂຮງຫມໍທີ່ຕິດຕໍ່ຢ່າງໃກ້ຊິດໂດຍມີພະຍາບານ, ພະນັກງານເບິ່ງແຍງ ແລະພະນັກງານບໍລິການສັງຄົມໃນຊຸມຊົນ ເພື່ອກະກຽມການອອກຈາກໂຮງຫມໍ ຂອງຜູ້ສູງອາຍຸ ຫຼືຄົນພິການທີ່ມີຄວາມສ່ຽງ; ແລະ, ສຳລັບແມ່ ແລະເດັກນ້ອຍ ທີ່ປະສົບກັບຄວາມຮຸນແຮງໃນຄອບຄົວ, ອຳນາດການປົກຄອງທ້ອງຖິ່ນ ຈະກະກຽມບ່ອນພັກອາໄສຊົ່ວຄາວທີ່ເຫມາະສົມ ແລະລາຄາບໍ່ແພງ, ການປະສານງານກັບຕຳຫຼວດ ແລະການບໍລິການສັງຄົມ ກ່ຽວກັບແຜນຄວາມປອດໄພ). ໃນທາງກົງກັນຂ້າມ, ການເຮັດວຽກຂອງພະນັກງານບໍລິການສັງຄົມ ສາມາດຊ່ວຍເພີ່ມທະວີປະສິດຕິຜົນ ຂອງການບໍລິການຂອງຂະແໜງພັນທະມິດໄດ້. ຕົວຢ່າງ, ຜົນໄດ້ຮັບດ້ານສຸຂະພາບສາມາດ ໄດ້ຮັບການປັບປຸງ ໂດຍຜ່ານການແກ້ໄຂປັດໄຈທາງສັງຄົມ ແລະສິ່ງແວດລ້ອມ ທີ່ຕິດພັນກັບພະຍາດ ແລະສະພາບສຸຂະພາບຊຳເຮື້ອ, ໃນການປ້ອງກັນ, ການປິ່ນປົວ, ການຟື້ນຕົວ ແລະການຟື້ນຟູຊີວິດ.  ພະນັກງານພັນທະມິດຮ່ວມມືຢ່າງໃກ້ຊິດ ຄຽງຄູ່ກັບພະນັກງານບໍລິການສັງຄົມ, ແຕ່ກໍມີຄວາມສອດຄ່ອງກັບ ກຸ່ມວິຊາຊີບອື່ນໆ, ເຊັ່ນ: ທ່ານຫມໍ, ພະຍາບານ, ທະນາຍຄວາມ, ຜູ້ພິພາກສາ, ຄູສອນ, ແລະຕຳຫຼວດ. |

| | |
|---|---|
| **ອາສາສະໝັກ** | ອາສາສະໝັກທີ່ປະກອບສ່ວນເຂົ້າໃນ ຂະແໜງບໍລິການສັງຄົມ ບໍ່ໄດ້ເປັນກຸ່ມດຽວກັນ. ພວກເຂົາອາດຈະເປັນຜູ້ຊ່ຽວຊານ, ຜູ້ທີ່ໄດ້ຮັບການຝຶກອົບຮົມສະເພາະດ້ານ ຫຼືເປັນບຸກຄົນທົ່ວໄປ, ທີ່ໄດ້ຮັບ ຫຼືບໍ່ໄດ້ຮັບຄ່າຕອບແທນ. ອາສາສະຫມັກມີບົດບາດເສີມ ໂດຍການຊ່ວຍຕື່ມຊ່ອງຫວ່າງຂອງວຽກງານ ທີ່ບໍ່ໄດ້ກວມເອົາ ໂດຍພະນັກງານທີ່ມີຄວາມຊ່ຽວຊານສະເພາະດ້ານ ຫຼືຜູ້ທີ່ໄດ້ຮັບການຝຶກອົບຮົມສະເພາະດ້ານ ທີ່ໄດ້ຮັບຄ່າຕອບແທນ, ເຊິ່ງສ່ວນຫຼາຍແມ່ນຢູ່ໃນຂັ້ນຊຸມຊົນ. ອາສາສະໝັກ ຄວນຈະປະຕິບັດຕາມຫຼັກການຈັນຍາບັນຫຼັກ ທີ່ເປັນແນວທາງໃຫ້ກັບຂະແໜງບໍລິການສັງຄົມ, ໂດຍມີຄ່ານິຍົມທີ່ສໍາຄັນ ແມ່ນ 'ບໍ່ກໍ່ໃຫ້ເກີດອັນຕະລາຍ' ຈະຕ້ອງຍັງຄົງເປັນຄວາມຮັບຜິດຊອບຂອງອົງການຈັດຕັ້ງ, ຜູ້ຊ່ຽວຊານສະເພາະດ້ານ ແລະຜູ້ທີ່ໄດ້ຮັບການຝຶກອົບຮົມສະເພາະດ້ານ ທີ່ນໍາໃຊ້ການບໍລິການຂອງອາສາສະຫມັກ ເພື່ອຄວບຄຸມການປະພຶດຂອງຕົນເອງ ແລະຮັບປະກັນວ່າອາສາສະຫມັກມີຄວາມສາມາດ, ທັກສະ, ການຝຶກອົບຮົມ, ການສະຫນັບສະຫນູນ ແລະການຊີ້ນໍາ ໃນລະດັບທີ່ຈໍາເປັນ, ເພື່ອມີສ່ວນຮ່ວມຢ່າງປອດໄພໃນສະພາບແວດລ້ອມສະເພາະ.<br><br>ຜູ້ຊ່ຽວຊານດ້ານສັງຄົມສົງເຄາະຫຼາຍຄົນ ແລະສະມາຊິກອື່ນໆຂອງພະນັກງານບໍລິການສັງຄົມ ເລີ່ມຕົ້ນການເຮັດວຽກຂອງພວກເຂົາ ໂດຍຜ່ານປະສົບການເປັນອາສາສະຫມັກມາກ່ອນ, ແລະຄວນສົ່ງເສີມພາລະບົດບາດ ຂອງການບໍລິການອາສາສະໝັກ ໃນຖານະທີ່ເປັນບາດກ້າວສູ່ຕະຫຼາດແຮງງານ ການພັດທະນານີ້ ຄວນຈະຢູ່ໃນຂອບເຂດການເຮັດວຽກງານ ທີ່ອີງໃສ່ຄວາມສາມາດ ແລະມີລະບຽບການ, ທີ່ເຮັດໃຫ້ບຸກຄົນທີ່ຮັບໃຊ້ຊຸມຊົນທ້ອງຖິ່ນຂອງຕົນເປັນເທື່ອທໍາອິດ ດ້ວຍຄວາມສະຫມັກໃຈ ແລະສາມາດກ້າວຂຶ້ນສູ່ລະດັບວິຊາຊີບທີ່ສູງຂຶ້ນ ໂດຍໄດ້ຮັບການຝຶກອົບຮົມໂດຍອີງໃສ່ຄວາມສາມາດ ແລະການດໍາເນີນການຊີ້ນໍາ. |

## **ເອກະສານຊ້ອນທ້າຍ 4:** ການສ້າງແຜນໃນການປະຕິບັດ, ນະໂຍບາຍ ແລະເຄື່ອງມືທີ່ພົ້ນເດັ່ນ ໃນການບໍລິການທີ່ຈຳເປັນຕໍ່ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງຕໍ່ເດັກ - ຄວາມຮຸນແຮງຕໍ່ແມ່ຍິງ

ເບິ່ງໄດ້ທີ່ລິ້ງນີ້: ANNEX - Mapping of Existing Good Practice, Policies and Tools on Essential Services to Victims of VAC-VAW .xlsx

| **ປະເທດສະມາຊິກອາຊຽນ** | **ການປະຕິບັດທີ່ດີໃນດ້ານກົດໝາຍ ແລະນະໂຍບາຍທີ່ກ່ຽວຂ້ອງກັບວຽກງານສັງຄົມສົງເຄາະ ແລະພະນັກງານແຖວໜ້າ (ຜູ້ໃຫ້ບໍລິການ) ທີ່ກ່າວເຖິງຈຸດຕັດກັນຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ** | **ລະບຽບການ ການບໍລິການ, ຄຳແນະນຳ ຫຼືເຄື່ອງມື ທີ່ສະໜັບສະໜູນການບໍລິການຄຸ້ມຄອງກໍລະນີ ທີ່ມີການປະສານງານ ແລະ/ຫຼືມີການເຊື່ອມສານ ສຳລັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ** | **ການປະຕິບັດທີ່ດີ ໃນການເສີມສ້າງຄວາມເຂັ້ມແຂງຂອງພະນັກງານສັງຄົມສົງເຄາະ ຫຼືພະນັກງານແຖວໜ້າ (ຜູ້ໃຫ້ບໍລິການ) ໃນກ່າວເຖິງຈຸດຕັດກັນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໃນການປ້ອງກັນ ແລະການແກ້ໄຂ.** | **ເຄື່ອງມື ຫຼືອຸປະກອນ ເສີມສ້າງຄວາມສາມາດ / ການຝຶກອົບຮົມ ທີ່ກອມເອົາທັງ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ (ໃນພາສາອັງກິດ ຫຼືພາສາທ້ອງຖິ່ນ)** |
|---|---|---|---|---|
| **ກຳປູເຈຍ** | ກຳປູເຈຍມີກົດໝາຍວ່າດ້ວຍການປ້ອງກັນຄວາມຮຸນແຮງໃນຄອບຄົວ ແລະການປົກປ້ອງຜູ້ຖືກເຄາະຮ້າຍ (ກົດໝາຍວ່າດ້ວຍຄວາມຮຸນແຮງໃນຄອບຄົວ ປີ 2006) ທີ່ກອມເອົາທັງແມ່ຍິງ ແລະເດັກນ້ອຍທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ.<br><br>ລັດຖະບານກຳປູເຈຍພວມດຳເນີນການ ກ່ຽວກັບ ກົດໝາຍວ່າດ້ວຍການປົກປ້ອງເດັກ ເຊິ່ງຢູ່ໃນໄລຍະສຸດທ້າຍຂອງການປັບປຸງ ກ່ອນທີ່ຈະຍື່ນສະເໜີຕໍ່ສະພາແຫ່ງຊາດ. ກົດໝາຍວ່າດ້ວຍການປົກປ້ອງເດັກ ສ້າງການເຊື່ອມໂຍງລະຫວ່າງ ຄວາມຮຸນແຮງຕໍ່ເດັກ ແລະຄວາມຮຸນແຮງຕໍ່ແມ່ຍິງ ເມື່ອກຳນົດບົດບາດຂອງ ຄະນະກຳມະການທີ່ປຶກສາຂອງແມ່ຍິງ ແລະເດັກນ້ອຍ ແລະສະພາຊຸມຊົນສຳລັບແມ່ຍິງ ໃນການສະໜອງການບໍລິການປົກປ້ອງເດັກ ແລະຄອບຄົວ.<br><br>ກົດໝາຍວ່າດ້ວຍຄວາມຮຸນແຮງໃນຄອບຄົວຈະໄດ້ຮັບການປັບປຸງ. ກະຊວງແມ່ຍິງ ໄດ້ລິເລີ່ມການປຶກສາຫາລື ກ່ຽວກັບການປັບປຸງໃນກາງປີ 2023. ດັ່ງທີ່ປະຈຸບັນ, ຄວາມຮຸນແຮງໃນຄອບຄົວ ໄດ້ສ້າງການເຊື່ອມໂຍງລະຫວ່າງ ຄວາມຮຸນແຮງຕໍ່ເດັກ ແລະຄວາມຮຸນແຮງຕໍ່ແມ່ຍິງ, ເຊັ່ນ: ມາດຕາ 2 ກຳນົດວ່າ: "ຄວາມຮຸນແຮງໃນຄອບຄົວແມ່ນໝາຍເຖິງຄວາມຮຸນແຮງທີ່ເກີດຂຶ້ນ ແລະອາດຈະເກີດຂຶ້ນກັບ: 1- ຜົວ ຫຼືເມຍ 2-ເດັກນ້ອຍທີ່ຕ້ອງເພິ່ງພາອາໄສ 3- ບຸກຄົນທີ່ອາໄສຢູ່ໃນເຮືອນ ແລະຜູ້ທີ່ເພິ່ງພາຄົວເຮືອນ". | ດ້ວຍການສະໜັບສະໜູນຂອງອົງການ UNICEF, ກະຊວງແມ່ຍິງ ໄດ້ພັດທະນາເອກະສານແນະນຳສຳລັບການເຊື່ອມສານຄວາມຮຸນແຮງບົນພື້ນຖານທາງເພດ ເຂົ້າໃນມາດຕະຖານການດຳເນີນວຽກງານປົກປ້ອງເດັກ ແລະການຄຸ້ມຄອງກໍລະນີຂັ້ນຕົ້ນ.<br><br>ກະຊວງແມ່ຍິງ ໄດ້ເຊື່ອມສານແຜນງານການລ້ຽງລູກໃນທາງບວກທີ່ຕອບສະໜອງຕໍ່ບົດບາດຍິງຊາຍ ໄວ້ໃນແຜນຍຸດທະສາດ ໄລຍະ 5ປີ ເພື່ອເສີມສ້າງຄວາມເຂັ້ມແຂງ ສຸມໃສ່ວຽກງານບົດບາດຍິງຊາຍ ແລະ ການສ້າງຄວາມເຂັ້ມແຂງແກ່ແມ່ຍິງ ປີ 2019-2023. ພາຍໃຕ້ຍຸດທະສາດທີ 2 - ການສຶກສາຂອງແມ່ຍິງ ແລະ ເດັກຍິງ. ກະລຸນາເບິ່ງທີ່ລິ້ງນີ້: Neary-Rattanak-V-final-Eng.pdf (mowa.gov.kh)<br><br>ກະຊວງແມ່ຍິງ ຍັງໄດ້ສ້າງຍຸດທະສາດການລ້ຽງລູກໃນທາງບວກ ແລະຊຸດເຄື່ອງມືສຳລັບພໍ່ແມ່ ແລະຜູ້ປົກຄອງ ເພື່ອປ້ອງກັນ ແລະແກ້ໄຂຄວາມຮຸນແຮງຕໍ່ເດັກ ແລະຄວາມຮຸນແຮງໃນຄອບຄົວ. | ດ້ວຍການສະໜັບສະໜູນຂອງ ອົງການ UNFPA, ຈຶ່ງມີການດຳເນີນການລິເລີ່ມຕ່າງໆ ເພື່ອສ້າງຄວາມເຂັ້ມແຂງໃຫ້ກັບວຽກງານສັງຄົມສົງເຄາະ ເພື່ອແກ້ໄຂ ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກຍິງ, ລວມທັງການທົບທວນ ແລະການເປີດຕົວຫຼັກສູດສຳລັບການບໍລິການ ແລະກ່ອນການບໍລິການ ແລະການພັດທະນາຄວາມສາມາດ ເພື່ອຍົກລະດັບການບໍລິການປະສານງານທີ່ມີຄຸນນະພາບ ລະຫວ່າງຂະແໜງສາທາລະນະສຸກ, ຍຸຕິທຳ, ຕຳຫຼວດ ແລະວຽກງານສັງຄົມສົງເຄາະ. ລະບົບຂໍ້ມູນບໍລິຫານ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງຍັງໄດ້ຮັບການເສີມສ້າງເຊັ່ນກັນ, ເພື່ອໃຫ້ເປັນການບໍລິການ ທີ່ມີການປະສານງານທີ່ດີຂຶ້ນ ແລະ ພັດທະນານະໂຍບາຍທີ່ອີງໃສ່ຫຼັກຖານ. | ກະຊວງສັງຄົມ, ນັກຮົບເກົ່າ ແລະການຟື້ນຟູຊາວໜຸ່ມ ໄດ້ສ້າງປຶ້ມແນະນຳກ່ຽວກັບຄວາມສາມາດພື້ນຖານ ຂອງພະນັກງານສັງຄົມສົງເຄາະ (2019), ແລະຊຸດອົບຮົມກ່ຽວກັບ ຄວາມຮຸນແຮງບົນພື້ນຖານທາງເພດ (2022).<br><br>ລິ້ງແຜນຍຸດທະສາດການຝຶກອົບຮົມ ພະນັກງານສັງຄົມສົງເຄາະ (SSW) http://mosvy.gov.kh/wp-content/uploads/2021/06/ TRG_SP_2021_2025_English_Signed-1.pdf |

| ປະເທດ ສະມາຊິກ ອາຊຽນ | ການປະຕິບັດທີ່ດີໃນດ້ານກົດໝາຍ ແລະນະໂຍບາຍທີ່ກ່ຽວຂ້ອງກັບວຽກງານສັງຄົມສົງເຄາະ ແລະພະນັກງານແຖວໜ້າ (ຜູ້ໃຫ້ບໍລິການ) ທີ່ກ່າວເຖິງຈຸດຕັດກັນຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ | ລະບຽບການ ການບໍລິການ, ຄຳແນະນຳ ຫຼືເຄື່ອງມື ທີ່ສະໜັບສະໜູນການບໍລິການຄຸ້ມຄອງກໍລະນີ ທີ່ມີການປະສານງານ ແລະ/ຫຼືມີການເຊື່ອມສານ ສຳລັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ | ການປະຕິບັດທີ່ດີ ໃນການເສີມສ້າງຄວາມເຂັ້ມແຂງຂອງພະນັກງານສັງຄົມສົງເຄາະ ຫຼືພະນັກງານແຖວຫນ້າ (ຜູ້ໃຫ້ບໍລິການ) ໃນກ່າວເຖິງຈຸດຕັດກັນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໃນການປ້ອງກັນ ແລະການແກ້ໄຂ. | ເຄື່ອງມື ຫຼືອຸປະກອນ ເສີມສ້າງຄວາມສາມາດ / ການຝຶກອົບຮົມ ທີ່ກອມເອົາທັງ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ (ໃນພາສາອັງກິດ ຫຼືພາສາທ້ອງຖິ່ນ) |
|---|---|---|---|---|
| **ອິນໂດເນເຊຍ** | ເພື່ອຈັດຕັ້ງປະຕິບັດກົດໝາຍທີ່ກ່ຽວຂ້ອງກັບ ການບໍລິການປົກປ້ອງແມ່ຍິງ ແລະເດັກນ້ອຍຈາກຄວາມຮຸນແຮງ, ລັດຖະບານອິນໂດເນເຊຍ ໄດ້ນຳສະເໜີຮູບແບບການບໍລິການລວມ ທີ່ເອີ້ນວ່າ ໜ່ວຍບໍລິການລວມເພື່ອປົກປ້ອງແມ່ຍິງ ແລະເດັກຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງ(UPTPPA). ບັນດາກົດໝາຍ ແລະແນວທາງປະຕິບັດທາງດ້ານເຕັກນິກ ລວມທັງມາດຕະຖານການດຳເນີນງານ ວ່າດ້ວຍມາດຕະຖານບໍລິການ ແລະການຄຸ້ມຄອງກໍລະນີ ເພື່ອນຳໄປປະຕິບັດ ແມ່ນອອກເປັນຮູບແບບລັດຖະດຳລັດ ແລະແຈ້ງການ ຂອງກະຊວງພາຍໃນ ແລະ ກະຊວງສ້າງຄວາມເຂັ້ມແຂງແກ່ແມ່ຍິງ ແລະປົກປ້ອງເດັກ ເພື່ອໃຫ້ 37 ແຂວງ ແລະໜ່ວຍງານກວ່າ 514 ແຫ່ງ /ເມືອງ ມີເອກະສານອ້າງອີງ.<br><br>ເບິ່ງຕົວຢ່າງໃນການເຮັດວຽກທີ່ກ່ຽວຂ້ອງກັບພະຍາດເອສໄອວີ (HIV) ໃນແຂວງຊະວາ (Central Java) ມີກົດລະບຽບຂອງເຈົ້າແຂວງ 3 ຂໍ້ຄື:<br><br>ມາດຕາ 6 ແລະ ມາດຕາ 8 ຂອງກົດລະບຽບການປົກຄອງແຂວງຊະວາ ສະບັບເລກທີ 21 ປີ 2021 ກ່ຽວກັບການຈັດຕັ້ງປະຕິບັດການບໍລິການແບບເຊື່ອມສານ ສຳລັບແມ່ຍິງ ແລະເດັກນ້ອຍ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ, ການຂູດຮີດ, ແລະການຈຳແນກ | ລັດຖະມົນຕີ ກະຊວງສ້າງຄວາມເຂັ້ມແຂງແກ່ແມ່ຍິງ ແລະການປົກປ້ອງເດັກ ກົດລະບຽບ ເລກທີ 2 ປີ 2022 ໄດ້ນຳສະເຫນີມາດຕະຖານການບໍລິການ ສຳລັບການປົກປ້ອງແມ່ຍິງ ແລະເດັກນ້ອຍ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ, ເຊິ່ງມີລະບຽບການວ່າດ້ວຍການບໍລິການ, ມາດຕະຖານການດຳເນີນງານ (SOPs) ແລະແບບຟອມສຳລັບການຄຸ້ມຄອງກໍລະນີຕ່າງໆ. ໃນຖານະເປັນລະບຽບການ ຂອງການບໍລິການ, ເອກະສານຊ້ອນທ້າຍຂອງກົດລະບຽບກະຊວງສະບັບນີ້ ນຳພາການພົວພັນກັບຜູ້ໃຫ້ບໍລິການອື່ນໆ ທີ່ມີຄວາມກ່ຽວຂ້ອງ ແລະຈຳເປັນສຳລັບການປົກປ້ອງແມ່ຍິງ ແລະເດັກ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ.<br><br>ເພື່ອສະຫນັບສະຫນູນການຄຸ້ມຄອງຂໍ້ມູນຂ່າວສານ ກ່ຽວກັບການບໍລິການ ແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ, ກະຊວງທີ່ໄດ້ຮັບການສະຫນັບສະຫນູນຈາກ ອົງການ UNICEF ແລະອົງການ UNFPA ກຳລັງເສີມສ້າງລະບົບການຄຸ້ມຄອງຂໍ້ມູນຂ່າວສານ. ລະບົບນີ້ເອີ້ນວ່າ SIMFONI-PPA. ນອກຈາກນັ້ນ, ດ້ວຍການສະໜັບສະໜູນຂອງ ອົງການ UNFPA, ກະຊວງສ້າງຄວາມເຂັ້ມແຂງແກ່ແມ່ຍິງ ແລະ ການປົກປ້ອງເດັກ ແລະ ອົງການສະຖິຕິສູນກາງ ໄດ້ດຳເນີນການສຳຫຼວດຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກຍິງຢ່າງສະໝໍ່າສະເໝີ (ໃນປີ 2016, 2021) ແລະແຜນການຄັ້ງຕໍ່ໄປແມ່ນໃນປີ 2024. | ກະຊວງສັງຄົມ ໄດ້ສ້າງຫຼັກສູດຝຶກອົບຮົມ ກ່ຽວກັບການປ້ອງກັນ ແລະປິ່ນປົວແມ່ຍິງ ແລະເດັກນ້ອຍ ທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ໃຫ້ແກ່ຜູ້ຊ່ວຍພະນັກງານສັງຄົມສົງເຄາະ. ຂໍ້ມູນນີ້ໄດ້ຖືກນຳໃຊ້ຢ່າງກວ້າງຂວາງ ໃນການຝຶກອົບຮົມພະນັກງານແຖວໜ້າ ຂອງໂຄງການປົກປ້ອງທາງສັງຄົມ ແລະການຟື້ນຟູທາງສັງຄົມ.<br><br>ໃນປີ 2019, ກະຊວງສາທາລະນະສຸກ ໄດ້ເຜີຍແຜ່ຫຼັກສູດ ການຝຶກອົບຮົມໃຫ້ຄູເຝິກ (TOT) ສຳລັບການບໍລິການດ້ານສຸຂະພາບຂອງຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ, ແລະ ອາດຊະຍາກຳຂອງການຄ້າມະນຸດ. ຮ່ວມກັບສະຖາບັນຄົ້ນຄວ້າ ແລະພັດທະນາ UHAMKA, ໃນໄລຍະການແຜ່ລະບາດຂອງພະຍາດດັ່ງກ່າວ, ອົງການ UNDP ອິນໂດເນເຊຍ ໄດ້ໃຫ້ບຸລິມະສິດໃນການເສີມສ້າງເສັ້ນທາງການສົ່ງຕໍ່ ເພື່ອຮັບມືກັບຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງທາງເພດ ໃນ 9 ພື້ນທີ່ຂອງນະຄອນຫຼວງຈາກາຕາ, ເມືອງເດພອກ (Depok), ເມືອງໂບກໍ (Bogor), ເມືອງເບກາສີ (Bekasi), ເມືອງຕັງເກີຣັງໃຕ້ (South Tangerang), ເມືອງປາລູ (Palu). ເມືອງຈາຍາປູຣາ (Jaya Pura), ເຂດຈາຍາປູຣາ (Jayapura Regency) ແລະຕຳຫຼວດພາກພື້ນປາປົວ (Papua) ແລະເມືອງສຸຣາບາຢາ (Surabaya).<br><br>https://www.undp.org/indonesia/news/collaboration-support-survivors-gender-based-violence-scaled-during-covid-19-pandemic<br><br>ເຄືອຂ່າຍໄດ້ຖືກສ້າງຕັ້ງຂຶ້ນລະຫວ່າງຫນ່ວຍບໍລິການແບບປະສົມປະສານ ສຳລັບການປົກປ້ອງແມ່ຍິງ ແລະເດັກນ້ອຍ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ.<br><br>ດ້ວຍການສະໜັບສະໜູນຂອງ ອົງການ UNFPA, ກະຊວງເສີມສ້າງຄວາມເຂັ້ມແຂງແກ່ແມ່ຍິງ ແລະການປົກປ້ອງເດັກ ແມ່ນກຳລັງເສີມສ້າງກົນໄກປະສານງານ ທີ່ນຳພາໂດຍລັດຖະບານ ສຳລັບການລິເລີ່ມຫຼາຍຂະແໜງການ ເພື່ອປ້ອງກັນ ແລະແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ, ລວມທັງໃນສະພາບການດ້ານມະນຸດສະທຳ, ເພື່ອສະໜອງການບໍລິການຄຸນນະພາບສູງ ທີ່ສົມບູນແບບສຳລັບຜູ້ລອດຊີວິດ. ເປັນສ່ວນຫນຶ່ງຂອງການສ້າງລະບົບ ທີ່ໄດ້ຮັບການສະຫນັບສະຫນູນຂອງ ອົງການ UNFPA, ຫຼັກສູດຍົກລະດັບການບໍລິການ ແລະການບໍລິການ ສຳລັບພະນັກງານສັງຄົມສົງເຄາະ ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງແມ່ນໄດ້ຖືກພັດທະນາ, ໂດຍມີຫຼັກສູດກ່ຽວກັບຄວາມຮຸນແຮງຕໍ່ໄວໜຸ່ມຍິງ. | ຫຼັກສູດຝຶກອົບຮົມໃຫ້ຄູເຝິກ (TOT) ກ່ຽວກັບ ການບໍລິການດ້ານສຸຂະພາບ ສຳລັບຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ, ແລະອາດຊະຍາກຳຂອງການຄ້າມະນຸດ, ກະຊວງສາທາລະນະສຸກ, ປີ 2019. |

| ປະເທດສະມາຊິກອາຊຽນ | ການປະຕິບັດທີ່ດີໃນດ້ານກົດໝາຍ ແລະນະໂຍບາຍທີ່ກ່ຽວຂ້ອງກັບວຽກງານສັງຄົມສົງເຄາະ ແລະພະນັກງານແຖວໜ້າ (ຜູ້ໃຫ້ບໍລິການ) ທີ່ກ່າວເຖິງຈຸດຕັດກັນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ | ລະບຽບການ ການບໍລິການ, ຄໍາແນະນໍາ ຫຼືເຄື່ອງມື ທີ່ສະໜັບສະໜູນການບໍລິການຄຸ້ມຄອງກໍລະນີ ທີ່ມີການປະສານງານ ແລະ/ຫຼືມີການເຊື່ອມສານ ສໍາລັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ | ການປະຕິບັດທີ່ດີ ໃນການເສີມສ້າງຄວາມເຂັ້ມແຂງຂອງພະນັກງານສັງຄົມສົງເຄາະ ຫຼືພະນັກງານແຖວຫນ້າ (ຜູ້ໃຫ້ບໍລິການ) ໃນກ່າວເຖິງຈຸດຕັດກັນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໃນການປ້ອງກັນ ແລະການແກ້ໄຂ. | ເຄື່ອງມື ຫຼືອຸປະກອນ ເສີມສ້າງຄວາມສາມາດ / ການຝຶກອົບຮົມ ທີ່ກອມເອົາທັງ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ (ໃນພາສາອັງກິດ ຫຼືພາສາທ້ອງຖິ່ນ) |
|---|---|---|---|---|
| **ຟີລິບປິນ** | ໃນປະເທດຟີລິບປິນມີນິຕິກໍາທີ່ກວ້າງຂວາງທີ່ກ່ຽວຂ້ອງກັບການປະຕິບັດວຽກງານ ດ້ານສັງຄົມສົງເຄາະ ທີ່ຊ່ວຍໃນການສົ່ງເສີມຄວາມສອດຄ່ອງລະຫວ່າງຄວາມຮຸນແຮງຕໍ່ແມ່ຍິງ.<br><br>- ການບໍລິການ ແກ້ໄຂຄວາມຮຸນແຮງຕໍ່ເດັກ:<br><br>(4) ກົດໝາຍວ່າດ້ວຍສາທາລະນະລັດ (RA) ສະບັບເລກທີ 9262, ກົດໝາຍວ່າດ້ວຍການຕ້ານຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ ທີ່ສະໜອງການເຂົ້າເຖິງການບໍລິການ ແກ້ໄຂຄວາມຮຸນແຮງບົນພື້ນຖານທາງເພດ ຫຼາຍຂະແໜງການ ແລະການແກ້ໄຂທາງກົດໝາຍອື່ນໆສໍາລັບຜູ້ລອດຊີວິດ ຈາກຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກ. ຮັບຮູ້ເຖິງຜົນກະທົບຂອງຄວາມຮຸນແຮງຂອງຄູ່ຄອງ ທີ່ມີຕໍ່ເດັກນ້ອຍ (ໃນຖານະທີ່ເປັນຜູ້ເຄາະຮ້າຍ-ຜູ້ລອດຊີວິດເຊັ່ນດຽວກັນ, ເປັນພະຍານ, ເປັນເຄື່ອງມືໃນການຈັດການ / ຄວບຄຸມແມ່ຍິງ / ເມຍ / ແມ່). ກົດໝາຍໃຫ້ການປົກປ້ອງທັງແມ່ຍິງ ແລະເດັກນ້ອຍ ແມ່ນລວມເຖິງການໃຫ້ບໍລິການນໍາອີກ. ກົດໝາຍໄດ້ສ້າງຕັ້ງ ກຸ່ມຕ້ານຄວາມຮຸນແຮງ ຕໍ່ແມ່ຍິງໃນຊຸມຊົນ (ກຸ່ມຕ້ານຄວາມຮຸນແຮງຕໍ່ແມ່ຍິງ ບາຣັງກາຍ (Barangay)) ເຊິ່ງຕັ້ງແຕ່ນັ້ນມາໄດ້ຂະຫຍາຍໄປເຖິງ ການລວມເອົາຄວາມຮຸນແຮງຕໍ່ເດັກນ້ອຍ, ນີ້ແມ່ນຄວາມຮູ້ກ່ຽວກັບການເຊື່ອມໂຍງລະຫວ່າງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ. ອົງການ UNICEF ໄດ້ສະຫນັບສະຫນູນການເຊື່ອມໂຍງນີ້ ໂດຍສະເພາະໃນໄລຍະການຮັບມືກັບ ພາຍຸໄຕ້ຝຸ່ນໄຮຢານ / ໂຢລານດາ (Haiyan / Yolanda) ໃນປີ 2014. ຍັງມີເຈົ້າຫນ້າທີ່ສະຫະພັນຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ ບາຣັງກາຍ ທີ່ມີຢູ່ແລ້ວໃນເມືອງໂຮຊາດ, ຄາປີສ, ວິຊາຍາຕາເວັນຕົກ, ແລະນີ້ໄດ້ຮັບການສະຫນັບສະຫນູນຈາກ ອົງການ CLGU (ໜ່ວຍງານຂອງລັດຖະບານທ້ອງຖິ່ນ). ສິ່ງເຫຼົ່ານີ້, ຖືກຖືວ່າເປັນການປະຕິບັດທີ່ດີສໍາລັບ ໜ່ວຍງານລັດຖະບານທ້ອງຖິ່ນອື່ນໆທີ່ຈະເຮັດຕາມເຊັ່ນກັນ. ຢ່າງໃດກໍ່ຕາມ, ຍັງມີສິ່ງທ້າທາຍໃນການຈັດຕັ້ງປະຕິບັດກົດໝາຍ ແລະການເຊື່ອມໂຍງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກຢ່າງຄົບຖ້ວນ. ນີ້ແມ່ນສະທ້ອນໃຫ້ເຫັນຢູ່ໃນ ບາຣັງກາຍ (barangays) ບ່ອນທີ່ມີ ກຸ່ມຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ ແລະສະພາບາຣັງກາຍ (Barangay) ເພື່ອການປົກປ້ອງເດັກນ້ອຍ. ບາຣັງກາຍ ບາງແຫ່ງມີອາສາສະຫມັກ ແລະເຈົ້າຫນ້າທີ່ແຍກຕ່າງຫາກທີ່ບໍ່ໄດ້ເຮັດວຽກຮ່ວມກັນ. ການແຊກແຊງເພື່ອແກ້ໄຂບັນຫາຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ອາດຈະເກີດຂຶ້ນໃນບາງ ບາຣັງກາຍ ບ່ອນທີ່ເຈົ້າຫນ້າທີ່ / ອາສາສະໝັກດຽວກັນ ໄດ້ມີການແຕ່ງຕັ້ງເຈົ້າໜ້າທີ່ / ອາສາສະໝັກຄືນດຽວກັນໃຫ້ກັບທັງ ກຸ່ມຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກ | (1) ການຄຸ້ມຄອງກໍລະນີທີ່ຕອບສະໜອງຕໍ່ບົດບາດຍິງຊາຍ<br><br>(2) ພະແນກສະຫວັດດີການສັງຄົມ ແລະບົດແນະນໍາການພັດທະນາໃນການຮັບມືກັບ ຄວາມຮຸນແຮງຕໍ່ແມ່ຍິງແລະເດັກ, ແລະຄວາມຮຸນແຮງບົນພື້ນຖານທາງເພດ ໃນເຫດສຸກເສີນ<br><br>(3) ແນວທາງການສ້າງຕັ້ງ ແລະການຄຸ້ມຄອງລະບົບການສົ່ງຕໍ່ກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ໃນລະດັບ ໜ່ວຍງານລັດຖະບານທ້ອງຖິ່ນ.<br><br>ມີຄໍາສັ່ງແຈ້ງການ ເລກທີ 014, s.2012 ຄໍາແນະນໍາກ່ຽວກັບການຈັດຕັ້ງການຄຸ້ມຄອງກໍລະນີ ທີ່ຕອບສະຫນອງຕໍ່ບົດບາດຍິງຊາຍ ເປັນແບບຢ່າງການປະຕິບັດໃນການແກ້ໄຂກໍລະນີຄວາມຮຸນແຮງຕໍ່ແມ່ຍິງ (VAW) ໂດຍກົມສະຫວັດດີການສັງຄົມ ແລະການພັດທະນາ ທີ່ກວມເອົາແມ່ຍິງ ແລະເດັກນ້ອຍທີ່ລອດຊີວິດຈາກ ຄວາມຮຸນແຮງຕໍ່ແມ່ຍິງ ແລະແນວທາງການສ້າງຕັ້ງ ແລະ ການຄຸ້ມຄອງລະບົບການສົ່ງຕໍ່ກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ໃນລະດັບໜ່ວຍງານລັດຖະບານທ້ອງຖິ່ນ ໂດຍຄະນະກໍາມາທິການ ຟີລິບປິນ ວ່າດ້ວຍແມ່ຍິງ ແລະສະພາລະຫວ່າງປະເທດ ວ່າດ້ວຍ ຄວາມຮຸນແຮງຕໍ່ແມ່ຍິງ ແລະລູກໆຂອງພວກເຂົາ.<br><br>ລັດຖະບານຟີລິບປິນມຸ່ງໝັ້ນທີ່ຈະທົບທວນ ແລະ ປະຕິບັດຕາມນະໂຍບາຍ, ໂດຍໄດ້ຮັບການສະໜັບສະໜູນຈາກອົງການ UNFPA, ເພື່ອເຊື່ອມສານການແກ້ໄຂບັນຫາສຸຂະພາບທາງເພດ ແລະສຸຂະພາບຈະເລີນພັນ (SRH) ທີ່ຈໍາເປັນ ແລະຄວາມຮຸນແຮງຕໍ່ແມ່ຍິງ, ລວມທັງການຕອບສະໜອງຄວາມຕ້ອງການຂອງໄວໜຸ່ມ, ໃນຊຸດຜົນປະໂຫຍດດ້ານການບໍລິການສຸຂະພາບທີ່ສໍາຄັນຂອງ ກົມສູຂະພາບ ແລະ ບໍລິສັດປະກັນສຸຂະພາບຟີລິບປິນ.<br><br>ດ້ວຍການສະໜັບສະໜູນຂອງ ອົງການ UNFPA, ໜ່ວຍງານລັດຖະບານທ້ອງຖິ່ນຈະທົບທວນຄືນ ແຜນພັດທະນາຊັບພະຍາກອນມະນຸດ ແລະສະຖານທີ່ສາທາລະນະສຸກແຫ່ງຊາດ / ທ້ອງຖິ່ນ ເພື່ອແກ້ໄຂຊ່ອງຫວ່າງໃນການສະໜອງການບໍລິການ ທາງດ້ານສຸຂະພາບທາງເພດ ແລະສຸຂະພາບຈະເລີນພັນ ແລະຄວາມຮຸນແຮງຕໍ່ແມ່ຍິງແລະເດັກຍິງ ທີ່ຈໍາເປັນ, ແລະໃນການສະໜອງການບໍລິການຄຸ້ມຄອງກໍລະນີຄວາມຮຸນແຮງຕໍ່ແມ່ຍິງແລະເດັກຍິງ ທີ່ເອົາຜູ້ລອດຊີວິດເປັນໃຈກາງ ແລະມີຄວາມອ່ອນໄຫວຕໍ່ໄວໜຸ່ມ ໂດຍຜ່ານພະນັກງານສັງຄົມສົງເຄາະ. ນອກຈາກນັ້ນ, ລະບົບຂໍ້ມູນ | ສະພາລະຫວ່າງປະເທດ ວ່າດ້ວຍຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ (ລູກໆຂອງພວກເຂົາ) ແມ່ນອົງການປະສານງານຫຼັກ ເຊິ່ງໄດ້ຖືກສ້າງຕັ້ງຂຶ້ນໃນເບື້ອງຕົ້ນ ໂດຍອີງໃສ່ ກົດໝາຍວ່າດ້ວຍສາທາລະນະລັດ ສະບັບເລກທີ 9262, ແລະໃນປັດຈຸບັນໄດ້ຂະຫຍາຍໄປຕາມ ກົດໝາຍວ່າດ້ວຍສາທາລະນະລັດສະບັບເລກທີ 9710. ນີ້ແມ່ນອົງການກອດກາທີ່ຊີ້ນໍາ ແລະຕິດຕາມການປະຕິບັດກົດໝາຍວ່າດ້ວຍ ການຕ້ານຄວາມຮຸນແຮງຕໍ່ແມ່ຍິງ. ໂດຍເນັ້ນໃສ່ແມ່ຍິງ ແລະເດັກຍິງ ທີ່ຖືກໃຊ້ຄວາມຮຸນແຮງບົນພື້ນຖານທາງເພດເປັນຫຼັກ. ແນວໃດກໍຕາມ, ມີຄວາມຈໍາເປັນທີ່ຈະຕ້ອງຕິດຕໍ່ກັບ ອົງການທີ່ກ່ຽວຂ້ອງກັບເດັກນ້ອຍເຊັ່ນ: ສະພາເພື່ອສະຫວັດດີການຂອງເດັກນ້ອຍ ໃຫ້ຫຼາຍຂຶ້ນ.<br><br>ໃນການຕອບສະໜອງທາງດ້ານມະນຸດສະທໍາ, ຟີລິບປິນໄດ້ຈັດຕັ້ງຄະນະປົກປ້ອງເດັກແຫ່ງຊາດ ແລະຂັ້ນທ້ອງຖິ່ນ, ເຊິ່ງເອີ້ນກັນວ່າຄະນະເຮັດວຽກປົກປ້ອງເດັກ. ນອກຈາກນີ້, ຍັງມີກຸ່ມຄວາມຮຸນແຮງບົນພື້ນຖານທາງເພດ ແລະກຸ່ມຍ່ອຍຢູ່ໃນຂັ້ນພາກພື້ນ ແລະທ້ອງຖິ່ນນໍາອີກ. ຜ່ານການປະຕິບັດ, ພົບວ່າ ບັນຫາແມ່ຍິງ ແລະເດັກ ແມ່ນຕິດພັນກັນຢ່າງແໜ້ນແຟ້ນ, ແລະໃນຂັ້ນທ້ອງຖິ່ນ, ບັນດາຜູ້ສະໜອງບໍລິການຂອງລັດ ກໍ່ໃຫ້ຄວາມສໍາຄັນກັບທັງສອງກຸ່ມ, ເຊິ່ງໄດ້ເຮັດໃຫ້ມີການເຊື່ອມສານທັງສອງກຸ່ມເຂົ້າໃນພາກປະຕິບັດຢູ່ບາງທ້ອງຖິ່ນ. ທັງສອງກຸ່ມໃຊ້ເສັ້ນທາງການສົ່ງຕໍ່ການປົກປ້ອງເດັກ/ຄວາມຮຸນແຮງບົນພື້ນຖານທາງເພດ ແລະໂທແຈ້ງສາຍດ່ວນດຽວກັນ. ໜ່ວຍງານປົກປ້ອງແມ່ຍິງ ແລະເດັກນ້ອຍ ຂອງກົມຕໍາຫຼວດແຫ່ງຊາດຟີລິບປິນ ແລະໜ່ວຍງານປົກປ້ອງແມ່ຍິງ ແລະເດັກນ້ອຍ ຂອງກົມສຸຂະພາບ ເປັນຕົວຢ່າງຂອງວິທີການທີ່ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໄດ້ຮັບການປະຕິບັດຮ່ວມກັນ. ໃນພາກໃຕ້ຂອງແຂວງເລເຕ (Leyte), ຫນຶ່ງໃນບັນດາແຂວງທີ່ໄດ້ຮັບຜົນກະທົບຈາກ ພາຍຸໄຕ້ຝຸ່ນຣາຍ / ໂອເດັດ (Typhoon Rai / Odette), ການສ້າງສະຖານທີ່ເປັນມິດກັບເດັກນ້ອຍ ແລະແມ່ຍິງ ແມ່ນຢູ່ໃກ້ກັນເພື່ອເສີມການບໍລິການ ແລະຕາຕະລາງຂອງການພົບປະ ສໍາລັບເດັກນ້ອຍ ແລະແມ່ໆ. ທັງສອງກຸ່ມຍັງສົ່ງເສີມການສ້າງຄວາມສາມາດ ຂອງທີມງານຈາກຫຼາກຫຼາຍສາຂາວິຊາ ທີ່ໄດ້ຖືກມອບໝາຍໃຫ້ສະໜອງການຄຸ້ມຄອງກໍລະນີ ໃຫ້ກັບກໍລະນີ ຄວາມຮຸນແຮງຕໍ່ແມ່ຍິງ/ເດັກ. ໜ່ວຍງານຫຼາກຫຼາຍສາຂາວິຊາ ແມ່ນປະກອບດ້ວຍພະນັກງານສັງຄົມສົງເຄາະ, ຕໍາຫຼວດຍິງ, ທ່ານໝໍ ແລະພະນັກງານຍຸຕິທໍາ ຈາກທຸກເມືອງ ແລະທຸກແຂວງ.<br><br>https://response.reliefweb.int/philippines/child-Protection | ການຝຶກອົບຮົມອອນລາຍ ຂອງເຄືອຂ່າຍການປົກປ້ອງເດັກ (CPN) ໃຫ້ກັບທີມງານຈາກຫຼາກຫຼາຍສາຂາວິຊາຊີບ ແລະການຝຶກອົບຮົມອອນລາຍ ກ່ຽວກັບໃບຢັ້ງຢືນການພິເສດ ດ້ານການປົກປ້ອງແມ່ຍິງ ແລະເດັກນ້ອຍ ລວມມີການບັນຍາຍເຖິງຈຸດຕັດກັນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ. ເຫຼົ່ານີ້ແມ່ນຫຼັກສູດການຝຶກອົບຮົມທີ່ຈໍາເປັນສໍາລັບສະມາຊິກພະນັກງານ ຂອງຫນ່ວຍງານປົກປ້ອງແມ່ຍິງ ແລະເດັກນ້ອຍ (ສູນຊ່ວຍເຫຼືອແບບປະຕູດຽວ ໃນໂຮງຫມໍຈາກແມ່ຍິງ ແລະເດັກນ້ອຍທີ່ປະສົບກັບຄວາມຮຸນແຮງ).<br><br>https://www. childprotectionnetwork.org/training-cpd-programs/ |

| ປະເທດສະມາຊິກອາຊຽນ | ການປະຕິບັດທີ່ດີໃນດ້ານກົດໝາຍ ແລະນະໂຍບາຍທີ່ກ່ຽວຂ້ອງກັບວຽກງານສັງຄົມສົງເຄາະ ແລະພະນັກງານແຖວໜ້າ (ຜູ້ໃຫ້ບໍລິການ) ທີ່ກ່າວເຖິງຈຸດຕັດກັນຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ | ລະບຽບການ ການບໍລິການ, ຄຳແນະນຳ ຫຼືເຄື່ອງມື ທີ່ສະໜັບສະໜູນການບໍລິການຄຸ້ມຄອງກໍລະນີ ທີ່ມີການປະສານງານ ແລະ/ຫຼືມີການເຊື່ອມສານ ສຳລັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ | ການປະຕິບັດທີ່ດີ ໃນການເສີມສ້າງຄວາມເຂັ້ມແຂງຂອງພະນັກງານສັງຄົມສົງເຄາະ ຫຼືພະນັກງານແຖວຫນ້າ (ຜູ້ໃຫ້ບໍລິການ) ໃນກ່າວເຖິງຈຸດຕັດກັນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໃນການປ້ອງກັນ ແລະການແກ້ໄຂ. | ເຄື່ອງມື ຫຼືອຸປະກອນ ເສີມສ້າງຄວາມສາມາດ / ການຝຶກອົບຮົມ ທີ່ກອມເອົາທັງ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ (ໃນພາສາອັງກິດ ຫຼືພາສາທ້ອງຖິ່ນ) |
|---|---|---|---|---|
| **ຟີລິບປິນ** | ນ້ອຍ ແລະສະພາບາຣັງກາຍເພື່ອປົກປ້ອງເດັກນ້ອຍ (BCPCs). ນອກຈາກນັ້ນ, ໃນທາງປະຕິບັດ, ໃນກໍລະນີຂອງການລ່ວງລະເມີດເດັກ, ຈຸດສຸມຂອງຜູ້ຄຸ້ມຄອງກໍລະນີ ຈະປະກອບມີຄອບຄົວ ແລະຖ້າມີ ຄວາມຮຸນແຮງໃນຄູ່ຮັກ/ຄູ່ຄອງ (IPV) ຢູ່, ກໍມີການວາງແຜນຊ່ວຍເຫຼືອ. ເຖິງຢ່າງໃດກໍ່ຕາມ, ເມື່ອກໍລະນີຫຼັກທີ່ໄດ້ຮັບການຄຸ້ມຄອງແມ່ນ ຄວາມຮຸນແຮງຕໍ່ແມ່ຍິງ, ເດັກນ້ອຍຈະບໍ່ໄດ້ຮັບການຊ່ວຍເຫຼືອໂດຍອັດຕະໂນມັດ ເວັ້ນເສຍແຕ່ວ່າຜູ້ຖືກເຄາະຮ້າຍ / ຜູ້ລອດຊີວິດ ຈະພາໄປທີ່ສະຖານສົງເຄາະນຳ.<br><br>ໝາຍເຫດ: ກົດໝາຍວ່າດ້ວຍການຕ້ານຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ (Anti VAWC) ຫຼື RA 9262 ແມ່ນກົດໝາຍວ່າດ້ວຍຄວາມຮຸນແຮງໃນຄອບຄົວຂອງປະເທດ ເຊິ່ງກອມເອົາທັງຜູ້ຍິງທີ່ລອດຊີວິດ ແລະລູກໆຂອງພວກເຂົາ. ມັນກອມເອົາການລ່ວງລະເມີດທາງຮ່າງກາຍ, ທາງເພດ, ທາງຈິດໃຈ ແລະທາງເສດຖະກິດ. ກົດໝາຍໄດ້ກຳນົດບົດບາດຂອງພະນັກງານສັງຄົມສົງເຄາະ ໃນການຍື່ນຄຳສັ່ງປົກປ້ອງ (ມາດຕາ 9d). ກົດໝາຍນີ້ນຳໃຊ້ກັບຄວາມຮຸນແຮງທີ່ກະທຳໂດຍຄູ່ຮັກ/ຄູ່ຄອງ ຂອງແມ່ຍິງໃນປະຈຸບັນ ຫຼືອະດີດ. ຂອບເຂດຂອງຄວາມຮຸນແຮງຕໍ່ແມ່ຍິງ / ຄວາມຮຸນແຮງບົນພື້ນຖານທາງເພດ ທີ່ກວ້າງຂຶ້ນຈະພົບໄດ້. | ບໍລິຫານກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກຍິງ ພວມໄດ້ຮັບການເສີມສ້າງຄວາມເຂັ້ມແຂງ ເພື່ອຮັບປະກັນວ່າມີການເກັບກຳຂໍ້ມູນ ທີ່ເອົາຜູ້ລອດຊີວິດເປັນໃຈກາງ, ເພື່ອປັບປຸງການກຳນົດນະໂຍບາຍໂດຍອີງໃສ່ຫຼັກຖານ.<br><br>https://www.empowerwomen.org/en/resources/documents/2014/9/guidelines-in-the-establishment-and-management-of-a-referral-system-on-vaw-at-the-lgu-level?lang=en_ | | |
| **ໄທ** | ມີຄວາມແຕກຕ່າງກັນ ລະຫວ່າງຂອບກົດໝາຍຂອງໄທກ່ຽວກັບຄວາມຮຸນແຮງບົນພື້ນຖານທາງເພດ ແລະມາດຕະຖານສາກົນທີ່ກຳນົດໄວ້. ຄວາມແຕກຕ່າງເຫຼົ່ານີ້ສາມາດພົບໄດ້ໃນ ຄຳນິຍາມຂອງຄວາມຮຸນແຮງ, ເຊິ່ງໄດ້ລະເວັ້ນ ຄວາມຮຸນແຮງທາງເພດໃນຄອບຄົວ ຈາກກົດໝາຍສະເພາະ ວ່າດ້ວຍຄວາມຮຸນແຮງໃນຄອບຄົວ ຂອງປະເທດໄທ. ກົດໝາຍຍັງຖືຈຸດຢືນທີ່ເປັນກາງທາງບົດບາດຍິງ-ຊາຍ ແລະບໍ່ໄດ້ກ່າວເຖິງຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍຢ່າງພຽງພໍ ໃນຖານະທີ່ເປັນສາເຫດ ແລະຜົນສະທ້ອນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ. ນອກຈາກນີ້, ຍັງໃຫ້ບຸລິມະສິດໃນການແກ້ໄຂຄະດີໂດຍຜ່ານຫຼັກການໄກ່ເກ່ຍປອງດອງກັນ ເໜືອກວ່າການເຄົາລົບ ແລະປົກປ້ອງສິດຂອງຜູ້ລອດຊີວິດ ແລະຄວາມຮັບຜິດຊອບຂອງຜູ້ກະທຳຜິດ.<br><br>ກ່ຽວກັບນະໂຍບາຍ, ປະເທດໄທມີນະໂຍບາຍແຍກຕ່າງຫາກສຳລັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ. ຂະນະນີ້ ໄທພວມຢູ່ໃນຂະບວນການສ້າງແຜນດຳເນີນງານແຫ່ງ | ກິດຈະກຳແກ້ໄຂ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ຂອງລັດຖະບານໄທ ກອມເອົາ 3 ຂະແໜງການໄດ້ແກ່: ສາທາລະນະສຸກ, ການບໍລິການສັງຄົມ, ຕຳຫຼວດ ແລະຍຸຕິທຳ. ຂະແໜງການຕ່າງໆເຫຼົ່ານີ້ມີຄວາມແຕກຕ່າງກັນທາງດ້ານລັກສະນະການໃຫ້ບໍລິການ, ໂດຍຂະແໜງສາທາລະນະສຸກ ມີຫົວໜ່ວຍບໍລິການ ແລະບຸກຄະລາກອນທີ່ກວ້າງຂວາງທີ່ສຸດເຖິງຂັ້ນເມືອງ. ກະຊວງພັດທະນາສັງຄົມ ແລະຄວາມໝັ້ນຄົງຂອງມະນຸດ ຊຶ່ງເປັນກະຊວງຕົ້ນຕໍຂອງລະບົບແກ້ໄຂ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ມີການຄຸ້ມຄອງບັນດາໜ່ວຍງານສະໜອງບໍລິການລົງຮອດຂັ້ນແຂວງ ໂດຍມີຄວາມພະຍາຍາມຢ່າງຕໍ່ເນື່ອງໃນການພັດທະນາກົນໄກຂັ້ນທ້ອງຖິ່ນ ໃນການປ້ອງກັນ ແລະສະໜອງການແກ້ໄຂເບື້ອງຕົ້ນ ຕໍ່ກໍລະນີຄວາມຮຸນແຮງຢູ່ຂັ້ນເມືອງ. ການຂາດການມອບຫມາຍໜ້າທີ່ ທີ່ຈະແຈ້ງ ກ່ຽວກັບການແກ້ໄຂ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ສຳລັບບາງອົງການທີ່ກ່ຽວຂ້ອງ, ຍົກເວັ້ນອົງການພາຍໃຕ້ກະຊວງດັ່ງກ່າວເອງ, ຫມາຍຄວາມວ່າອົງການເຫຼົ່ານີ້ອາດຈະບໍ່ | ປະເທດໄທ ຍັງບໍ່ທັນເຫັນໂຄງສ້າງທີ່ເປັນທາງການ ແລະມີປະສິດຕິພາບ ສຳລັບການປະສານງານຫຼາຍຂະແໜງການ ຂອງລະບົບການແກ້ໄຂ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ. ກິດຈະກຳການປະສານງານທີ່ເກີດຂຶ້ນໃນລະດັບທ້ອງຖິ່ນ ມັກຈະອີງໃສ່ຄວາມພະຍາຍາມສ່ວນບຸກຄົນ ແລະການເຊື່ອມຕໍ່ຂອງຜູ້ໃຫ້ບໍລິການແຕ່ລະບ່ອນ, ເຮັດໃຫ້ການປະສານງານດັ່ງກ່າວມີຄວາມພະຍາຍາມເປັນແຕ່ລະໄລຍະ ແລະມີທ່າອ່ຽງທີ່ຈະບໍ່ສອດຄ່ອງກັນ. ນອກຈາກນີ້, ການປະຕິບັດໃນການຄຸ້ມຄອງກໍລະນີຍັງບໍ່ໄດ້ຮັບການຈັດລຳດັບຄວາມສຳຄັນຢ່າງພຽງພໍ ໃນລະບົບການແກ້ໄຂ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ. ບໍ່ມີຕຳແຫນ່ງທີ່ເປັນທາງການຂອງ "ຜູ້ຄຸ້ມຄອງກໍລະນີ" ໃນລະບົບ. ການຄຸ້ມຄອງກໍລະນີຕ່າງໆ ມັກຈະຖືກປະຕິບັດບົນພື້ນຖານຄວາມສະໝັກໃຈ ແລະໄດ້ຮັບການແຕ່ງຕັ້ງດ້ວຍຕົນເອງ, ໂດຍບໍ່ມີການມອບໝາຍ ແລະໃຫ້ອຳນາດຢ່າງເປັນທາງການ ສຳລັບການຄຸ້ມຄອງກໍລະນີຂ້າມຂະແໜງການ. | ບຸກຄົນທີ່ມີບົດບາດສຳຄັນໃນການແກ້ໄຂ ຄວາມຮຸນແຮງຕໍ່ເດັກ ແມ່ນເຈົ້າໜ້າທີ່ຜູ້ມີຄວາມສາມາດ ພາຍໃຕ້ກົດໝາຍວ່າດ້ວຍການປົກປ້ອງເດັກ ປີ 2003. ພະນັກງານເຫຼົ່ານີ້ຕ້ອງເຂົ້າຮ່ວມການຝຶກອົບຮົມ 2 ອາທິດ ແລະຜ່ານການສອບເສັງ ຈຶ່ງຈະໄດ້ຮັບການຢັ້ງຢືນວ່າເປັນ ເຈົ້າໜ້າທີ່ຜູ້ມີຄວາມສາມາດ. ຢ່າງໃດກໍຕາມ, ເນື່ອງຈາກວ່າບໍ່ມີຕຳແໜ່ງທີ່ໝັ້ນຄົງສຳລັບ "ເຈົ້າໜ້າທີ່ຜູ້ມີຄວາມສາມາດ" ວຽກງານດັ່ງກ່າວ ຈຶ່ງຖືກພິຈາລະນາວ່າເປັນວຽກເພີ່ມ, ແລະຍັງຕ້ອງປະເຊີນກັບອັດຕາການລາອອກຈາກວຽກທີ່ສູງ.<br><br>ສຳລັບ ຄວາມຮຸນແຮງຕໍ່ເດັກ, ມາດຕະຖານການບໍລິການປົກປ້ອງເດັກ ສຳລັບເຈົ້າໜ້າທີ່ມີຄວາມສາມາດ ແລະ ພະນັກງານສັງຄົມສົງເຄາະ. ແນວໃດກໍ່ຕາມ, ການປະຕິບັດໄດ້ຖືກຈຳກັດເນື່ອງຈາກການຂາດໂຄງສ້າງການຊີ້ນຳທີ່ເຫມາະສົມ ພາຍໃຕ້ກະຊວງພັດທະນາສັງຄົມ ແລະຄວາມໝັ້ນຄົງຂອງມະນຸດ. |

| ປະເທດສະມາຊິກອາຊຽນ | ການປະຕິບັດທີ່ດີໃນດ້ານກົດໝາຍ ແລະນະໂຍບາຍທີ່ກ່ຽວຂ້ອງກັບວຽກງານສັງຄົມສົງເຄາະ ແລະພະນັກງານແຖວໜ້າ (ຜູ້ໃຫ້ບໍລິການ) ທີ່ກ່າວເຖິງຈຸດຕັດກັນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ | ລະບຽບການ ການບໍລິການ, ຄໍາແນະນໍາ ຫຼືເຄື່ອງມື ທີ່ສະໜັບສະໜູນການບໍລິການຄຸ້ມຄອງກໍລະນີ ທີ່ມີການປະສານງານ ແລະ/ຫຼືມີການເຊື່ອມສານ ສໍາລັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ | ການປະຕິບັດທີ່ດີ ໃນການເສີມສ້າງຄວາມເຂັ້ມແຂງຂອງພະນັກງານສັງຄົມສົງເຄາະ ຫຼືພະນັກງານແຖວໜ້າ (ຜູ້ໃຫ້ບໍລິການ) ໃນກ່າວເຖິງຈຸດຕັດກັນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໃນການປ້ອງກັນ ແລະການແກ້ໄຂ. | ເຄື່ອງມື ຫຼືອຸປະກອນ ເສີມສ້າງຄວາມສາມາດ / ການຝຶກອົບຮົມ ທີ່ກວມເອົາທັງ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ (ໃນພາສາອັງກິດ ຫຼືພາສາທ້ອງຖິ່ນ) |
|---|---|---|---|---|
| | ຊາດ ເພື່ອປົກປ້ອງເດັກ ປີ 2023-2027 ແລະແຜນດໍາເນີນງານແຫ່ງຊາດ ເພື່ອພັດທະນາແມ່ຍິງ 2023-2027. ປະເທດໄທບໍ່ມີນະໂຍບາຍແຫ່ງຊາດ ທີ່ກ່າວເຖິງ ຄວາມຮຸນແຮງບົນພື້ນຖານທາງເພດ ໃນຄວາມຫມາຍກວ້າງຂວາງ ໂດຍລວມເຖິງຄວາມຮຸນແຮງທີ່ກະທໍາຕໍ່ບຸກຄົນໃນທຸກເພດພາວະ ໂດຍຄໍານຶງເຖິງການສະແດງອອກເຖິງຕົວຕົນທາງເພດພາວະ (gender identity) ແລະ / ຫຼືລົດນິຍົມທາງເພດ (sexual orientation) ຂອງພວກເຂົາ. ໃນທາງກົງກັນຂ້າມ, ແຜນຍຸດທະສາດຕົ້ນຕໍ ແລະ ແຜນປະຕິບັດງານ ເພື່ອຮັບມືກັບຄວາມຮຸນແຮງບົນພື້ນຖານທາງເພດໃນລະດັບຊາດ ພັດໄດ້ຮັບການພັດທະນາພາຍໃຕ້ຂອບ “ການພັດທະນາຂອງແມ່ຍິງ” ແລະຈໍາກັດ ຂອບເຂດໃຫ້ແຄບລົງ ເຫຼືອພຽງແຕ່ຄວາມຮຸນແຮງຕໍ່ແມ່ຍິງ. ນອກເໜືອຈາກຂອບນະໂຍບາຍຫຼັກແລ້ວ, ມາດຕະການອື່ນໆໃນການຕ້ານຄວາມຮຸນແຮງ ທີ່ກ່ຽວຂ້ອງກັບບົດບາດຍິງ-ຊາຍ ສາມາດພົບເຫັນຢູ່ໃນແຜນການດໍາເນີນງານ ຂອງອົງການລັດໃນແຕ່ລະແຫ່ງ. ແຜນງານ ແລະ ກິດຈະກໍາຂອງອົງການຕ່າງໆຫຼາຍແຫ່ງ ທີ່ກ່າວເຖິງ ຄວາມຮຸນແຮງບົນພື້ນຖານທາງເພດ ແມ່ນຖືກຫຼຸດລະດັບໃຫ້ຈັດຢູ່ໃນລະດັບພະແນກ ຫຼືພະແນກຍ່ອຍ.<br><br>ການບໍລິການທີ່ແກ້ໄຂຈຸດຕັດກັນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໃນປະເທດໄທ ນອກເຫນືອຈາກ ສູນບໍລິການຊ່ວຍເຫຼືອແມ່ຍິງ ແລະເດັກທີ່ຖືກກະທໍາຄວາມຮຸນແຮງ (ສູນເພິ່ງໄດ້/OSCCs) ໃນໂຮງຫມໍ, ຍັງປະກອບມີສູນພັກອາໄສຊົ່ວຄາວປະຈໍາແຂວງ ສໍາລັບເດັກນ້ອຍ ແລະຄອບຄົວ; ສູນໄອຍະການປະຊາຊົນເພື່ອປົກປ້ອງເດັກ, ໄວໜຸ່ມ ແລະຄອບຄົວ; ແລະ ສູນປະສານງານເດັກ ແລະ ແມ່ຍິງ ແຂວງຊາຍແດນພາກໃຕ້. ພະນັກງານແຖວໜ້າສາມາດຂະຫຍາຍການບໍລິການຂອງພວກເຂົາ ໃຫ້ກວມເອົາຄວາມຮຸນແຮງຫຼາຍກວ່າໜຶ່ງມິຕິ.<br><br>ສູນພັກອາໄສຊົ່ວຄາວ ສໍາລັບເດັກນ້ອຍ ແລະ ຄອບຄົວປະຈໍາແຂວງ, ຢູ່ພາຍໃຕ້ກະຊວງພັດທະນາສັງຄົມ ແລະ ຄວາມໝັ້ນຄົງຂອງມະນຸດ, ໄດ້ສະໜອງບ່ອນພັກຊົ່ວຄາວໃຫ້ແກ່ ຜູ້ທີ່ໄດ້ຮັບຜົນກະທົບຈາກ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໃນທຸກແຂວງ ຂອງປະເທດໄທ. ສູນໄອຍະການປະຊາຊົນເພື່ອປົກປ້ອງເດັກ, ໄວໜຸ່ມ ແລະຄອບຄົວໄດ້ຖືກສ້າງຕັ້ງຂຶ້ນ ໃນໂຄ້ງລະດັບພາກພື້ນ ຂອງອົງການໄອຍະການ, ເພື່ອສະໜອງການໃຫ້ປຶກສາທາງດ້ານກົດໝາຍ ໂດຍມີຜູ້ຊ່ຽວຊານ ກ່ຽວກັບຄວາມຮຸນແຮງຕໍ່ເດັກ ແລະ ຄວາມຮຸນແຮງໃນຄອບຄົວ. ສູນປະສານງານເດັກ ແລະແມ່ຍິງ ໃນແຂວງຊາຍແດນພາກໃຕ້ ໄດ້ຖືກສ້າງຕັ້ງຂຶ້ນ ໂດຍ ສູນບໍລິຫານ ແຂວງຊາຍແດນພາກໃຕ້ ຮ່ວມກັບເຄືອຂ່າຍ ອົງການຈັດຕັ້ງສາກົນ (NGO) ເພື່ອແກ້ໄຂບັນຫາແມ່ຍິງ ແລະເດັກນ້ອຍ ທີ່ໄດ້ຮັບຜົນກະທົບ ຈາກຄວາມຮຸນແຮງ. | ສາມາດຮັບປະກັນງົບປະມານ ແລະຊັບພະຍາກອນມະນຸດທີ່ພຽງພໍ ເຊິ່ງຈໍາເປັນຕໍ່ການປະຕິບັດຫນ້າທີ່ຂອງຕົນຢ່າງມີປະສິດຕິພາບ.<br><br>ການບໍລິການທີ່ແກ້ໄຂຈຸດຕັດກັນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໃນປະເທດໄທ ແມ່ນສະຫນອງໃຫ້ໂດຍຜ່ານ ສູນບໍລິການຊ່ວຍເຫຼືອແມ່ຍິງ ແລະເດັກທີ່ຖືກກະທໍາຄວາມຮຸນແຮງ (ສູນເພິ່ງໄດ້/OSCCs) ຫຼາຍກວ່າ 7000 ແຫ່ງທີ່ຕັ້ງຢູ່ແຕ່ລະໂຮງຫມໍແຂວງ ແລະເມືອງ ທີ່ດໍາເນີນການໂດຍກະຊວງສາທາລະນະສຸກ. ນອກຈາກນັ້ນ, ກະຊວງພັດທະນາສັງຄົມ ແລະຄວາມໝັ້ນຄົງຂອງມະນຸດ ຍັງດໍາເນີນການ ສູນພັກອາໄສຊົ່ວຄາວ ປະຈໍາແຂວງ ສໍາລັບເດັກນ້ອຍແລະຄອບຄົວ ຈໍານວນ 77 ແຫ່ງ; ສູນພັກອາໄສຊົ່ວຄາວ ສໍາລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງຜູ້ລອດຊີວິດຈາກການຂູດຮີດທາງເພດ ຈໍານວນ 8 ແຫ່ງ; ແລະໂທລະສັບສາຍດ່ວນ ໝາຍເລກ 1300. ສູນປົກປ້ອງສິດທິເດັກ, ໄວໜຸ່ມ ແລະສະຖາບັນຄອບຄົວ, ພາຍໃຕ້ກົມຄະດີເຍົາວະຊົນ ແລະ ຄອບຄົວ (DJFL), ຫ້ອງການໄອຍະການສູງສຸດ ພ້ອມດ້ວຍ ສູນກາງພາກພື້ນ ເພື່ອການປົກປ້ອງສິດທິຂອງເດັກນ້ອຍ, ໄວໜຸ່ມ, ແລະສະຖາບັນຄອບຄົວໃນທຸກພາກພື້ນ ຈໍານວນ 9 ແຫ່ງ ໃຫ້ບໍລິການດ້ານວຽກງານຍຸຕິທໍາກ່ຽວກັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ເພື່ອໃຫ້ກວມເອົາຫຼາຍກວ່າຫນຶ່ງມິຕິຂອງຄວາມຮຸນແຮງ.<br><br>ສູນປະສານງານເດັກ ແລະແມ່ຍິງ ແຂວງຊາຍແດນພາກໃຕ້ ໄດ້ຖືກສ້າງຕັ້ງຂຶ້ນ ໂດຍ ສູນບໍລິຫານແຂວງຊາຍແດນ ພາກໃຕ້ ຮ່ວມກັບ ເຄືອຂ່າຍ ອົງການຈັດຕັ້ງສາກົນ (NGO) ເພື່ອແກ້ໄຂບັນຫາ ເດັກນ້ອຍ ແລະແມ່ຍິງ ຢູ່ໃນພື້ນທີ່ແຂວງດັ່ງກ່າວ ລວມທັງຄວາມຮຸນແຮງນໍາອີກ.<br><br>ການທົບທວນຖານຂໍ້ມູນ ຄວາມຮຸນແຮງບົນພື້ນຖານທາງເພດທີ່ມີຢູ່ແລ້ວ ໃນປະເທດໄທ ໄດ້ຖືກດໍາເນີນໂດຍ ອົງການ UNICEF ໃນປີ 2021 ພົບວ່າຫຼາຍອົງການຂອງລັດຖະບານ ແລະອົງການຈັດຕັ້ງທາງສັງຄົມ ໄດ້ເກັບກໍາຂໍ້ມູນກ່ຽວກັບຄວາມຮຸນແຮງຢ່າງເປັນລະບົບ ແລະຕໍ່ເນື່ອງ. ຂໍ້ມູນເຫຼົ່ານີ້ ສ່ວນໃຫຍ່ເນັ້ນໃສ່ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກນ້ອຍ. ຢ່າງໃດກໍຕາມ, ອົງການຈັດຕັ້ງຕ່າງໆເຫຼົ່ານີ້ ນໍາໃຊ້ໂຄງສ້າງຂໍ້ມູນທີ່ແຕກຕ່າງກັນ ແລະນໍາໃຊ້ວິທີການເກັບກໍາຂໍ້ມູນທີ່ແຕກຕ່າງກັນ, ເຮັດໃຫ້ເປັນໄປໄດ້ຍາກທີ່ຈະລວມຖານຂໍ້ມູນທີ່ມີຢູ່ ແລ້ວເຂົ້າໄປໃນລະບົບຂໍ້ມູນ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໃນລະດັບຊາດທີ່ສອດຄ່ອງກັນໄດ້. | ບົດບັນທຶກຄວາມເຂົ້າໃຈ ໃນທ້ອງຖິ່ນກ່ຽວກັບ ຄວາມຮຸນແຮງບົນພື້ນຖານທາງເພດ ໄດ້ຖືກພັດທະນາຢູ່ບາງກອກ, ຊຽງໃຫມ່, ແລະແມ່ສອດ (ທີ່ຕອບສະໜອງຕໍ່ ການຢຸດຕິຄວາມຮຸນແຮງຕໍ່ແມ່ຍິງ ແລະຢຸດຕິຄວາມຮຸນແຮງຕໍ່ເດັກ ລວມທັງແຮງງານເຄື່ອນຍ້າຍ ທີ່ເປັນແມ່ຍິງ ແລະເດັກຍິງ). ໂຄງການລິເລີ່ມນີ້ ໄດ້ຮັບການສະໜັບສະໜູນຈາກໂຄງການ ແມ່ຍິງທີ່ປອດໄພ ແລະຍຸດຕິທໍາຂອງສະຫະປະຊາຊາດ (UN Women Safe and Fair). ບົດບັນທຶກຄວາມເຂົ້າໃຈ ໃນທ້ອງຖິ່ນກ່ຽວກັບ ຄວາມຮຸນແຮງບົນພື້ນຖານທາງເພດ ໄດ້ຊ່ວຍປະກອບເປັນຄະນະຮັບຜິດຊອບຄວາມຮຸນແຮງບົນພື້ນຖານທາງເພດ (ປະກອບດ້ວຍລະບົບສັງຄົມ, ສຸຂະພາບ, ແລະລະບົບຍຸຕິທໍາ) ເພື່ອແກ້ໄຂ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ, ໂດຍສະເພາະໃນຊຸມຊົນຜູ້ອົບພະຍົບ. | |

| ປະເທດ ສະມາຊິກ ອາຊຽນ | ການປະຕິບັດທີ່ດີໃນດ້ານກົດໝາຍ ແລະນະໂຍບາຍທີ່ກ່ຽວຂ້ອງກັບວຽກງານສັງຄົມສົງເຄາະ ແລະພະນັກງານແຖວໜ້າ (ຜູ້ໃຫ້ບໍລິການ) ທີ່ກ່າວເຖິງຈຸດຕັດກັນຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ | ລະບຽບການ ການບໍລິການ, ຄໍາແນະນໍາ ຫຼືເຄື່ອງມື ທີ່ສະໜັບສະໜູນການບໍລິການຄຸ້ມຄອງກໍລະນີ ທີ່ມີການປະສານງານ ແລະ/ຫຼືມີການເຊື່ອມສານ ສໍາລັບ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ | ການປະຕິບັດທີ່ດີ ໃນການເສີມສ້າງຄວາມເຂັ້ມແຂງຂອງພະນັກງານສັງຄົມສົງເຄາະ ຫຼືພະນັກງານແຖວຫນ້າ (ຜູ້ໃຫ້ບໍລິການ) ໃນກ່າວເຖິງຈຸດຕັດກັນຂອງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ ໃນການປ້ອງກັນ ແລະການແກ້ໄຂ. | ເຄື່ອງມື ຫຼືອຸປະກອນ ເສີມສ້າງຄວາມສາມາດ / ການຝຶກອົບຮົມ ທີ່ກວມເອົາທັງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ (ໃນພາສາອັງກິດ ຫຼືພາສາທ້ອງຖິ່ນ) |
|---|---|---|---|---|
| **ຫວຽດນາມ** | ການປະສານງານຫຼາຍຂະແໜງການ ລະດັບຊາດ ທີ່ໄດ້ຮັບການອະນຸມັດ ໃນການແກ້ໄຂຄວາມຮຸນແຮງໃນຄອບຄົວ ທີ່ກວມເອົາທັງ ຄວາມຮຸນແຮງຕໍ່ແມ່ຍິງ ແລະຄວາມຮຸນແຮງຕໍ່ເດັກ (ຄໍາຕັດສິນເລກທີ 21/2016/QD-TTg ຂອງລັດຖະບານ); ດໍາລັດເລກທີ 20/2021/ND-CP ໃນການໜູນຊ່ວຍຜູ້ໄດ້ຮັບຜົນປະໂຫຍດ ຈາກການປົກປ້ອງສັງຄົມໂດຍລັດຖະບານ.<br><br>ກົດໝາຍວ່າດ້ວຍເດັກນ້ອຍ, 102/2016/QH13, ໄດ້ກໍານົດລະບົບການປົກປ້ອງເດັກ 3 ລະດັບ ຢ່າງຈະແຈ້ງ ພ້ອມດ້ວຍການບໍລິການປ້ອງກັນ, ຊ່ວຍເຫຼືອ ແລະປົກປ້ອງ ຂັ້ນ 3 ສໍາລັບເດັກທຸກຄົນຢູ່ໃນຫວຽດນາມ.<br><br>ດໍາລັດ ເລກທີ 56/2017/ND-CP, ສ້າງລະບຽບການ ຂອງການຄຸ້ມຄອງກໍລະນີ ເພື່ອແກ້ໄຂກໍລະນີປົກປ້ອງເດັກ.<br><br>ກົດໝາຍວ່າດ້ວຍການປ້ອງກັນ ແລະຄວບຄຸມຄວາມຮຸນແຮງໃນຄອບຄົວ, ສະບັບເລກທີ 13/2022/QH15, ກໍານົດການບໍລິການປ້ອງກັນ, ຊ່ວຍເຫຼືອ ແລະປົກປ້ອງ ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ລວມທັງແມ່ຍິງ ແລະເດັກນ້ອຍ.<br><br>ກົດໝາຍວ່າດ້ວຍການປ້ອງກັນ ແລະຄວບຄຸມການຄ້າມະນຸດ, ເລກທີ: 66/2011/QH12, ກໍານົດການບໍລິການປ້ອງກັນ ແລະແກ້ໄຂການຄ້າມະນຸດ ລວມທັງແມ່ຍິງ ແລະ ເດັກນ້ອຍ. ກົດໝາຍຍັງກໍານົດໄວ້ຢ່າງຈະແຈ້ງ ກ່ຽວກັບວິທີຄົ້ນຄວ້າ ແລະ ຈັດການພຶດຕິກໍາຂອງການຄ້າມະນຸດ; ການຮັບ ແລະປົກປ້ອງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ; ສະໜອງການບໍລິການຊ່ວຍເຫຼືອ ແລະຟື້ນຟູຜູ້ຖືກເຄາະຮ້າຍ.<br><br>ຫວຽດນາມ ພວມຜັນຂະຫຍາຍ ກົດໝາຍວ່າດ້ວຍວຽກງານສັງຄົມສົງເຄາະ, ເຊິ່ງປະຈຸບັນພວມຢູ່ໃນໄລຍະສຸດທ້າຍຂອງການປັບປຸງ ກ່ອນຈະຍື່ນສະເໜີຕໍ່ສະພາແຫ່ງຊາດ, ກໍານົດບົດບາດ, ໜ້າທີ່ ຂອງພະນັກງານສັງຄົມສົງເຄາະ ໃນດ້ານສະຫວັດດີການ, ສາທາລະນະສຸກ, ສຶກສາ ແລະຍຸຕິທໍາ.<br><br>ຫວຽດນາມ ໄດ້ຜັນຂະຫຍາຍໂຄງການພັດທະນາວຽກງານສັງຄົມສົງເຄາະແຫ່ງຊາດ ໄລຍະປີ 2021 – 2030 ເພື່ອແນໃສ່ເພີ່ມທະວີຂອບກົດໝາຍ, ລະບົບບໍລິການວຽກງານສັງຄົມສົງເຄາະ ແລະພະນັກງານສັງຄົມສົງເຄາະ ເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ດ້ອຍໂອກາດ, ລວມທັງແມ່ຍິງ ແລະເດັກນ້ອຍ, ໃນດ້ານສະຫວັດດີການສັງຄົມ, ສາທາລະນະສຸກ, ສຶກສາ ແລະຍຸດຕິທໍາ.<br><br>ແຜນງານແຫ່ງຊາດ ວ່າດ້ວຍການປ້ອງກັນການແຕ່ງງານຂອງເດັກ ແລະຄວາມສໍາພັນສາຍເລືອດດຽວກັນ ປີ 2015-2025 ສະເໜີຈຸດປະສົງ ເພື່ອປັບປຸງຄວາມຮູ້ຂອງປະຊາຊົນບັນດາເຜົ່າ, ໂດຍສະເພາະແມ່ຍິງ ແລະ ໄວໜຸ່ມ, ກ່ຽວກັບການຫຼຸດຜ່ອນການແຕ່ງງານຂອງເດັກ ແລະຄວາມສໍາພັນສາຍເລືອດດຽວກັນ. ແຜນງານແຫ່ງຊາດຍັງເນັ້ນໜັກເຖິງ ການປະຕິບັດມາດຕະການເພື່ອປ້ອງກັນບັນຫາດັ່ງກ່າວ.<br><br>ກະຊວງສາທາລະນະສຸກໄດ້ອອກແຈ້ງການ ສະບັບເລກທີ 24/2017/TT-BYT ກ່ຽວກັບການຮັບ ແລະສະໜອງການປິ່ນປົວສຸຂະພາບ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວຢູ່ບັນດາໂຮງໝໍນ້ອຍຢູ່ຫວຽດນາມ. ແຈ້ງການສະບັບນີ້ ໄດ້ສະເໜີຂັ້ນຕອນໃນການຮັບ, ການປະເມີນຜົນ ແລະສະໜອງການປິ່ນປົວລວມທັງການເບິ່ງແຍງດ້ານຈິດຕະສັງຄົມໃຫ້ແກ່ຜູ້ຖືກເຄາະຮ້າຍເຊິ່ງລວມທັງແມ່ຍິງ ແລະເດັກນ້ອຍ. | ລະບຽບການລະຫວ່າງອົງການ ໃນການປ້ອງກັນ ແລະ ແກ້ໄຂບັນຫາການປົກປ້ອງເດັກ ທີ່ໄດ້ລົງນາມລະຫວ່າງກະຊວງແຮງງານ, ທະຫານເສຍອົງຄະ ແລະ ສັງຄົມ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງສາທາລະນະສຸກ, ກະຊວງການຝຶກອົບຮົມ ແລະການສຶກສາ ເພື່ອຊຸກຍູ້ການສະໜອງບໍລິການປົກປ້ອງເດັກ ແບບປະສານສົມທົບກັນ ຢູ່ຫວຽດນາມ.<br><br>ແຈ້ງການລະຫວ່າງອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ ແລະກະຊວງແຮງງານ, ທະຫານເສຍອົງຄະ ແລະສັງຄົມ ເພື່ອກໍານົດຄວາມຮັບຜິດຊອບຂອງແຕ່ລະຝ່າຍ ແລະລະບຽບປະຕິບັດໃນການດໍາເນີນຄະດີອາຍາ ສໍາລັບກໍລະນີລ່ວງລະເມີດທາງເພດເດັກ.<br><br>ດ້ວຍການສະໜັບສະໜູນຂອງ ອົງການ UNFPA, ສູນບໍລິການແບບປະຕູດຽວ ແມ່ນໄດ້ຮັບການຈັດຕັ້ງຂຶ້ນ ໂດຍບັນດາອົງການຂອງລັດຖະບານຫວຽດນາມ, ດັ່ງນັ້ນ ຈຶ່ງສອດຄ່ອງກັບ ຄໍາແນະນໍາກ່ຽວກັບ ຊຸດບໍລິການທີ່ຈໍາເປັນຂອງ ອົງການສະຫະປະຊາຊາດ, ການບໍລິການແບບປະສົມປະສານ, ລວມເຖິງການເບິ່ງແຍງສຸຂະພາບ ແລະຈິດໃຈ, ວຽກງານສັງຄົມສົງເຄາະ, ປ້ອງກັນຄວາມສະຫງົບ ແລະຄໍາແນະນໍາທາງດ້ານກົດໝາຍໃຫ້ແກ່ ແມ່ຍິງ ແລະເດັກຍິງ ທີ່ລອດຊີວິດຈາກຄວາມຮຸນແຮງ. | ກະຊວງແຮງງານ, ທະຫານເສຍອົງຄະ ແລະ ສັງຄົມໄດ້ອອກແຈ້ງການ, ສະບັບເລກທີ 26/2022/TT-BLĐTBXH, ເພື່ອກໍານົດໜ້າວຽກ, ມາດຕະຖານຄວາມສາມາດ ແລະລະດັບເງິນເດືອນຂອງພະນັກງານສັງຄົມສົງເຄາະ ເຊິ່ງແບ່ງອອກເປັນ 3 ລະດັບ i) ພະນັກງານສັງຄົມສົງເຄາະຫຼັກ, ii) ພະນັກງານສັງຄົມສົງເຄາະ; iii) ຜູ້ຊ່ວຍພະນັກງານສັງຄົມສົງເຄາະ.<br><br>ກະຊວງສາທາລະນະສຸກ ໄດ້ອອກແຈ້ງການ ສະບັບເລກທີ 03/2023 ວ່າດ້ວຍການກໍານົດຕໍາແໜ່ງພະນັກງານ ໃຫ້ແກ່ພະນັກງານສັງຄົມສົງເຄາະ ແລະອັດຕາສ່ວນພະນັກງານສັງຄົມສົງເຄາະ ຕໍ່ກັບພະນັກງານໃນສາຂາວິຊາຊີບອື່ນໆ ຢູ່ໃນສະຖານພະຍາບານ.<br><br>ແຈ້ງການອື່ນໆ ທີ່ຄຸ້ມຄອງການບໍລິການສັງຄົມສົງເຄາະ ຢູ່ໂຮງໝໍ ໂດຍກະຊວງສາທາລະນະສຸກ ປີ 2015: ແລະ ໃນໂຮງຮຽນ ໂດຍກະຊວງສຶກສາທິການ ແລະການຝຶກອົບຮົມ ປີ 2018.<br><br>ແຜນງານແຫ່ງຊາດ ວ່າດ້ວຍການປັບປຸງ ແລະພັດທະນາລະບົບວຽກງານສັງຄົມສົງເຄາະ ປີ 2017-2025, ໂດຍກໍານົດອັດຕາສ່ວນໂດຍໃຫ້ມີ ພະນັກງານສັງຄົມສົງເຄາະ ທີ່ມີຄວາມຊ່ຽວຊານ 1 ຄົນຕໍ່ 5.000 ຄົນ.<br><br>ຖະແຫຼງການຮ່າໂນ້ຍ ວ່າດ້ວຍການເພີ່ມທະວີວຽກງານສັງຄົມສົງເຄາະ ສູ່ການເປັນປະຊາຄົມອາຊຽນທີ່ສະໜິດແໜ້ນ ແລະຕອບສະໜອງໄດ້, ປີ 2020 ແລະແຜນ ປີ 2021.<br><br>ວຽກງານສັງຄົມສົງເຄາະ ໄດ້ຖືກຮັບຮູ້ວ່າເປັນສາຂາວິຊາ ໃນລະດັບປະລິນຍາຕີ ແລະວິທະຍາໄລ ໃນປີ 2004. ຈໍານວນຂອງສະຖາບັນການສຶກສາ ແລະການຝຶກອົບຮົມວຽກງານສັງຄົມສົງເຄາະໄດ້ເພີ່ມຂຶ້ນຈາກ 2 ແຫ່ງ (ໃນປີ 2004) ເປັນ 34 ແຫ່ງ ໃນປະຈຸບັນ (ເປີດສອນຫຼັກສູດປະລິນຍາໂທ 7 ແຫ່ງ, ແລະເປີດສອນຫຼັກສູດປະລິນຍາເອກ 2 ແຫ່ງ). ໃນແຕ່ລະປີ, ມີນັກສຶກສາ 2.000 ຄົນໄດ້ຮັບການຄັດເລືອກ ແລະ ພະນັກງານສັງຄົມສົງເຄາະຈໍານວນ 10.000 ຄົນ ໄດ້ຮັບການຝຶກອົບຮົມເພື່ອຍົກລະດັບ.<br><br>ມີການຈັດຕັ້ງລະບົບບໍລິການວຽກງານສັງຄົມສົງເຄາະ ໃນສູນການປົກປ້ອງທາງສັງຄົມ ສໍາລັບຜູ້ດ້ອຍໂອກາດຈໍານວນ 425 ແຫ່ງ; ໃນໂຮງໝໍສູນກາງ ແລະ ແຂວງ 100%; ໃນໂຮງໝໍເມືອງ 90%; ແລະ ໃນໂຮງຮຽນມັດທະຍົມຕອນຕົ້ນ ແລະມັດທະຍົມຕອນປາຍ ອັດຕາ 2/3 ແຫ່ງ ໃນຫວຽດນາມ.<br><br>ຫຼັກສູດທີ່ມີຢູ່ແລ້ວ ສໍາລັບພະນັກງານສັງຄົມສົງເຄາະ ໃນການສະຫນອງການບໍລິການຊ່ວຍເຫຼືອ ສໍາລັບຜູ້ໄດ້ຮັບຜົນປະໂຫຍດການປົກປ້ອງທາງສັງຄົມ ທີ່ກວມເອົາແມ່ຍິງ ແລະເດັກນ້ອຍທີ່ປະສົບກັບຄວາມຮຸນແຮງ. | ກະຊວງແຮງງານ, ທະຫານເສຍອົງຄະ ແລະສັງຄົມ ໄດ້ສ້າງຄູ່ມືການຝຶກອົບຮົມ ກ່ຽວກັບການຄຸ້ມຄອງກໍລະນີປົກປ້ອງເດັກ, ທາງເລືອກໃນການປິ່ນປົວສໍາລັບເດັກນ້ອຍ, ການຈັດຕັ້ງການເບິ່ງແຍງເດັກໃນສູນປົກປ້ອງທາງສັງຄົມ, ຄົນພິການ, ຜູ້ຕິດເຊື້ອເຮສໄອວີ/ເອດ. ນອກຈາກນີ້, ກະຊວງຍັງໄດ້ຈັດໃຫ້ມີການຝຶກອົບຮົມເພື່ອສະໜັບສະໜູນພະນັກງານສະຫວັດດີການ ແລະປົກປ້ອງເດັກ ໃຫ້ນໍາເອົາຄວາມຮູ້ ແລະທັກສະທີ່ໄດ້ຮັບການຝຶກອົບຮົມໄປປະຕິບັດ.<br><br>ອົງການ UNICEF ໄດ້ສະໜັບສະໜູນ ກະຊວງແຮງງານ, ທະຫານເສຍອົງຄະ ແລະສັງຄົມ ແລະມະຫາ ວິທະຍາໄລ ເພື່ອພັດທະນາຫຼັກສູດຝຶກອົບຮົມຍົກລະດັບ 20 ບົດຮຽນ, ກ່ຽວກັບວຽກງານສັງຄົມສົງເຄາະ ໃຫ້ກັບບັນດາພະນັກງານ ແລະພະນັກງານອາວຸໂສ ໃນຫ້ອງການສະຫວັດດີການ. ໃນບັນດາບົດຮຽນ, ປະກອບມີ ການເບິ່ງແຍງສຸຂະພາບຈິດສໍາລັບແມ່ຍິງ ແລະເດັກນ້ອຍ, ວຽກງານສັງຄົມສົງເຄາະ ກັບການປ້ອງກັນຄວາມຮຸນແຮງໃນຄອບຄົວ, ແລະການຄຸ້ມຄອງກໍລະນີສໍາລັບຜູ້ມີຄວາມສ່ຽງ ໂດຍສຸມໃສ່ເດັກນ້ອຍ ແລະແມ່ຍິງ.<br><br>ອົງການ UNICEF ໄດ້ສະໜັບສະໜູນມະຫາ ວິທະຍາໄລຮ່າໂນ້ຍ, ມະຫາວິທະຍາໄລ ດ້ານແຮງງານ ແລະສັງຄົມ, ມະຫາວິທະຍາໄລສັງຄົມ, ມະຫາ ວິທະຍາໄລສັງຄົມ ແລະມະນຸດສະທໍາ ແລະອື່ນໆ ເພື່ອພັດທະນາຫຼັກສູດສິດທິເດັກ.<br><br>ແລະການປົກປ້ອງເດັກ ທີ່ຈະເຊື່ອມສານເຂົ້າໃນຫຼັກສູດປະລິນຍາຕີດ້ານວຽກງານສັງຄົມສົງເຄາະ. ຫຼັກສູດທີ່ມີຢູ່ແລ້ວສໍາລັບພະນັກງານສັງຄົມສົງເຄາະ ໃນການສະຫນອງການບໍລິການຊ່ວຍເຫຼືອ ສໍາລັບຜູ້ໄດ້ຮັບຜົນປະໂຫຍດ ການປົກປ້ອງທາງສັງຄົມ ທີ່ກວມເອົາແມ່ຍິງ ແລະເດັກນ້ອຍທີ່ປະສົບກັບຄວາມຮຸນແຮງ. |

**UN Women ໄດ້ສ້າງຊຸດຝຶກອົບຮົມອອນລາຍ ກ່ຽວກັບຫົວຂໍ້ທີ່ກ່ຽວຂ້ອງ:**
https://portal.trainingcentre.unwomen.org

- ຂ້ອຍຮູ້ຈັກບົດບາດຍິງ-ຊາຍ 6: ຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກຍິງ.
- ເບິ່ງຈາກພາຍໃນ: ເຂົ້າໃຈຄວາມເປັນຊາຍ ແລະຄວາມຮຸນແຮງຕໍ່ແມ່ຍິງ ແລະເດັກຍິງ.
- ເຂົ້າໃຈກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ.

## ASEAN: A COMMUNITY OF OPPORTUNITIES FOR ALL

Follow Us

Privacy Policy | Disclaimer